ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ ເລກທີ 08 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 24 ທັນວາ 2007

# ກົດໝາຍ
# ວ່າດ້ວຍ ຊັບສິນທາງປັນຍາ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສົ່ງເສີມ ຫົວຄິດປະດິດສ້າງ, ການປະດິດຄິດແຕ່ງ, ເສດຖະກິດພູມປັນຍາ, ການຄຸ້ມຄອງ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ ເພື່ອຮັບປະກັນຜົນປະໂຫຍດ ຂອງເຈົ້າຂອງຊັບສິນທາງປັນຍາ ແລະ ຜົນປະໂຫຍດຂອງສັງຄົມ, ຊຸກຍູ້ການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ການຖ່າຍທອດເຕັກໂນໂລຊີ ຢູ່ພາຍໃນ ແລະ ຈາກຕ່າງປະເທດ, ສົ່ງເສີມການຄ້າ, ການລົງທຶນ ແລະ ຄວາມອາດສາມາດແຂ່ງຂັນ ໃຫ້ແກ່ເສດຖະກິດແຫ່ງຊາດ ໃນຍຸກໂລກາພິວັດຢ່າງມີປະສິດທິພາບ ແນໃສ່ ປະກອບສ່ວນເຂົ້າໃນການຫັນປະເທດເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ.

**ມາດຕາ 2. ຊັບສິນທາງປັນຍາ**

ຊັບສິນທາງປັນຍາ ແມ່ນ ຜົນງານທີ່ໄດ້ມາຈາກສະຕິປັນຍາຂອງມະນຸດ ຊຶ່ງເປັນຜູ້ປະດິດສ້າງ ແລະ ປະດິດຄິດແຕ່ງຂຶ້ນມາ ໂດຍມີຄຸນຄ່າ ແລະ ຜົນປະໂຫດທາງດ້ານເສດຖະກິດ ໃນການພັດທະນາສັງຄົມ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້ :

1. **ສິດທາງດ້ານຊັບສິນທາງປັນຍາ ໝາຍເຖິງ** ສິດຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຊັບສິນທາງປັນຍາ;
2. **ຊັບສິນອຸດສາຫະກໍາ ໝາຍເຖິງ** ຜົນງານ ທີ່ໄດ້ມາຈາກສະຕິປັນຍາຂອງມະນຸດ ຊຶ່ງເປັນຜູ້ປະດິດສ້າງຂຶ້ນມາ ເພື່ອນໍາໃຊ້ເຂົ້າໃນຂົງເຂດ ອຸດສາຫະກໍາ, ຫັດຖະກໍາ, ກະສິກໍາ, ການປະໂມງ, ການຄ້າ, ການບໍລິການ;
3. **ສິດທາງດ້ານຊັບສິນອຸດສາຫະກໍາ ໝາຍເຖິງ** ສິດຂອງບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກໍາ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ, ແຫຼ່ງກໍາເນີດ ແລະ ຄວາມລັບທາງການຄ້າ;
4. **ສິດທິບັດ ໝາຍເຖິງ** ເອກະສານຢັ້ງຢືນທີ່ເປັນທາງການ ຈາກການຈັດຕັ້ງລັດ ເພື່ອປົກປ້ອງການປະດິດສ້າງ;
5. **ການປະດິດສ້າງ ໝາຍເຖິງ** ການນໍາໃຊ້ວິທີການທາງດ້ານເຕັກນິກ ເພື່ອສ້າງຜະລິດຕະພັນ ຫຼື ກໍາມະວິທີການຜະລິດໃໝ່ ໃນການແກ້ໄຂບັນຫາສະເພາະໃດໜຶ່ງ;
6. **ອະນຸສິດທິບັດ ໝາຍເຖິງ** ເອກະສານຢັ້ງຢືນທີ່ເປັນທາງການ ຈາກການຈັດຕັ້ງລັດ ເພື່ອປົກປ້ອງສິ່ງປະດິດ;
7. **ສິ່ງປະດິດ ໝາຍເຖິງ** ຜົນງານການປະດິດໃໝ່ ທີ່ໄດ້ຈາກການປັບປຸງທາງດ້ານເຕັກນິກ ດ້ວຍການນໍາໃຊ້ເຕັກນິກ ທີ່ບໍ່ສູງຄືການປະດິດສ້າງ;
8. **ແບບອຸດສາຫະກໍາ ໝາຍເຖິງ** ຮູບແບບ ຫຼື ຮູບຮ່າງ ຂອງຜະລິດຕະພັນ ທີ່ຈະສ້າງຂຶ້ນ ຊຶ່ງປະກອບດ້ວຍ ຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ແລະ ອື່ນໆ;
9. **ເຄື່ອງໝາຍ ໝາຍເຖິງ** ສັນຍາລັກໃດໜຶ່ງ ຊຶ່ງອາດຈະແມ່ນ ຮູບພາບ, ຄໍາສັບ, ຕົວໜັງສື, ຕົວເລກ, ລາຍເຊັນ, ຊື່ບຸກຄົນ, ສີ, ຮູບຮ່າງ ຫຼື ຮູບຊົງຕ່າງໆ ຂອງວັດຖຸ ຫຼື ສິ່ງທີ່ກ່າວມາຢ່າງໃດຢ່າງໜຶ່ງ ຫຼື ຫຼາຍຢ່າງລວມກັນ ແລະ ອື່ນໆ ເພື່ອໃຊ້ ຫຼື ຈະໃຊ້ເປັນເຄື່ອງໝາຍການຄ້າ;
10. **ເຄື່ອງໝາຍການຄ້າ ໝາຍເຖິງ** ເຄື່ອງໝາຍ ທີ່ໄດ້ກໍານົດໄວ້ໃນ ຂໍ້ 9 ຂອງມາດຕານີ້ ເພື່ອ ນໍາໃຊ້ກັບສິນຄ້າ ແລະ ການບໍລິການ ທັງເປັນການຈໍາແນກລະຫວ່າງສິນຄ້າ, ການບໍລິການນີ້ ກັບ ສິນຄ້າ ແລະ ການບໍລິການອື່ນ;
11. **ເຄື່ອງໝາຍລວມໝູ່ ໝາຍເຖິງ** ເຄື່ອງໝາຍການຄ້າ ທີ່ນໍາໃຊ້ຮ່ວມກັນໂດຍວິສາຫະກິດ ໃນກຸ່ມດຽວກັນ ຫຼື ໂດຍສະມາຊິກ ຂອງສະມາຄົມ, ສະຫະກອນ, ອົງການຈັດຕັ້ງໃດໜຶ່ງຂອງລັດ ຫຼື ເອກະຊົນ ຫຼື ກຸ່ມບຸກຄົນ;
12. **ເຄື່ອງໝາຍຮັບຮອງ ໝາຍເຖິງ** ເຄື່ອງໝາຍການຄ້າ ທີ່ເຈົ້າຂອງໄດ້ອະນຸຍາດໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນ ນໍາໃຊ້ກັບສິນຄ້າ ຫຼື ການບໍລິການ ຂອງບຸກຄົນ ຫຼື ການຈັດຕັ້ງ ນັ້ນ ເພື່ອຢັ້ງຢືນເຖິງຄຸນລັກສະນະ ທີ່ພົວພັນເຖິງແຫຼ່ງທີ່ມາ, ວັດຖຸດິບ ແລະ ວິທີການຜະລິດສິນຄ້າ ຫຼື ວິທີການໃຫ້ການບໍລິການ, ຊະນິດ, ຄຸນນະພາບ, ຄວາມປອດໄພ ຫຼື ຄຸນລັກສະນະອື່ນ ຂອງສິນຄ້າ ຫຼື ການບໍລິການ;

13. **ເຄື່ອງໝາຍທີ່ມີຊື່ສຽງ ໝາຍເຖິງ** ເຄື່ອງໝາຍການຄ້າ ທີ່ຮັບຮູ້ກັນໂດຍທົ່ວໄປຢ່າງກວ້າງຂວາງ ຢູ່ ໃນດິນແດນຂອງ ສປປ ລາວ, ຢູ່ປະເທດໃດໜຶ່ງ, ພາກພື້ນ ແລະ ໃນໂລກ;
14. **ຊື່ການຄ້າ ໝາຍເຖິງ** ຊື່ຂອງວິສາຫະກິດ ທີ່ໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດ ເພື່ອຈຳແນກລະຫວ່າງວິສາຫະກິດນີ້ ກັບວິສາຫະກິດອື່ນ ໃນຂົງເຂດທຸລະກິດດຽວກັນ;
15. **ວົງຈອນລວມ ໝາຍເຖິງ** ຜະລິດຕະພັນ ສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ທີ່ທຳໜ້າທີ່ທາງດ້ານເອເລັກໂຕຣນິກ ຊຶ່ງປະກອບດ້ວຍສິ້ນສ່ວນຕ່າງໆ ທີ່ສາມາດກະຕຸ້ນໃຫ້ເກີດປະຕິກິລິຍາ ທາງດ້ານເອເລັກໂຕຣນິກ;
16. **ແບບຜັງວົງຈອນລວມ ໝາຍເຖິງ** ແບບແຜນຜັງ ຫຼື ພາບ ທີ່ເຮັດຂຶ້ນໃນຮູບແບບໃດໜຶ່ງ ຊຶ່ງປະກອບດ້ວຍວົງຈອນລວມຕ່າງໆ ທີ່ເຊື່ອມຕໍ່ເຂົ້າກັນເປັນແບບຜັງວົງຈອນລວມ;
17. **ແຫຼ່ງກຳເນີດ ໝາຍເຖິງ** ສັນຍາລັກ ໃຊ້ເພື່ອບົ່ງບອກໃຫ້ເຫັນເຖິງແຫຼ່ງທີ່ມາ, ປະເທດ, ເຂດ, ທ້ອງຖິ່ນ ຫຼື ພື້ນທີ່ສະເພາະ ຂອງຜະລິດຕະພັນໃດໜຶ່ງ ຊຶ່ງພາໃຫ້ຜະລິດຕະພັນນັ້ນ ມີຄຸນນະພາບ ແລະ ມີຊື່ສຽງ;
18. **ຄວາມລັບທາງການຄ້າ ໝາຍເຖິງ** ຂໍ້ມູນການຄ້າ ທີ່ຍັງບໍ່ຮູ້ຈັກ ຫຼື ຍັງບໍ່ທັນນຳໃຊ້ກັນໂດຍທົ່ວໄປ ເຊັ່ນ: ສູດ, ກຳມະວິທີການຜະລິດ ຫຼື ຂໍ້ມູນໃດໜຶ່ງ ທີ່ສາມາດນຳມາໃຊ້ເຂົ້າໃນການດຳເນີນທຸລະກິດ ເຮັດໃຫ້ຜູ້ເປັນເຈົ້າຂອງໄດ້ປຽບຄູ່ແຂ່ງຂັນ;
19. **ພັນພືດ ໝາຍເຖິງ** ກຸ່ມຂອງພືດ ທີ່ມີພັນທຸກຳ ແລະ ລັກສະນະທາງພຶກສາຊາດເໝືອນກັນ ຫຼື ຄ້າຍຄືກັນ ມີລັກສະນະສະເພາະຕົວ ແຕກຕ່າງຈາກກຸ່ມອື່ນ ໃນພືດຊະນິດດຽວກັນ, ມີຄວາມສະໝ່ຳສະເໝີ ແລະ ມີຄວາມຄົງຕົວ ໃນເວລາຂະຫຍາຍພັນ;
20. **ພັນພືດໃໝ່ ໝາຍເຖິງ** ການປັບປຸງ ຫຼື ພັດທະນາພັນພືດ ດ້ວຍການໃຊ້ວິທີທາງວິສາວະພັນທຸກຳ ຫຼື ໃຊ້ວິທີການເຕັກໂນໂລຊີຊີວະພາບ ທີ່ເຮັດໃຫ້ເກີດພືດພັນໃໝ່ໆຂຶ້ນມາ ຊຶ່ງບໍ່ເຄີຍມີຢູ່ໃນທຳມະຊາດ;
21. **ພັນພືດພື້ນເມືອງທົ່ວໄປ ແລະ ພັນພືດປ່າ ໝາຍເຖິງ** ພັນພືດພື້ນເມືອງ ທີ່ມີລັກສະນະສະເພາະ ແລະ ມີຄຸນປະໂຫຍດໃນການນຳໃຊ້ ຊຶ່ງເກີດຂຶ້ນຢູ່ຫຼາຍທ້ອງຖິ່ນ ພາຍໃນປະເທດ ຫຼື ມີຢູ່ໃນປ່າ;
22. **ພັນພືດທ້ອງຖິ່ນ ໝາຍເຖິງ** ພັນພືດ ທີ່ມີລັກສະນະສະເພາະ ແລະ ມີຄຸນປະໂຫຍດໃນການນຳໃຊ້ ທີ່ມີຢູ່ສະເພາະໃນທ້ອງຖິ່ນໃດໜຶ່ງ ຢູ່ພາຍໃນປະເທດ;
23. **ສິດຕໍ່ພັນພືດໃໝ່ ໝາຍເຖິງ** ສິດຂອງບຸກຄົນ ຫຼື ການຈັດຕັ້ງ ຕໍ່ພັນພືດ ທີ່ໄດ້ຖືກປັບປຸງ ຫຼື ຖືກຄົ້ນພົບ, ພັດທະນາຂຶ້ນ ດ້ວຍວິສາວະພັນທຸກຳ ຫຼື ເຕັກໂນໂລຊີຊີວະພາບ;
24. **ສິດຕໍ່ພັນພືດທ້ອງຖິ່ນ ໝາຍເຖິງ** ສິດຂອງຊຸມຊົນ ທີ່ມີຖິ່ນຖານສືບທອດກັນມາຕໍ່ເນື່ອງ ໃນທ້ອງຖິ່ນໃດໜຶ່ງ ທີ່ໄດ້ຮ່ວມກັນອະນຸລັກຮັກສາ ຫຼື ພັດທະນາພັນພືດ ທີ່ເກີດໃນທ້ອງຖິ່ນນັ້ນ;

25. **ລິຂະສິດ ໝາຍເຖິງ** ຜົນງານ ທີ່ໄດ້ມາຈາກສະຕິປັນຍາຂອງມະນຸດ ເປັນຜູ້ປະດິດຄິດແຕ່ງຂຶ້ນມາ ທາງດ້ານວັນນະກໍາ ສິລະປະກໍາ ແລະ ວັນນະກໍາ ລວມທັງ ວຽກງານວິທະຍາສາດ;

26. **ສິດກ່ຽວຂ້ອງກັບລິຂະສິດ ໝາຍເຖິງ** ສິດຂອງບຸກຄົນ ຫຼື ການຈັດຕັ້ງ ທີ່ກ່ຽວຂ້ອງກັບລິຂະສິດ ໃນຂົງເຂດການສະແດງ, ການບັນທຶກສຽງ-ພາບ ແລະ ລາຍການກະຈາຍສຽງ-ພາບ ຫຼື ລາຍການ ຜ່ານສັນຍານດາວທຽມ ທີ່ເຂົ້າລະຫັດ;

27. **ຜົນງານ ໝາຍເຖິງ** ຜົນຂອງການປະດິດຄິດແຕ່ງ ຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງໃນຂົງເຂດ ສິລະປະກໍາ, ວັນນະກໍາ ແລະ ວິທະຍາສາດ ຊຶ່ງສະແດງອອກດ້ວຍຮູບແບບ ຫຼື ວິທີການ ໃດໜຶ່ງ;

28. **ຜົນງານທີ່ສືບເນື່ອງ ໝາຍເຖິງ** ຜົນງານທີ່ໄດ້ແປມາຈາກພາສາໃດໜຶ່ງເປັນພາສາລາວ ຫຼື ພາສາອື່ນ ຫຼື ຈາກພາສາລາວ ເປັນພາສາອື່ນ, ຖືກປັບປຸງ, ດັດແກ້, ປ່ຽນຮູບ, ລວບລວມ, ໃຫ້ຄວາມໝາຍ, ໃຫ້ຄໍາອະທິບາຍ, ຜົນງານທີ່ໄດ້ຄັດເລືອກ ຫຼື ເລືອກເຟັ້ນມາ;

29. **ຜົນງານທີ່ໄດ້ຖືກພິມເຜີຍແຜ່, ບັນທຶກສຽງ-ພາບ ໝາຍເຖິງ** ຜົນງານ ຫຼື ການບັນທຶກສຽງ-ພາບ ທີ່ໄດ້ນໍາອອກສູ່ສາທາລະນະຊົນ ດ້ວຍຈໍານວນອັດສໍາເນົາທີ່ເໝາະສົມ ຕາມຄວາມເຫັນດີ ຈາກເຈົ້າຂອງລິຂະສິດ ຫຼື ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ;

30. **ການຜະລິດຊໍ້າ ໝາຍເຖິງ** ການອັດສໍາເນົາ ຜົນງານ ຫຼື ການບັນທຶກສຽງ-ພາບ ໃນຈໍານວນໜຶ່ງ ຫຼື ຫຼາຍສະບັບ ດ້ວຍວິທີການໃດໜຶ່ງ ລວມທັງ ການເກັບຮັກສາຂໍ້ມູນຂອງ ຜົນງານດັ່ງກ່າວ ແບບຖາວອນ ຫຼື ຊົ່ວຄາວ;

31. **ການກະຈາຍສຽງ-ພາບ ໝາຍເຖິງ** ການນໍາເອົາຜົນງານ ອອກສູ່ສາທາລະນະຊົນທາງວິທະຍຸ ກະຈາຍສຽງ ຫຼື ໂທລະພາບ ຫຼື ດ້ວຍວິທີການອື່ນທີ່ຄ້າຍຄືກັນເຊັ່ນ: ອິນເຕີເນັດ ຫຼື ສົ່ງຜ່ານ ສັນຍານດາວທຽມ ເປັນຕົ້ນ;

32. **ສິລະປະກໍາ ແລະ ວັນນະກໍາ ພື້ນເມືອງ ໝາຍເຖິງ** ຜົນຜະລິດຂອງການທ້ອນໂຮມການປະດິດຄິດແຕ່ງຂຶ້ນ ຕາມປະເພນີຂອງຊຸມຊົນ ຫຼື ຂອງກຸ່ມຄົນ ທີ່ສະທ້ອນໃຫ້ເຫັນເຖິງວິຖີຊີວິດ ການເປັນຢູ່ຂອງຊຸມຊົນເຫຼົ່ານັ້ນ;

33. **ສິລະປະປັບໃຊ້ ໝາຍເຖິງ** ສິລະປະທີ່ໄດ້ມີການປັບປຸງ ເພື່ອນໍາໃຊ້ເຂົ້າໃນເປົ້າໝາຍອື່ນ;

34. **ໃບຢັ້ງຢືນການຈົດທະບຽນ ໝາຍເຖິງ** ໃບຢັ້ງຢືນຂອງອົງການຈັດຕັ້ງລັດທີ່ອອກໃຫ້ແກ່ບຸກຄົນ ແລະ ການຈັດຕັ້ງ ເພື່ອຢັ້ງຢືນການເປັນເຈົ້າຂອງຊັບສິນອຸດສາຫະກໍາ ທີ່ກ່ຽວ ຂ້ອງກັບການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກໍາ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ, ແຫຼ່ງກໍາເນີດ ແລະ ພັນພືດ;

35. **ວັນບຸລິມະສິດ ໝາຍເຖິງ** ວັນຍື່ນຄໍາຮ້ອງຂໍຈົດທະບຽນຄັ້ງທໍາອິດ ຢູ່ຕ່າງປະເທດ ກ່ອນວັນມາຍື່ນຂໍຈົດທະບຽນ ຢູ່ ສປປ ລາວ;

36. **ການນຳໃຊ້ ໝາຍເຖິງ** ການຜະລິດ, ການສະເໜີຂາຍ, ການໂຄສະນາ, ການເກັບມ້ຽນເພື່ອຂາຍ, ການຂາຍ, ການຈຳໜ່າຍ, ການຈໍລະຈອນແຈກຢາຍ, ການນຳເຂົ້າ ແລະ ການສົ່ງອອກ.

### ມາດຕາ 4. ນະໂຍບາຍຂອງລັດ ກ່ຽວກັບຊັບສິນທາງປັນຍາ

ລັດ ສົ່ງເສີມ ການເພີ່ມພູນຄູນສ້າງ, ການເຄື່ອນໄຫວວຽກງານຊັບສິນທາງປັນຍາ ແລະ ການນຳໃຊ້ໝາກຜົນ ຂອງການປະດິດສ້າງ, ການປະດິດຄິດແຕ່ງ ຂອງບຸກຄົນ ຫຼື ການຈັດຕັ້ງ ພ້ອມທັງ ຮັບຮູ້ ແລະ ປົກປ້ອງ ສິດ ຜົນປະໂຫຍດ ຂອງເຈົ້າຂອງຊັບສິນທາງປັນຍາ.

ລັດ ຊຸກຍູ້ ການເຄື່ອນໄຫວວຽກງານ ແລະ ການລົງທຶນ ເຂົ້າໃນຂົງເຂດຊັບສິນທາງປັນຍາ ດ້ວຍການວາງນະໂຍບາຍ, ລະບຽບກົດໝາຍ ແລະ ມາດຕະການຕ່າງໆ ເພື່ອຮອງຮັບ.

ລັດ ປົກປ້ອງຊັບສິນທາງປັນຍາ ທີ່ບໍ່ຂັດກັບວຽກງານປ້ອງກັນຊາດ ປ້ອງກັນຄວາມສະຫງົບ, ສຸຂານາໄມ, ສິ່ງແວດລ້ອມ, ລະບຽບກົດໝາຍ, ວັດທະນະທຳ ຫຼື ຮີດຄອງປະເພນີອັນດີງາມຂອງຊາດ.

### ມາດຕາ 5. ຫຼັກການລວມ ກ່ຽວກັບຊັບສິນທາງປັນຍາ

ຫຼັກການລວມ ກ່ຽວກັບຊັບສິນທາງປັນຍາ ມີດັ່ງນີ້:

1. ການຮັບຮູ້, ປົກປ້ອງ ແລະ ຮັບປະກັນຄວາມຍຸຕິທຳ ຕໍ່ເຈົ້າຂອງຊັບສິນທາງປັນຍາ;
2. ການປົກປ້ອງຊັບສິນອຸດສາຫະກຳ ຢູ່ ສປປ ລາວ ຈະມີຜົນບັງຄັບໃຊ້ ກໍຕໍ່ເມື່ອເຈົ້າຂອງຊັບສິນອຸດສາຫະກຳ ໄດ້ຮັບການຈົດທະບຽນ;
3. ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ໄດ້ຮັບການປົກປ້ອງໂດຍທັນທີ ພາຍຫຼັງທີ່ໄດ້ມີການປະດິດຄິດແຕ່ງຜົນງານ ທາງດ້ານສິລະປະກຳ ແລະ ວັນນະກຳ ລວມທັງຜົນງານທາງດ້ານວິທະຍາສາດນັ້ນຂຶ້ນ;
4. ທຸກການນຳໃຊ້ຊັບສິນທາງປັນຍາ ເພື່ອຫາຜົນປະໂຫຍດທາງການຄ້າ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງສິດ;
5. ໃນກໍລະນີ ທີ່ການກຳນົດຂອງສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຫຼື ສັນຍາທີ່ ໄດ້ຮ່ວມເຊັນນຳກັນ ຫາກຂັດກັບການກຳນົດຂອງກົດໝາຍສະບັບນີ້ ແມ່ນໃຫ້ປະຕິບັດຕາມການກຳນົດ ຂອງສົນທິສັນຍາສາກົນ ຫຼື ສັນຍາ ນັ້ນ.

### ມາດຕາ 6. ຂອບເຂດການນຳໃຊ້ກົດໝາຍວ່າດ້ວຍຊັບສິນທາງປັນຍາ

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບວຽກງານຊັບສິນທາງປັນຍາ ພາຍໃຕ້ກົດໝາຍສະບັບນີ້ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.

**ມາດຕາ 7. ການຮ່ວມມືສາກົນ**

ລັດ ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບສາກົນ ກ່ຽວກັບວຽກງານຊັບສິນທາງປັນຍາ ບົນພື້ນຖານການເຄົາລົບເອກະລາດ, ອະທິປະໄຕ ຊຶ່ງກັນແລະກັນ, ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ເພື່ອພັດທະນາ ແລະ ຄຸ້ມຄອງ ວຽກງານຊັບສິນທາງປັນຍາ, ແລກປ່ຽນບົດຮຽນ ທາງດ້ານວິຊາການ, ດ້ານເຕັກໂນໂລຊີ, ການແລກປ່ຽນຂໍ້ມູນຂ່າວສານ, ການບຳລຸງຍົກລະດັບບຸກຄະລາກອນ, ການເຂົ້າຮ່ວມ ແລະ ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຊັບສິນທາງປັນຍາ

**ມາດຕາ 8. ໂຄງປະກອບ ຂອງຊັບສິນທາງປັນຍາ**

ຊັບສິນທາງປັນຍາ ປະກອບດ້ວຍ :

1. ຊັບສິນອຸດສາຫະກຳ;
2. ພັນພືດ;
3. ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

**ມາດຕາ 9. ຊັບສິນອຸດສາຫະກຳ**

ຊັບສິນອຸດສາຫະກຳ ປະກອບດ້ວຍ:

1. ສິດທິບັດ;
2. ອະນຸສິດທິບັດ;
3. ແບບອຸດສາຫະກຳ ;
4. ເຄື່ອງໝາຍການຄ້າ ;
5. ແບບຜັງຂອງວົງຈອນລວມ;
6. ແຫຼ່ງກຳເນີດ;
7. ຄວາມລັບທາງການຄ້າ.

**ມາດຕາ 10. ພັນພືດ**

ພັນພືດ ປະກອບດ້ວຍ:

1. ພັນພືດພື້ນເມືອງທົ່ວໄປ ແລະ ພັນພືດປ່າ;
2. ພັນພືດທ້ອງຖິ່ນ;
3. ພັນພືດໃໝ່.

**ມາດຕາ 11. ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ປະກອບດ້ວຍ:

1. ລິຂະສິດ ຕໍ່ຜົນງານທາງດ້ານສິລະປະກຳ, ວັນນະກຳ ແລະ ວິທະຍາສາດ ລວມທັງໂປຣແກຣມຄອມພິວເຕີ;
2. ສິດກ່ຽວຂ້ອງກັບລິຂະສິດ ຕໍ່ຜົນງານ ຂອງຜູ້ສະແດງ, ຜູ້ຜະລິດ ການບັນທຶກສຽງ-ພາບ ແລະ ອົງການກະຈາຍສຽງ-ພາບ.

## ພາກທີ III
## ຊັບສິນອຸດສາຫະກຳ

### ໝວດທີ 1
### ເງື່ອນໄຂ ຂອງຊັບສິນອຸດສາຫະກຳ

**ມາດຕາ 12. ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນຈົດທະບຽນຊັບສິນອຸດສາຫະກຳ**

ກ່ອນຈະໄດ້ຮັບໃບຢັ້ງຢືນຈົດທະບຽນຊັບສິນອຸດສາຫະກຳ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 13, 14, 15, 16, 17, 18, 19 ແລະ 20 ຂອງກົດໝາຍສະບັບນີ້.

**ມາດຕາ 13 ເງື່ອນໄຂ ທີ່ຈະໄດ້ຮັບສິດທິບັດ**

**ການປະດິດສ້າງ ທີ່ຈະໄດ້ຮັບສິດທິບັດ ມີເງື່ອນໄຂ ດັ່ງນີ້:**

1. ຕ້ອງແມ່ນການປະດິດສ້າງໃໝ່ ໝາຍຄວາມວ່າ ການປະດິດສ້າງນັ້ນ ບໍ່ເຄີຍມີມາກ່ອນ, ບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນ ດ້ວຍວາລະສານ ຫຼື ດ້ວຍການນຳໃຊ້ຕົວຈິງ ຫຼື ດ້ວຍຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄຳຮ້ອງຂໍຈົດທະບຽນ ຫຼື ກ່ອນວັນບຸລິມະສິດ ຂອງຄຳຮ້ອງຂໍຈົດທະບຽນການປະດິດສ້າງ;
2. ມີຂັ້ນຕອນການປະດິດສ້າງ ໝາຍຄວາມວ່າ ການປະດິດສ້າງນັ້ນ ມີການພົວພັນເຖິງການປະດິດສ້າງທີ່ເຄີຍມີມາກ່ອນ ຊຶ່ງບຸກຄົນມີຄວາມຮູ້ດ້ານນັ້ນ ເຂົ້າໃຈໄດ້ຢ່າງຈະແຈ້ງ;
3. ສາມາດນຳໃຊ້ເຂົ້າສູ່ການຜະລິດໄດ້ ໝາຍຄວາມວ່າ ການປະດິດສ້າງນັ້ນ ສາມາດນຳໄປໝູນໃຊ້ໃຫ້ເກີດຜົນປະໂຫຍດໃນການຜະລິດ ອຸດສາຫະກຳ, ຫັດຖະກຳ, ກະສິກຳ, ການປະມົງ, ການບໍລິການ ແລະ ອື່ນໆ.

**ມາດຕາ 14. ເງື່ອນໄຂ ທີ່ຈະໄດ້ຮັບອະນຸສິດທິບັດ**

ສິ່ງປະດິດ ທີ່ຈະໄດ້ຮັບອະນຸສິດທິບັດ ແມ່ນ ຄ້າຍຄືກັນກັບ ເງື່ອນໄຂທີ່ຈະໄດ້ຮັບສິດທິບັດ ແຕ່ມີລະດັບເຕັກນິກຕ່ຳກວ່າການປະດິດສ້າງ.

### ມາດຕາ 15. ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນແບບອຸດສາຫະກຳ

ແບບອຸດສາຫະກຳ ທີ່ຈະໄດ້ຮັບໃບຢັ້ງຢືນ ມີເງື່ອນໄຂຢູ່ບ່ອນວ່າ ແບບອຸດສາຫະກຳນັ້ນ ແມ່ນສິ່ງໃໝ່. ແບບອຸດສາຫະກຳໃດໜຶ່ງຖືວ່າໃໝ່ ຖ້າຫາກແບບອຸດສາຫະກຳນັ້ນ ບໍ່ເຄີຍຖືກເປີດເຜີຍສູ່ສາທາລະນະຊົນມາກ່ອນ ດ້ວຍວາລະສານ ຫຼື ດ້ວຍການນຳໃຊ້ຕົວຈິງ ຫຼື ດ້ວຍການວາງສະແດງ ຫຼື ດ້ວຍຮູບການອື່ນ ຢູ່ ສປປ ລາວ ຫຼື ແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄຳຮ້ອງ ຫຼື ກ່ອນວັນບຸລິມະສິດ ຂອງຄຳຮ້ອງຂໍຈົດທະບຽນ.

### ມາດຕາ 16. ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນເຄື່ອງໝາຍການຄ້າ

ເຄື່ອງໝາຍການຄ້າ ທີ່ຈະໄດ້ຮັບໃບຢັ້ງຢືນ ມີເງື່ອນໄຂ ດັ່ງນີ້:

1. ເປັນເຄື່ອງໝາຍ ທີ່ມີລັກສະນະຈະແຈ້ງ ຊຶ່ງສາມາດເຫັນໄດ້ດ້ວຍຕາເປົ່າ ອາດເປັນຮູບແບບຕົວໜັງສື, ຄຳສັບ, ຕົວເລກ, ຮູບພາບ, ຮູບແຕ້ມ, ຮູບຖ່າຍ, ຊື່ບຸກຄົນ, ລາຍເຊັນ, ຮູບຊົງລວມທັງ ຮູບສາມມິຕິ, ກຸ່ມຂອງສີ ຫຼື ການປະກອບເຂົ້າກັນ ຂອງບັນດາສິ່ງຕ່າງໆ ທີ່ກ່າວມານັ້ນ ຢ່າງໃດຢ່າງໜຶ່ງ ຫຼື ຫຼາຍຢ່າງລວມກັນ;
2. ເປັນເຄື່ອງໝາຍ ທີ່ບໍ່ມີລັກສະນະຕ້ອງຫ້າມ ຕາມມາດຕາ 23 ຂອງກົດໝາຍສະບັບນີ້;
3. ບໍ່ເປັນເຄື່ອງໝາຍ ທີ່ຄືກັນ ຫຼື ຄ້າຍຄືກັນກັບເຄື່ອງໝາຍການຄ້າ ທີ່ບຸກຄົນອື່ນໄດ້ຈົດທະບຽນໄວ້ກ່ອນແລ້ວ.

### ມາດຕາ 17. ເງື່ອນໄຂ ຂອງເຄື່ອງໝາຍການຄ້າທີ່ມີຊື່ສຽງ

ເຄື່ອງໝາຍການຄ້າໃດໜຶ່ງ ຈະຖືວ່າມີຊື່ສຽງ ມີເງື່ອນໄຂ ດັ່ງນີ້:

1. ຜູ້ຊົມໃຊ້ ທີ່ໄດ້ຮັບຮູ້ເຖິງເຄື່ອງໝາຍ ໂດຍຜ່ານການຊື້ຂາຍ, ການນຳໃຊ້ຜະລິດຕະພັນ, ສິນຄ້າ, ການບໍລິການ ທີ່ມີເຄື່ອງໝາຍການຄ້າດັ່ງກ່າວ ຫຼື ຜ່ານການໂຄສະນາຢ່າງຫຼວງຫຼາຍ;
2. ຂອບເຂດດິນແດນ ທີ່ໄດ້ມີການຈໍລະຈອນແຈກຢາຍຜະລິດຕະພັນ, ສິນຄ້າ, ການບໍລິການ ທີ່ມີເຄື່ອງໝາຍການຄ້າດັ່ງກ່າວ ຢ່າງກວ້າງຂວາງ;
3. ລາຍການ ຈາກການຂາຍສິນຄ້າ ຫຼື ການໃຫ້ບໍລິການ ທີ່ມີເຄື່ອງໝາຍການຄ້າດັ່ງກ່າວ ຫຼື ຈຳນວນສິນຄ້າ ທີ່ໄດ້ຂາຍອອກໄປ, ການຕອບສະໜອງການບໍລິການ ຢ່າງຫຼວງຫຼາຍ;
4. ໄລຍະເວລາ ນຳໃຊ້ເຄື່ອງໝາຍການຄ້າດັ່ງກ່າວ ຕ້ອງເປັນປົກກະຕິ ແລະ ຕໍ່ເນື່ອງ;
5. ຄວາມເຊື່ອໝັ້ນ ໃນການນຳໃຊ້ເຄື່ອງໝາຍ ກັບ ຜະລິດຕະພັນ, ສິນຄ້າ, ການບໍລິການມີຄຸນນະພາບດີ ແລະ ເປັນທີ່ນິຍົມຢ່າງກວ້າງຂວາງໃນສັງຄົມ;
6. ຜູ້ຊົມໃຊ້ ໄດ້ຢັ້ງຢືນ ແລະ ຮັບຮູ້ ຢູ່ພາຍໃນປະເທດ ກ່ຽວກັບການມີຊື່ສຽງຂອງເຄື່ອງໝາຍ ຢ່າງຫຼວງຫຼາຍ;
7. ການລົງທຶນເຂົ້າໃສ່ເຄື່ອງໝາຍ ມີມູນຄ່າສູງ.

ກົດໝາຍສະບັບນີ້ ຈະໃຫ້ການປົກປ້ອງເຄື່ອງໝາຍການຄ້າທີ່ມີຊື່ສຽງ ບໍ່ວ່າຈະໄດ້ຈົດທະບຽນໄວ້ແລ້ວ ຫຼື ບໍ່ກໍຕາມ ແລະ ຈະບໍ່ອະນຸຍາດໃຫ້ ບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງບໍ່ແມ່ນເຈົ້າຂອງເຄື່ອງໝາຍການຄ້າທີ່ມີຊື່ສຽງນັ້ນ ຈົດທະບຽນ ຫຼື ນໍາໃຊ້ເຄື່ອງໝາຍທີ່ຄືກັນ ຫຼື ຄ້າຍຄືກັນ ກັບເຄື່ອງໝາຍການຄ້າທີ່ມີຊື່ສຽງດັ່ງກ່າວ.

**ມາດຕາ 18. ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນແບບຜັງວົງຈອນລວມ**

ແບບຜັງວົງຈອນລວມ ທີ່ຈະໄດ້ຮັບໃບຢັ້ງຢືນ ມີເງື່ອນໄຂ ດັ່ງນີ້:

1. ເປັນແບບຜັງວົງຈອນລວມ ທີ່ຜູ້ອອກແບບໄດ້ປະດິດສ້າງຂຶ້ນໃໝ່ ໂດຍນໍາເອົາບາງສ່ວນ ຫຼື ຫຼາຍສ່ວນ ຂອງແບບຜັງ ຫຼື ຂອງວົງຈອນລວມ ຊຶ່ງເປັນທີ່ຮູ້ຈັກກັນໂດຍທົ່ວໄປ ມາຈັດວາງໃໝ່ ເຮັດໃຫ້ເກີດເປັນແບບຜັງໃໝ່;
2. ເປັນແບບຜັງວົງຈອນລວມ ທີ່ຜູ້ອອກແບບໄດ້ປະດິດສ້າງຂຶ້ນມາເອງ ແລະ ບໍ່ເປັນທີ່ຮູ້ຈັກກັນໂດຍທົ່ວໄປ ໃນວົງການອຸດສາຫະກໍາ ຜະລິດແບບຜັງວົງຈອນລວມ.

**ມາດຕາ 19. ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນແຫຼ່ງກໍາເນີດ**

ແຫຼ່ງກໍາເນີດ ທີ່ຈະໄດ້ຮັບໃບຢັ້ງຢືນ ມີເງື່ອນໄຂ ດັ່ງນີ້:

1. ຕ້ອງແມ່ນແຫຼ່ງກໍາເນີດທີ່ລວມເອົາປັດໄຈ ຂອງທໍາມະຊາດ ຊຶ່ງປະກອບດ້ວຍ ສະພາບຂອງ ດິນ, ອາກາດ, ນໍ້າ, ລະບົບນິເວດ ແລະ ເງື່ອນໄຂທໍາມະຊາດອື່ນໆ;
2. ຕ້ອງແມ່ນແຫຼ່ງກໍາເນີດທີ່ລວມເອົາປັດໄຈ ຂອງມະນຸດຊຶ່ງປະກອບດ້ວຍ ຄວາມຮັບຮູ້, ຄວາມຊໍານິຊໍານານ ແລະ ປະສົບການຂອງຜູ້ຜະລິດ ແລະ ກໍາມະວິທີການຜະລິດ ທີ່ມີມາແບບດັ້ງເດີມ ຂອງທ້ອງຖິ່ນນັ້ນ.

ທັງສອງປັດໄຈນີ້ ເປັນເງື່ອນໄຂຕັດສິນໃຫ້ຜະລິດຕະພັນນັ້ນ ມີຊື່ສຽງ, ຄຸນນະພາບ ແລະ ຄຸນລັກສະນະສະເພາະ.

**ມາດຕາ 20. ເງື່ອນໄຂ ທີ່ຈະເປັນຄວາມລັບທາງການຄ້າ**

ເງື່ອນໄຂ ທີ່ຈະເປັນຄວາມລັບທາງການຄ້າ ມີ ດັ່ງນີ້:

1. ຕ້ອງແມ່ນຂໍ້ມູນ ທີ່ເປັນປະໂຫຍດໃນການດໍາເນີນທຸລະກິດ ຫຼື ການບໍລິການ;
2. ຕ້ອງແມ່ນຂໍ້ມູນ ທີ່ຄົນທົ່ວໄປ ຍັງບໍ່ທັນຮູ້ຈັກ;
3. ຕ້ອງແມ່ນຂໍ້ມູນ ຊຶ່ງບຸກຄົນທີ່ກ່ຽວຂ້ອງ ຍັງບໍ່ທັນເຂົ້າເຖິງ.

ທັງສາມເງື່ອນໄຂນີ້ ເຮັດໃຫ້ເຈົ້າຂອງຄວາມລັບນັ້ນ ໄດ້ຜົນປະໂຫຍດເໜືອຄູ່ແຂ່ງຂັນ.

## ໝວດທີ 2
## ຊັບສິນອຸດສາຫະກຳ ທີ່ບໍ່ສາມາດຈົດທະບຽນ

**ມາດຕາ 21. ການປະດິດສ້າງ ແລະ ສິ່ງປະດິດ ທີ່ບໍ່ສາມາດຂໍຮັບສິດທິບັດ ແລະ ອະນຸສິດທິບັດ**

ການປະດິດສ້າງ ຫຼື ສິ່ງປະດິດ ທີ່ບໍ່ສາມາດຂໍຮັບສິດທິບັດ ຫຼື ອະນຸສິດທິບັດໄດ້ ເຊັ່ນ: ການຄົ້ນພົບສິ່ງທີ່ມີມາກ່ອນແລ້ວ, ການຄົ້ນພົບກົດເກນ ແລະ ທິດສະດີວິທະຍາສາດ, ສູດຄິດໄລ່ຄະນິດສາດ, ແຜນ, ລະບຽບການ ຫຼື ວິທີການ ເພື່ອດຳເນີນທຸລະກິດ, ການປິ່ນປົວທາງຈິດ ຫຼື ເກມຫຼິ້ນຕ່າງໆ, ວິທີການປິ່ນປົວຄົນ ແລະ ສັດ, ຈຸລິນຊີ ແລະ ສ່ວນປະກອບສ່ວນໃດສ່ວນໜຶ່ງຂອງຈຸລິນຊີ ທີ່ມີຢູ່ຕາມທຳມະຊາດ ຫຼື ສານສະກັດຈາກສັດ ຫຼື ພືດ, ການປະດິດສ້າງ ແລະ ສິ່ງປະດິດ ທີ່ຂັດກັບຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສຸຂານາໄມ, ສິ່ງແວດລ້ອມ, ລະບຽບກົດໝາຍ ແລະ ວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ.

**ມາດຕາ 22. ແບບອຸດສາຫະກຳ ທີ່ບໍ່ສາມາດໃຫ້ຈົດທະບຽນ**

ແບບອຸດສາຫະກຳ ທີ່ບໍ່ສາມາດໃຫ້ຈົດທະບຽນ ມີ ດັ່ງນີ້:

1. ຮູບຊົງພາຍນອກຂອງແບບອຸດສາຫະກຳ ທີ່ເກີດຈາກຮູບຊົງເຕັກນິກຂອງມັນເອງເທົ່ານັ້ນ;
2. ແບບອຸດສາຫະກຳ ທີ່ຂັດກັບຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**ມາດຕາ 23. ເຄື່ອງໝາຍການຄ້າ ທີ່ບໍ່ສາມາດຈົດທະບຽນໄດ້**

ເຄື່ອງໝາຍການຄ້າ ທີ່ບໍ່ສາມາດຈົດທະບຽນໄດ້ ມີດັ່ງນີ້:

1. ເຄື່ອງໝາຍ ທີ່ບໍ່ຈະແຈ້ງ ຊຶ່ງພາໃຫ້ ບໍ່ສາມາດຈຳແນກໄດ້ລະຫວ່າງ ຜະລິດຕະພັນ, ສິນຄ້າ, ການບໍລິການ ຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ກັບຂອງບຸກຄົນ ແລະ ການຈັດຕັ້ງອື່ນ;
2. ເຄື່ອງໝາຍ ທີ່ພາໃຫ້ສາທາລະນະຊົນ ຫຼື ວົງການການຄ້າເຂົ້າໃຈຜິດ ຫຼື ມີລັກສະນະຫຼອກລວງ ກ່ຽວກັບ ແຫຼ່ງທີ່ມາ, ຄຸນລັກສະນະ, ຄຸນນະພາບ ລວມທັງ ລາຄາ ຫຼື ລັກສະນະອື່ນ ຂອງຜະລິດຕະພັນ, ສິນຄ້າ ຫຼື ການບໍລິການ;
3. ເຄື່ອງໝາຍ ທີ່ມີການລອກຮຽນແບບ, ປອມແປງ ຊຶ່ງເຮັດໃຫ້ຜູ້ບໍລິໂພກ ຫຼື ຜູ້ຊົມໃຊ້ເຂົ້າໃຈຜິດ;
4. ເຄື່ອງໝາຍ ທີ່ມີເຄື່ອງໝາຍຊາດ, ທຸງຊາດ, ສັນຍາລັກ ທາງດ້ານວັດທະນະທຳ ຫຼື ປູຊະນີຍະສະຖານ, ຮູບວິລະຊົນ, ຮູບຜູ້ນຳ, ຊື່ຫຍໍ້ ຫຼື ຊື່ເຕັມຂອງເມືອງ, ແຂວງ ຂອງ ສປປ ລາວ ຫຼື ຕ່າງປະເທດ;
5. ເຄື່ອງໝາຍ ຂອງອົງການຈັດຕັ້ງສາກົນ ຫຼື ສັນຍາລັກ ທີ່ຖືກສ້າງຕັ້ງຂຶ້ນໂດຍສົນທິສັນຍາສາກົນ, ຕາປະທັບທາງການ ຫຼື ສັນຍາລັກ ຂອງອົງການຈັດຕັ້ງລັດ ຫຼື ສາກົນ ຍົກເວັ້ນກໍລະນີ ທີ່ໄດ້ຮັບອະນຸຍາດຈາກລັດ ຫຼື ອົງການຈັດຕັ້ງສາກົນ ທີ່ກ່ຽວຂ້ອງ;

6. ເຄື່ອງໝາຍ ທີ່ຄືກັນ ຫຼື ຄ້າຍຄືກັນ ກັບເຄື່ອງໝາຍການຄ້າ ທີ່ໄດ້ຈົດທະບຽນໄປແລ້ວ ຂອງ ຜະລິດຕະພັນສິນຄ້າ ຫຼື ການບໍລິການໃດໜຶ່ງ;
7. ເຄື່ອງໝາຍ ທີ່ຂັດກັບຄວາມສະຫງົບຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ລະບຽບກົດໝາຍ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

**ມາດຕາ 24. ແບບຜັງວົງຈອນລວມ ທີ່ບໍ່ສາມາດຈົດທະບຽນ**

ແບບຜັງວົງຈອນລວມ ທີ່ບໍ່ສາມາດຈົດທະບຽນໄດ້ ມີດັ່ງນີ້:

1. ຫຼັກການ, ກຳມະວິທີ, ລະບົບ ຫຼື ວິທີການປະຕິບັດງານ ຂອງວົງຈອນລວມ;
2. ຂໍ້ມູນຂ່າວສານ ຫຼື ຊອບແວ ທີ່ບັນຈຸຢູ່ໃນວົງຈອນລວມ.

**ມາດຕາ 25. ແຫຼ່ງກຳເນີດ ທີ່ບໍ່ສາມາດຈົດທະບຽນ**

ແຫຼ່ງກຳເນີດ ທີ່ບໍ່ສາມາດຈົດທະບຽນໄດ້ ມີດັ່ງນີ້:

1. ຊື່ຂອງແຫຼ່ງກຳເນີດ ທີ່ໄດ້ກາຍມາເປັນຊື່ຂອງສິນຄ້າທົ່ວໄປໃນ ສປປ ລາວ;
2. ແຫຼ່ງກຳເນີດຂອງຕ່າງປະເທດ ທີ່ບໍ່ໄດ້ມີການປົກປ້ອງ ຫຼື ບໍ່ໄດ້ນຳໃຊ້ມາເປັນເວລາດົນນານ;
3. ແຫຼ່ງກຳເນີດທີ່ຄືກັນ ຫຼື ຄ້າຍຄືກັນ ກັບເຄື່ອງໝາຍການຄ້າທີ່ໄດ້ຮັບການປົກປ້ອງແລ້ວ ຊຶ່ງພາໃຫ້ເກີດຄວາມເຂົ້າໃຈຜິດ ກ່ຽວກັບ ແຫຼ່ງທີ່ມາຂອງສິນຄ້າດັ່ງກ່າວ;
4. ແຫຼ່ງກຳເນີດ ທີ່ເຮັດໃຫ້ຜູ້ຊົມໃຊ້ເຂົ້າໃຈຜິດ ວ່າແມ່ນແຫຼ່ງກຳເນີດຂອງຜະລິດຕະພັນທີ່ແທ້ຈິງ.

**ມາດຕາ 26. ຂໍ້ມູນທີ່ບໍ່ສາມາດປົກປ້ອງເປັນຄວາມລັບທາງການຄ້າ**

ຂໍ້ມູນທີ່ບໍ່ສາມາດປົກປ້ອງເປັນຄວາມລັບທາງການຄ້າໄດ້ ປະກອບດ້ວຍ ຄວາມລັບຂອງບຸກຄົນ, ການຄຸ້ມຄອງບໍລິຫານລັດ, ການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະ ຂໍ້ມູນລັບອື່ນໆ ທີ່ບໍ່ກ່ຽວຂ້ອງກັບການຄ້າ.

## ໝວດທີ 3
## ການຈົດທະບຽນ ຊັບສິນອຸດສາຫະກຳ

**ມາດຕາ 27. ການຍື່ນຄຳຮ້ອງຂໍຈົດທະບຽນ**

ບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດຂໍຈົດທະບຽນຊັບສິນອຸດສາຫະກຳຂອງຕົນ ນຳອົງການຄຸ້ມຄອງວຽກງານຊັບສິນທາງປັນຍາ ຫຼື ນຳອົງການຈົດທະບຽນຊັບສິນອຸດສາຫະກຳສາກົນ ທີ່ ສປປ ລາວ ເປັນພາຄີ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ຢູ່ຕ່າງປະເທດ ຊຶ່ງມີຈຸດປະສົງຂໍຈົດທະບຽນຊັບສິນອຸດສາຫະກຳ ຢູ່ ສປປ ລາວ ຕ້ອງໄດ້ມີຕົວແທນທີ່ຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ.

**ມາດຕາ 28. ຫຼັກການ ພິຈາລະນາຄຳຮ້ອງຂໍຈົດທະບຽນ**

ຖ້າວ່າ ມີຜູ້ຍື່ນຄຳຮ້ອງຫຼາຍຄົນ ເພື່ອຂໍຈົດທະບຽນຊັບສິນອຸດສາຫະກຳແບບດຽວກັນ ຫຼື ຄ້າຍຄືກັນ ໂດຍຖືກຕ້ອງຕາມລະບຽບການຈົດທະບຽນນັ້ນ ຜູ້ທີ່ມາຍື່ນກ່ອນ ຫຼື ຜູ້ທີ່ໄດ້ຮັບວັນບຸລິມະສິດ ຈະໄດ້ຮັບການພິຈາລະນາກ່ອນ.

**ມາດຕາ 29. ວັນບຸລິມະສິດ**

ຜູ້ທີ່ໄດ້ຮັບວັນບຸລິມະສິດ ແມ່ນ ບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຄຳຮ້ອງຂໍຈົດທະບຽນຢູ່ຕ່າງປະເທດ ກ່ອນຜູ້ທີ່ມາຍື່ນຄຳຮ້ອງຂໍຈົດທະບຽນ ຢູ່ ສປປ ລາວ.

ວັນບຸລິມະສິດ ມີກຳນົດບໍ່ເກີນ ສິບສອງເດືອນ ນັບແຕ່ວັນຍື່ນຄຳຮ້ອງຢູ່ຕ່າງປະເທດມາເຖິງວັນຍື່ນຄຳ ຮ້ອງ ຢູ່ ສປປ ລາວ ສຳລັບສິດທິບັດ ຫຼື ອະນຸສິດທິບັດ ແລະ ບໍ່ເກີນ ຫົກເດືອນ ສຳລັບ ແບບອຸດສາຫະກຳ ຫຼື ເຄື່ອງໝາຍການຄ້າ ຖ້າເກີນກຳນົດເວລາດັ່ງກ່າວແລ້ວ ໃຫ້ຖືເອົາວັນຍື່ນຄຳຮ້ອງ ຢູ່ ສປປ ລາວ.

ລະບຽບການກ່ຽວກັບວັນບຸລິມະສິດດັ່ງກ່າວ ນຳໃຊ້ເຊັ່ນດຽວກັນສຳລັບຜູ້ທີ່ຍື່ນຄຳຮ້ອງຂໍຈົດທະບຽນຢູ່ ສປປ ລາວ ກ່ອນຍື່ນຢູ່ຕ່າງປະເທດ.

**ມາດຕາ 30. ສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດ**

ສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດ ປະກອບດ້ວຍເອກະສານດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນການປະດິດສ້າງ;
2. ໃບມອບສິດ;
3. ບົດອະທິບາຍ;
4. ຂໍ້ຮຽກຮ້ອງສິດ;
5. ແຜນວາດ;
6. ບົດສັງເຂບ;
7. ໃບຢັ້ງຢືນວັນບຸລິມະສິດ;
8. ໃບຮັບໃນການຈ່າຍຄ່າທຳນຽມ.

ສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ແຕ່ລະຊຸດສາມາດໃຊ້ໄດ້ສະເພາະແຕ່ການປະດິດສ້າງ ຫຼື ສິ່ງປະດິດໜຶ່ງອັນເທົ່ານັ້ນ ແລະ ສາມາດຍື່ນໄດ້ເປັນ ສອງພາສາ ຄື: ພາສາລາວ ຫຼື ພາສາອັງກິດ, ແຕ່ສຳລັບຄຳຮ້ອງ ແລະ ເອກະສານ ທີ່ເປັນພາສາອັງກິດ ຕ້ອງໄດ້ແປເປັນພາສາລາວ ພາຍໃນ ເກົ້າສິບວັນ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ ໂດຍມີການຢັ້ງຢືນຄວາມຖືກຕ້ອງຂອງການແປ.

**ມາດຕາ 31. ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ**

ສຳນວນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ ປະກອບດ້ວຍເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນ ແບບອຸດສາຫະກຳ;
2. ໃບມອບສິດ;
3. ຮູບແຕ້ມ, ຮູບຖ່າຍ ຫຼື ເສັ້ນ ທີ່ປະກອບເປັນແບບອຸດສາຫະກຳ ທີ່ນຳໃຊ້ສະເພາະຜະລິດຕະພັນໃດໜຶ່ງ;
4. ຕົວຢ່າງຂອງແບບອຸດສາຫະກຳ;
5. ໃບຢັ້ງຢືນວັນບຸລິມະສິດ;
6. ໃບຮັບໃນການຈ່າຍຄ່າທຳນຽມ.

ສຳນວນຄຳຮ້ອງຂໍຈົດທະບຽນໜຶ່ງຊຸດ ສາມາດໃຊ້ໄດ້ສະເພາະແບບອຸດສາຫະກຳ ທີ່ເປັນຊຸດດຽວກັນ ຊຶ່ງຈັດຢູ່ໃນໝວດດຽວກັນ ຂອງການຈັດໝວດສາກົນ.

ໃນກໍລະນີ ຜູ້ຮ້ອງຂໍ ແມ່ນ ຄົນຕ່າງປະເທດ ຄຳຮ້ອງສາມາດ ຍື່ນເປັນພາສາອັງກິດ ຫຼື ພາສາລາວ ກໍໄດ້.

**ມາດຕາ 32. ສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ**

ສຳນວນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ ປະກອບດ້ວຍເອກະສານ ດັ່ງນີ້:
1. ຄຳຮ້ອງຂໍຈົດທະບຽນ ເຄື່ອງໝາຍການຄ້າ;
2. ໃບມອບສິດ;
3. ຕົວຢ່າງເຄື່ອງໝາຍການຄ້າ ຫລື ການບໍລິການ;
4. ລະບຽບການນຳໃຊ້ເຄື່ອງໝາຍ;
5. ໃບຢັ້ງຢືນວັນບຸລິມະສິດ;
6. ໃບຮັບໃນການຈ່າຍຄ່າທຳນຽມ.

ສຳນວນຄຳຮ້ອງຂໍຈົດທະບຽນໜຶ່ງຊຸດ ໃຊ້ໄດ້ສະເພາະເຄື່ອງໝາຍການຄ້າໜຶ່ງອັນ ແລະໃຊ້ສະເພາະໝວດສິນຄ້າ ຫຼື ການບໍລິການໜຶ່ງໝວດ ຕາມການຈັດໝວດສາກົນ.

ໃນກໍລະນີ ຜູ້ຮ້ອງຂໍ ແມ່ນ ຄົນຕ່າງປະເທດ ຄຳຮ້ອງສາມາດ ຍື່ນເປັນພາສາອັງກິດ ຫຼື ພາສາລາວ ກໍໄດ້.

**ມາດຕາ 33. ສຳນວນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ**

ສຳນວນຄຳຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ປະກອບດ້ວຍເອກະສານ ດັ່ງນີ້:
1. ຄຳຮ້ອງຂໍຈົດທະບຽນ ແບບຜັງວົງຈອນລວມ;
2. ໃບມອບສິດ;
3. ບົດອະທິບາຍ;
4. ຂໍ້ຮຽກຮ້ອງສິດ;
5. ແຜນວາດ, ຮູບຖ່າຍຂອງ ແບບຜັງວົງຈອນລວມ ແລະ ຕົວຢ່າງຂອງວັດຖຸເຄິ່ງຊັກນຳ;
6. ບົດສັງເຂບ;
7. ໃບຢັ້ງຢືນວັນບຸລິມະສິດ;

8. ໃບຮັບໃນການຈ່າຍຄ່າທຳນຽມ.

ສຳນວນຄຳຮ້ອງຂໍຈົດທະບຽນ ແບບຜັງວົງຈອນລວມແຕ່ລະຊຸດ ສາມາດໃຊ້ໄດ້ສະເພາະແຕ່ແບບຜັງວົງຈອນລວມ ໜຶ່ງອັນເທົ່ານັ້ນ ແລະ ສາມາດຍື່ນໄດ້ເປັນ ສອງພາສາ ຄື: ພາສາລາວ ຫຼື ພາສາອັງກິດ, ແຕ່ສຳລັບຄຳຮ້ອງ ແລະ ເອກະສານ ທີ່ເປັນພາສາອັງກິດ ຕ້ອງໄດ້ແປເປັນພາສາລາວ ພາຍໃນ ເກົ້າສິບວັນ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ ໂດຍມີການຢັ້ງຢືນຄວາມຖືກຕ້ອງຂອງການແປ.

**ມາດຕາ 34. ສຳນວນຄຳຮ້ອງຂໍຈົດທະບຽນແຫຼ່ງກຳເນີດ**

ສຳນວນຄຳຮ້ອງຂໍຈົດທະບຽນແຫຼ່ງກຳເນີດ ປະກອບດ້ວຍເອກະສານ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນ ແຫຼ່ງກຳເນີດ;
2. ໃບມອບສິດ;
3. ສຳເນົາໃບຢັ້ງຢືນການຈົດທະບຽນ ແຫຼ່ງກຳເນີດ ຢູ່ຕ່າງປະເທດ;
4. ໃບຮັບໃນການຈ່າຍຄ່າທຳນຽມ.

ສຳນວນຄຳຮ້ອງຂໍຈົດທະບຽນແຫ່ງກຳເນີດ ແຕ່ລະຊຸດ ສາມາດໃຊ້ໄດ້ສະເພາະແຕ່ແຫຼ່ງກຳເນີດໜຶ່ງອັນເທົ່ານັ້ນ ແລະ ສາມາດຍື່ນໄດ້ເປັນ ສອງພາສາ ຄື: ພາສາລາວ ຫຼື ພາສາອັງກິດ, ແຕ່ສຳລັບຄຳຮ້ອງ ແລະ ເອກະສານ ທີ່ເປັນພາສາອັງກິດ ຕ້ອງໄດ້ແປເປັນພາສາລາວ ພາຍໃນເກົ້າສິບວັນ ນັບແຕ່ວັນຍື່ນຄຳຮ້ອງເປັນຕົ້ນໄປ ໂດຍມີການຢັ້ງຢືນຄວາມຖືກຕ້ອງຂອງການແປ.

**ມາດຕາ 35. ການສະໜອງຂໍ້ມູນເພີ່ມເຕີມ**

ເມື່ອມີການຮຽກຮ້ອງຂອງໜ່ວຍງານຈົດທະບຽນ ຜູ້ຍື່ນຄຳຮ້ອງຕ້ອງໄດ້ຕອບສະໜອງ ຂໍ້ມູນ ການຈົດທະບຽນຊັບສິນອຸດສາຫະກຳຢູ່ຕ່າງປະເທດ ໂດຍສະເພາະ ກ່ຽວກັບຊັບສິນອຸດສາຫະກຳແບບດຽວກັນ ທີ່ກຳລັງຂໍຈົດທະບຽນ ຢູ່ ສປປ ລາວ ຊຶ່ງຂໍ້ມູນດັ່ງກ່າວປະກອບດ້ວຍ:

1. ສຳເນົາ ກ່ຽວກັບຜົນລາຍງານຂອງການກວດສອບຊັບສິນອຸດສາຫະກຳ ຢູ່ຕ່າງປະເທດ;
2. ສຳເນົາໃບຢັ້ງຢືນການຈົດທະບຽນ ຊັບສິນອຸດສາຫະກຳ ທີ່ໄດ້ຮັບຢູ່ຕ່າງປະເທດ.

**ມາດຕາ 36. ການຍື່ນ ແລະ ການຮັບ ສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ**

ສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ຕ້ອງຍື່ນຕໍ່ອົງການຄຸ້ມຄອງຊັບສິນທາງປັນຍາ ເທົ່ານັ້ນ ຊຶ່ງສຳນວນຄຳຮ້ອງຢ່າງໜ້ອຍ ຕ້ອງປະກອບດ້ວຍເອກະສານ ແລະ ຂໍ້ມູນ ດັ່ງນີ້:

1. ຄຳຮ້ອງຂໍຈົດທະບຽນ ການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ ຫຼື ແຫຼ່ງກຳເນີດ;
2. ລາຍລະອຽດ ລວມທັງຂອບເຂດການປົກປ້ອງ ສຳລັບຄຳຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດ, ຮູບຖ່າຍ ຫຼື ຮູບແຕ້ມ ສຳລັບຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳ, ຕົວຢ່າງຂອງເຄື່ອງໝາຍ ແລະ ລາຍການຂອງສິນຄ້າ ຫຼື ການບໍລິ

ການ ທີ່ໃຊ້ກັບເຄື່ອງໝາຍດັ່ງກ່າວ ສຳລັບຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ, ບົດອະທິບາຍກ່ຽວກັບຄຸນລັກສະນະພິເສດ ຂອງແຫຼ່ງກຳເນີດ ສຳລັບຄຳຮ້ອງຂໍຈົດທະບຽນແຫຼ່ງກຳເນີດ;

3. ໃບຮັບໃນການຈ່າຍຄ່າທຳນຽມ.

ເມື່ອສຳນວນຄຳຮ້ອງຂໍຈົດທະບຽນ ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1, ຂໍ້ 2 ແລະ ຂໍ້ 3 ຂອງມາດຕານີ້ ໜ່ວຍງານຈົດທະບຽນ ຈະໃຫ້ວັນຍື່ນຄຳຮ້ອງ ຫຼື ວັນຍື່ນຄຳຮ້ອງສາກົນ ໃນກໍລະນີທີ່ຄຳຮ້ອງຂໍຈົດທະບຽນ ໄດ້ຍື່ນຕໍ່ອົງການຈົດທະບຽນຊັບສິນອຸດສາຫະກຳສາກົນ ທີ່ ສປປ ລາວ ເປັນພາຄີ.

## ມາດຕາ 37. ການກວດສອບສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ເບື້ອງຕົ້ນ

ການກວດສອບສຳນວນຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳເບື້ອງຕົ້ນ ມີຂັ້ນຕອນດັ່ງນີ້:

1. ຄວາມຄົບຖ້ວນ ຂອງສຳນວນຄຳຮ້ອງ;
2. ເງື່ອນໄຂທີ່ຈະໄດ້ຮັບການປົກປ້ອງ;
3. ສິດຂອງຜູ້ຍື່ນສຳນວນຄຳຮ້ອງ;
4. ການເສຍຄ່າທຳນຽມ.

ພາຍຫຼັງທີ່ໄດ້ທຳການກວດສອບເບື້ອງຕົ້ນແລ້ວ ຖ້າເຫັນວ່າສຳນວນຄຳຮ້ອງບໍ່ຄົບຖ້ວນ ໜ່ວຍງານຈົດທະບຽນ ຈະແຈ້ງໃຫ້ຜູ້ຍື່ນຄຳຮ້ອງໄປແກ້ໄຂ ພາຍໃນກຳນົດ ຫົກສິບວັນ ນັບແຕ່ວັນອອກແຈ້ງການ ເປັນຕົ້ນໄປ.

## ມາດຕາ 38. ການພິມເຜີຍແຜ່ຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ

ພາຍຫຼັງໜ່ວຍງານຈົດທະບຽນ ໄດ້ທຳການກວດສອບເບື້ອງຕົ້ນ ສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ແລະ ສິ່ງປະດິດ ສຳເລັດແລ້ວ ໜ່ວຍງານຈົດທະບຽນຈະຈັດພິມເຜີຍແຜ່ລົງໃນວາລະສານທາງການ ກ່ຽວກັບຊັບສິນອຸດສາຫະກຳ ໃນເດືອນທີ ສິບເກົ້າ ນັບແຕ່ວັນຍື່ນຄຳຮ້ອງ ຫຼື ວັນບຸລິມະສິດ ເປັນຕົ້ນໄປ.

## ມາດຕາ 39. ການສະເໜີໃຫ້ ກວດສອບເນື້ອໃນ ຂອງສຳນວນຄຳຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດ

ໃນກໍລະນີທີ່ຜູ້ຍື່ນຄຳຮ້ອງ ບໍ່ສາມາດຕອບສະໜອງຜົນລາຍງານຂອງການກວດສອບເນື້ອໃນ ຂອງການປະດິດສ້າງ ຫຼື ສິ່ງປະດິດ ທີ່ກຳລັງຂໍຈົດທະບຽນຢູ່ນັ້ນ ຜູ້ຍື່ນຄຳຮ້ອງສາມາດສະເໜີໃຫ້ໜ່ວຍງານຈົດທະບຽນກວດສອບເນື້ອໃນ ຂອງສຳນວນຄຳຮ້ອງດັ່ງກ່າວ ຊຶ່ງຈະດຳເນີນການໄດ້ໃນໄລຍະເວລາດັ່ງນີ້: ສາມສິບສອງເດືອນ ສຳລັບການປະດິດສ້າງ ແລະ ສິບສອງເດືອນ ສຳລັບສິ່ງປະດິດ ນັບແຕ່ວັນຍື່ນຄຳຮ້ອງ ຫຼື ວັນບຸລິມະສິດ ເປັນຕົ້ນໄປ ແຕ່ການໃຊ້ຈ່າຍຕ່າງໆ ໃນການສະເໜີ

ໃຫ້ກວດສອບເນື້ອໃນ ຂອງສໍານວນຄໍາຮ້ອງຂໍຈົດທະບຽນການປະດິດສ້າງ ຫຼື ສິ່ງປະດິດນັ້ນ ຈະຕົກເປັນພາລະຂອງຜູ້ສະເໜີ.

**ມາດຕາ 40. ການກວດສອບເນື້ອໃນ ຂອງສໍານວນຄໍາຮ້ອງຂໍຈົດທະບຽນຊັບສິນອຸດສາຫະກໍາ**

ພາຍຫຼັງໜ່ວຍງານຈົດທະບຽນ ໄດ້ກວດສອບສໍານວນຄໍາຮ້ອງຂໍຈົດທະບຽນເບື້ອງຕົ້ນສໍາເລັດແລ້ວ ໜ່ວຍງານຈົດທະບຽນຈະກວດສອບເນື້ອໃນ ຂອງສໍານວນຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ, ເຄື່ອງໝາຍການຄ້າ ແລະ ແຫຼ່ງກໍາເນີດ.

ສໍາລັບ ສໍານວນຄໍາຮ້ອງຂໍຈົດທະບຽນແບບຜັງວົງຈອນລວມ ຈະບໍ່ໄດ້ກວດສອບເນື້ອໃນ.

**ມາດຕາ 41. ສໍານວນຄໍາຮ້ອງຂໍຈົດທະບຽນຊັບສິນອຸດສາຫະກໍາ ທີ່ເປັນໂມຄະ**

ສໍານວນຄໍາຮ້ອງຂໍຈົດທະບຽນຊັບສິນອຸດສາຫະກໍາ ທີ່ຖືວ່າເປັນໂມຄະ ແມ່ນ ບໍ່ໄດ້ຕາມເງື່ອນໄຂ ດັ່ງນີ້:

1. ສໍານວນຄໍາຮ້ອງ ບໍ່ຄົບຖ້ວນ;
2. ຊັບສິນອຸດສາຫະກໍາ ບໍ່ມີເງື່ອນໄຂໄດ້ຮັບການປົກປ້ອງ;
3. ຜູ້ຍື່ນສໍານວນຄໍາຮ້ອງ ບໍ່ມີສິດຂໍຈົດທະບຽນ;
4. ຜູ້ຍື່ນສໍານວນຄໍາຮ້ອງ ບໍ່ເສຍຄ່າທໍານຽມ;
5. ຜູ້ຍື່ນສໍານວນຄໍາຮ້ອງ ບໍ່ໄດ້ສະເໜີໃຫ້ກວດສອບເນື້ອໃນຂອງສໍານວນຄໍາຮ້ອງຂໍຈົດທະບຽນ ການປະດິດສ້າງ ຫຼື ສິ່ງປະດິດ ໃນໄລຍະເວລາທີ່ໄດ້ກໍານົດໄວ້ໃນ ມາດຕາ 39 ຂອງກົດໝາຍສະບັບນີ້.

**ມາດຕາ 42. ການອອກໃບທະບຽນ**

ພາຍຫຼັງການພິຈາລະນາ ແລະ ກວດສອບ ສໍານວນຄໍາຮ້ອງຂໍຈົດທະບຽນຊັບສິນອຸດສາຫະກໍາ ທີ່ເຫັນວ່າຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ອົງການຄຸ້ມຄອງຊັບສິນທາງປັນຍາ ຈະອອກໃບຢັ້ງຢືນການຈົດທະບຽນຊັບສິນອຸດສາຫະກໍາ, ບັນທຶກລົງໃນປຶ້ມ ບັນທຶກການຈົດທະບຽນ ແລະ ພິມເຜີຍແຜ່ຜົນຂອງການຈົດທະບຽນດັ່ງກ່າວລົງໃນວາລະສານທາງການກ່ຽວກັບຊັບສິນອຸດສາຫະກໍາ.

**ມາດຕາ 43. ການຈົດທະບຽນທີ່ເປັນໂມຄະ**

ການຈົດທະບຽນຊັບສິນອຸດສາຫະກໍາ ທີ່ເປັນໂມຄະ ມີ ດັ່ງນີ້:

1. ໃບຢັ້ງຢືນການຈົດທະບຽນ ໝົດອາຍຸການປົກປ້ອງ;
2. ເຈົ້າຂອງຊັບສິນອຸດສາຫະກໍາ ບໍ່ຕໍ່ທະບຽນ;
3. ເຈົ້າຂອງຊັບສິນອຸດສາຫະກໍາ ບໍ່ຈ່າຍຄ່າທໍານຽມ;
4. ການບໍ່ໄດ້ນໍາໃຊ້ ພາຍຫລັງການຈົດທະບຽນ ຕາມທີ່ໄດ້ກໍານົດໄວ້ໃນຫລັກການນໍາໃຊ້ ຂອງ ກົດໝາຍສະບັບນີ້.

## ໝວດທີ 4
## ເຈົ້າຂອງສິດທາງດ້ານຊັບສິນອຸດສາຫະກຳ

### ມາດຕາ 44. ເຈົ້າຂອງຊັບສິນອຸດສາຫະກຳ

ພາຍຫຼັງທີ່ໄດ້ຮັບການຈົດທະບຽນຢ່າງຖືກຕ້ອງຕາມກົດໝາຍແລ້ວ ຜູ້ຮ້ອງຂໍຈະກາຍເປັນເຈົ້າຂອງຊັບສິນອຸດສາຫະກຳ.

ໃນກໍລະນີ ທີ່ມີການວ່າຈ້າງໃຫ້ ປະດິດສ້າງ ຫຼື ອອກແບບ ຊັບສິນອຸດສາຫະກຳ ເຈົ້າຂອງຊັບສິນອຸດສາຫະກຳດັ່ງກ່າວ ແມ່ນ ເປັນຂອງຜູ້ວ່າຈ້າງ ເວັ້ນເສຍແຕ່ມີການຕົກລົງກັນໄວ້ຢ່າງອື່ນ.

### ມາດຕາ 45. ສິດຂອງເຈົ້າຂອງຊັບສິນອຸດສາຫະກຳ

ເຈົ້າຂອງຊັບສິນອຸດສາຫະກຳ ມີສິດ ດັ່ງນີ້

1. ທຳການຜະລິດ;
2. ໃຫ້ຜູ້ອື່ນເຊົ່າ ເພື່ອທຳການຜະລິດ;
3. ໂອນໃຫ້ຜູ້ອື່ນ ດ້ວຍການຂາຍ ຫຼື ມອບ;
4. ສືບທອດ;
5. ໃຊ້ປະໂຫຍດຈາກຜະລິດຕະພັນທີ່ເກີດຈາກຊັບສິນອຸດສາຫະກຳ ຫຼື ຜະລິດຕະພັນໃດໜຶ່ງ ທີ່ໄດ້ມາຈາກ ກຳມະວິທີການຜະລິດ ທີ່ເກີດຈາກຊັບສິນອຸດສາຫະກຳ;
6. ປົກປ້ອງຊັບສິນອຸດສາຫະກຳຂອງຕົນ ຈາກການລະເມີດ ຂອງຜູ້ອື່ນດ້ວຍການຍື່ນຄຳສະເໜີ ຫຼື ຄຳຮ້ອງຟ້ອງຕໍ່ສານ;
7. ເກັບມ້ຽນ, ໂຄສະນາ, ຈໍລະຈອນແຈກຢາຍ, ສະເໜີຂາຍ, ສົ່ງອອກ, ນຳເຂົ້າ ຜະລິດຕະພັນ ທີ່ໄດ້ຈາກຊັບສິນອຸດສາຫະກຳ.

## ໝວດທີ 5
## ອາຍຸການປົກປ້ອງຊັບສິນອຸດສາຫະກຳ

### ມາດຕາ 46. ອາຍຸການປົກປ້ອງສິດທິບັດ

ອາຍຸການຂອງສິດທິບັດ ມີກຳນົດ ຊາວປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນ ເປັນຕົ້ນໄປ. ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງສິດທິບັດ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າແຕ່ລະປີ.

### ມາດຕາ 47. ອາຍຸການປົກປ້ອງອະນຸສິດທິບັດ

ອາຍຸການ ຂອງອະນຸສິດທິບັດ ມີກຳນົດ ສິບປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນເປັນຕົ້ນໄປ ແລະ ສາມາດຕໍ່ອາຍຸໄດ້ ໜຶ່ງເທື່ອ ມີກຳນົດ ສອງປີ.

ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງອະນຸສິດທິບັດ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າແຕ່ລະປີ.

**ມາດຕາ 48. ອາຍຸການປົກປ້ອງແບບອຸດສາຫະກຳ**

ອາຍຸການ ຂອງການປົກປ້ອງແບບອຸດສາຫະກຳ ມີກຳນົດ ສິບຫ້າປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນ ເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບອຸດສາຫະກຳ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າ ເທື່ອລະ ຫ້າປີ.

**ມາດຕາ 49. ອາຍຸການປົກປ້ອງເຄື່ອງໝາຍການຄ້າ**

ອາຍຸການຂອງການປົກປ້ອງເຄື່ອງໝາຍການຄ້າ ມີກຳນົດ ສິບປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນ ເປັນຕົ້ນໄປ, ເມື່ອຄົບກຳນົດແລ້ວ ສາມາດຕໍ່ອາຍຸ ເທື່ອລະ ສິບປີ ໄດ້ຕະຫຼອດໄປ.

ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງເຄື່ອງໝາຍການຄ້າ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າເທື່ອລະ ສິບປີ.

**ມາດຕາ 50. ອາຍຸການປົກປ້ອງແບບຜັງວົງຈອນລວມ**

ອາຍຸການ ຂອງການປົກປ້ອງແບບຜັງວົງຈອນລວມ ມີກຳນົດ ສິບສອງປີ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນ ເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງແບບຜັງວົງຈອນລວມ ຕ້ອງຈ່າຍຄ່າທຳນຽມລ່ວງໜ້າແຕ່ລະປີ.

**ມາດຕາ 51. ອາຍຸການປົກປ້ອງແຫຼ່ງກຳເນີດ**

ການປົກປ້ອງແຫຼ່ງກຳເນີດ ແມ່ນ ມີຕະຫຼອດໄປ ນັບແຕ່ວັນໄດ້ຮັບໃບຢັ້ງຢືນການຈົດທະບຽນ ເປັນຕົ້ນໄປ ແລະ ເສຍຄ່າທຳນຽມເທື່ອດຽວ.

**ມາດຕາ 52. ອາຍຸການປົກປ້ອງຄວາມລັບທາງການຄ້າ**

ການປົກປ້ອງຄວາມລັບທາງການຄ້າ ແມ່ນ ມີຕະຫຼອດໄປ ຈົນກວ່າຄວາມລັບທາງດ້ານການຄ້າ ຖືກເປີດເຜີຍ.

## ໝວດທີ 6
## ຂໍ້ຈຳກັດ ຕໍ່ສິດທາງດ້ານຊັບສິນອຸດສາຫະກຳ

**ມາດຕາ 53. ການນຳໃຊ້ສິດ ເໜືອສິດທິບັດ ຫຼື ອະນຸສິດທິບັດ**

ໃນກໍລະນີມີຄວາມຈຳເປັນ ທາງດ້ານການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ສະບຽງອາຫານ, ຄວາມປອດໄພທາງດ້ານສຸຂານາໄມ ຂອງປະຊາຊົນລາວ ໂດຍບໍ່ມີຈຸດປະສົງທາງດ້ານການຄ້າ ລັດຖະບານ ສາມາດອະນຸຍາດໃຫ້ ບຸກຄົນ ແລະ ການຈັດຕັ້ງອື່ນ ນຳໃຊ້ສິດທິບັດ ຫຼື ອະນຸສິດທິບັດ ໂດຍປາສະຈາກການເຫັນດີ ຂອງເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດດັ່ງກ່າວ ແຕ່

ການນຳໃຊ້ ຈະຕ້ອງປະຕິບັດບົນພື້ນຖານຂອບເຂດການອະນຸມັດຂອງລັດຖະບານ ແຕ່ຕ້ອງແຈ້ງໃຫ້ເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ຊາບ ແລະ ຕ້ອງຈ່າຍຄ່າທົດແທນໃຫ້ແກ່ເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ຢ່າງສົມເຫດສົມຜົນ. ເຈົ້າຂອງສິດທິບັດ ຫຼື ອະນຸສິດທິບັດ ມີສິດສະເໜີຕໍ່ການອອກຄຳສັ່ງ ຫຼື ຄ່າທົດແທນ ທີ່ຕົນເຫັນວ່າບໍ່ເໝາະສົມ ພາຍໃນ ຫົກສິບວັນ ນັບແຕ່ວັນໄດ້ຮັບແຈ້ງການ ຄຳສັ່ງນັ້ນ ເປັນຕົ້ນໄປ.

ໃນກໍລະນີ ທີ່ປະເທດຕົກຢູ່ໃນສະພາວະສຸກເສີນ ຍ້ອນໄພທຳມະຊາດ ຫຼື ສົງຄາມ ນາຍົກລັດຖະມົນຕີ ກໍມີສິດອອກຄຳສັ່ງໃຫ້ບຸກຄົນ ຫຼື ການຈັດຕັ້ງອື່ນ ນຳໃຊ້ສິດເໜືອສິດທິບັດ ຫຼື ອະນຸສິດທິບັດ ແລະ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນວັກເທິງນີ້.

**ມາດຕາ 54. ການນຳໃຊ້ສິດທິບັດ ຫຼື ອະນຸສິດທິບັດ**

ໃນກໍລະນີ ທີ່ການປະດິດສ້າງ ຫຼື ສິ່ງປະດິດ ຊຶ່ງໄດ້ຮັບສິດທິບັດ ຫຼື ອະນຸສິດທິບັດໄປແລ້ວນັ້ນ ບໍ່ໄດ້ຖືກນຳໃຊ້ ຫຼື ນຳໃຊ້ບໍ່ເຕັມສ່ວນ ພາຍຫຼັງ ສາມປີ ນັບແຕ່ວັນອອກສິດທິບັດ ຫຼື ອະນຸສິດທິບັດ ເປັນຕົ້ນໄປ ລັດຈະແຈ້ງໃຫ້ເຈົ້າຂອງສິດຮັບຊາບ ເພື່ອໃຫ້ຜູ້ກ່ຽວຊີ້ແຈງເຫດຜົນເປັນລາຍລັກອັກສອນພາຍໃນ ເກົ້າສິບວັນ; ໃນກໍລະນີທີ່ບໍ່ຕອບ ຫຼື ຕອບໂດຍບໍ່ມີເຫດຜົນພຽງພໍ ລັດ ຈະອະນຸຍາດໃຫ້ຜູ້ອື່ນທີ່ຮ້ອງຂໍມານັ້ນ ນຳໃຊ້.

**ມາດຕາ 55. ການນຳໃຊ້ ເຄື່ອງໝາຍການຄ້າ**

ໃນກໍລະນີ ເຄື່ອງໝາຍການຄ້າໃດໜຶ່ງ ທີ່ໄດ້ຈົດທະບຽນໄປແລ້ວນັ້ນ ບໍ່ໄດ້ຖືກນຳໃຊ້ຢ່າງຕໍ່ເນື່ອງ ພາຍໃນ ຫ້າປີ ຢູ່ ສປປ ລາວ ລັດ ຈະແຈ້ງໃຫ້ເຈົ້າຂອງສິດຮັບຊາບເພື່ອໃຫ້ຜູ້ກ່ຽວຊີ້ແຈງເຫດຜົນເປັນລາຍລັກອັກສອນພາຍໃນ ເກົ້າສິບວັນ; ໃນກໍລະນີ ທີ່ບໍ່ຕອບ ຫຼື ຕອບໂດຍບໍ່ມີເຫດຜົນພຽງພໍ ລັດ ຈະອະນຸຍາດໃຫ້ຜູ້ອື່ນທີ່ຮ້ອງຂໍມານັ້ນ ນຳໃຊ້.

**ມາດຕາ 56. ການນຳໃຊ້ ແບບຜັງວົງຈອນລວມ**

ໃນກໍລະນີ ທີ່ໄດ້ນຳໃຊ້ແບບຜັງວົງຈອນລວມ ເພື່ອຫາຜົນປະໂຫຍດທາງການຄ້າແລ້ວ ບໍ່ວ່າຢູ່ໃນ ຫຼື ນອກປະເທດ ຄຳຮ້ອງຂໍຈົດທະບຽນ ແບບຜັງວົງຈອນລວມດັ່ງກ່າວ ຕ້ອງຍື່ນພາຍໃນ ສອງປີ ນັບແຕ່ວັນໄດ້ນຳໃຊ້ແບບຜັງວົງຈອນລວມນັ້ນ ເພື່ອຫາຜົນປະໂຫຍດທາງການຄ້າຄັ້ງທຳອິດ ຫຼື ນັບແຕ່ວັນປະດິດສ້າງຂຶ້ນ ແຕ່ໄລຍະເວລາບໍ່ໃຫ້ເກີນ ສິບຫ້າປີ.

**ມາດຕາ 57. ການນຳໃຊ້ ແຫຼ່ງກຳເນີດ**

ໃນກໍລະນີ ທີ່ບຸກຄົນ ຫຼື ການຈັດຕັ້ງ ບໍ່ປະຕິບັດຕາມເງື່ອນໄຂ ຂອງການຈົດທະບຽນແຫຼ່ງກຳເນີດ ອົງການຄຸ້ມຄອງຊັບສິນທາງປັນຍາ ຈະແຈ້ງໃຫ້ບຸກຄົນ ຫຼື ການຈັດຕັ້ງດັ່ງກ່າວ ປະຕິບັດຕາມເງື່ອນໄຂ ແລະ ຕາມກຳນົດເວລາ ຂອງອົງການຄຸ້ມຄອງຊັບສິນທາງປັນຍາ. ຖ້າບໍ່ປະຕິບັດຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍບໍ່ມີເຫດຜົນ ອົງການຄຸ້ມຄອງຊັບສິນທາງປັນຍາ ຈະສັ່ງໂຈະການນຳໃຊ້ແຫຼ່ງກຳເນີດ ດັ່ງກ່າວ.

# ໝວດທີ 7
# ພັນທະຂອງເຈົ້າຂອງຊັບສິນອຸດສາຫະກຳ

**ມາດຕາ 58. ພັນທະລວມ ຂອງເຈົ້າຂອງຊັບສິນອຸດສາຫະກຳ**

ພັນທະລວມຂອງເຈົ້າຂອງຊັບສິນອຸດສາຫະກຳ ມີ ດັ່ງນີ້:

1. ເປັນເຈົ້າການໃນການປົກປ້ອງ ແລະ ຄຸ້ມຄອງ ສິດຂອງຕົນ ດ້ວຍການຕິດຕາມ, ກວດກາການນຳໃຊ້ ຊັບສິນອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
2. ເປັນເຈົ້າການ ຊຸກຍູ້ ແລະ ສົ່ງເສີມ ໃຫ້ສັງຄົມ ໄດ້ນຳໃຊ້ຊັບສິນອຸດສາຫະກຳ ຂອງຕົນ ບົນພື້ນຖານຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ;
3. ເປັນເຈົ້າການ ໃນການແຈ້ງຂໍ້ມູນ ກ່ຽວກັບການລະເມີດຊັບສິນອຸດສາຫະກຳຂອງຕົນ ໃຫ້ແກ່ອົງການຈັດຕັ້ງລັດ ທີ່ມີໜ້າທີ່ຮັບຜິດຊອບ ຕໍ່ວຽກງານດັ່ງກ່າວ;
4. ເສຍພັນທະໃຫ້ລັດ ທີ່ໄດ້ມາຈາກການນຳໃຊ້, ການໃຫ້ເຊົ່າ, ການໂອນ ຫຼື ການສືບທອດຊັບສິນອຸດສາຫະກຳ ຫຼື ການທີ່ໄດ້ຮັບຜົນປະໂຫຍດອື່ນ ຕາມລະບຽບກົດໝາຍ;
5. ເປັນເຈົ້າການປະສານງານ ໃນການແກ້ໄຂການລະເມີດຊັບສິນອຸດສາຫະກຳຂອງຕົນ.

**ມາດຕາ 59. ພັນທະສະເພາະ ຂອງເຈົ້າຂອງຊັບສິນອຸດສາຫະກຳ**

ພັນທະສະເພາະ ຂອງເຈົ້າຂອງ ສິດທິບັດ, ອະນຸສິດທິບັດ, ແບບອຸດສາຫະກຳ, ເຄື່ອງໝາຍການຄ້າ, ແບບຜັງວົງຈອນລວມ, ແຫລ່ງກຳເນີດ ແລະ ຄວາມລັບທາງການຄ້າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ IV
# ພັນພືດ

# ໝວດທີ 1
# ເງື່ອນໄຂຂອງພັນພືດ

**ມາດຕາ 60. ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນຈົດທະບຽນພັນພືດທ້ອງຖິ່ນ, ພັນພືດພື້ນເມືອງທົ່ວໄປ ແລະ ພັນພືດປ່າ**

ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນຈົດທະບຽນພັນພືດທ້ອງຖິ່ນ, ພັນພືດພື້ນເມືອງທົ່ວໄປ ແລະ ພັນພືດປ່າ ຕ້ອງແມ່ນພັນພືດ ທີ່ມີລັກສະນະສະເພາະ ແລະ ມີຄຸນປະໂຫຍດໃນການນຳໃຊ້ ຊຶ່ງເກີດຂຶ້ນຢູ່ຫຼາຍທ້ອງຖິ່ນພາຍໃນປະເທດ ຢູ່ບ້ານ ຫຼື ຢູ່ປ່າ.

ເງື່ອນໄຂລະອຽດ ຂອງການຈົດທະບຽນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 61. ເງື່ອນໄຂ ທີ່ຈະໄດ້ຮັບໃບຢັ້ງຢືນຈົດທະບຽນພັນພືດໃໝ່**

ພັນພືດໃໝ່ ຕ້ອງແມ່ນການປັບປຸງ ຫຼື ພັດທະນາພັນ ດ້ວຍການໃຊ້ວິທີທາງວິສາວະພັນທຸກໍາ ຫຼື ໃຊ້ວິທີການເຕັກໂນໂລຊີ ຊີວະພາບ ທີ່ເຮັດໃຫ້ເກີດພືດ ພັນໃໝ່ຂຶ້ນມາ ຊຶ່ງບໍ່ເຄີຍມີຢູ່ໃນທໍາມະຊາດ.

ພັນພືດທີ່ຈະໄດ້ຮັບການປົກປ້ອງເປັນພັນພືດໃໝ່ ກໍຕໍ່ເມື່ອພັນພືດດັ່ງກ່າວ ຕອບສະໜອງເງື່ອນໄຂ ດັ່ງນີ້:

1. ຕ້ອງເປັນພັນໃໝ່ທີ່ຍັງບໍ່ທັນໄດ້ຖືກຂາຍ ຫຼື ວາງຈໍາໜ່າຍ ໃນ ສປປ ລາວ ກ່ອນວັນຍື່ນຄໍາຮ້ອງຂໍການປົກປ້ອງ ໜຶ່ງປີ;
2. ມີຄວາມແຕກຕ່າງຈາກພືດກຸ່ມດຽວກັນ ທີ່ຖືກຮັບຮູ້ທົ່ວໄປ ດ້ວຍຄຸນລັກສະນະທາງດ້ານພັນທຸກໍາໃດໜຶ່ງທີ່ສໍາຄັນ, ມີຄວາມຊັດເຈນ ຫຼື ມີຄວາມປ່ຽນແປງຢ່າງໜ້ອຍດ້ວຍຄຸນລັກສະນະ ອັນໃດອັນໜຶ່ງ ຫຼື ແຕກຕ່າງດ້ວຍຫຼາຍຄຸນລັກສະນະຮ່ວມກັນ ຊຶ່ງໃຫ້ກໍາເນີດພັນພືດໃໝ່;
3. ມີຄວາມສະໝໍ່າສະເໝີ ໝາຍຄວາມວ່າ ພັນພືດນັ້ນໆ ມີຄຸນລັກສະນະຂອງສ່ວນຕ່າງໆ ທີ່ເໝືອນກັນ ເຊັ່ນ ຄຸນລັກສະນະຂອງລໍາຕົ້ນ, ຮູບຮ່າງຂອງດອກ, ສີຂອງດອກ, ຄຸນລັກສະນະ ຂອງໝາກ ຫຼື ຄຸນລັກສະນະສະເພາະຢ່າງໃດຢ່າງໜຶ່ງ ທີ່ເປັນຜົນມາຈາກສະພາບທາງດ້ານພັນທຸກໍາ;
4. ມີຄວາມຄົງຕົວ ໝາຍຄວາມວ່າ ພັນພືດນັ້ນໆ ຕ້ອງສາມາດສະແດງຄຸນລັກສະນະຕ່າງໆ ຊຶ່ງເປັນຄຸນລັກສະນະປະຈໍາພັນໄດ້ທຸກຄັ້ງ ທີ່ມີການຂະຫຍາຍພັນ ຫຼື ອາດເວົ້າໄດ້ວ່າ ຕ້ອງສະແດງຄຸນລັກສະນະປະຈໍາພັນຄືເກົ່າທຸກຄັ້ງ ເມື່ອນໍາສ່ວນຂະຫຍາຍພັນໄປປູກ;
5. ຕ້ອງໃຫ້ພັນພືດນັ້ນ ມີການຕັ້ງຊື່ທີ່ແຕກຕ່າງອອກໄປ ຈາກພັນພືດທີ່ມີມາກ່ອນແລ້ວ.

**ມາດຕາ 62. ພັນພືດໃໝ່ ທີ່ບໍ່ສາມາດໃຫ້ຈົດທະບຽນ**

ພັນພືດໃໝ່ ທີ່ບໍ່ສາມາດໃຫ້ຈົດທະບຽນ ມີ ດັ່ງນີ້:

1. ພັນພືດໃໝ່ ທີ່ມີຜົນກະທົບຢ່າງຮ້າຍແຮງ ບໍ່ວ່າທາງກົງ ຫຼື ທາງອ້ອມ ຕໍ່ສຸຂານາໄມ, ສິ່ງແວດລ້ອມ ຫຼື ລະບຽບກົດໝາຍ;
2. ພັນພືດໃໝ່ ທີ່ໄດ້ຮັບຈາກການຕັດຕໍ່ສາຍພັນທຸກໍາ ທີ່ບໍ່ຜ່ານການປະເມີນຜົນກະທົບທາງດ້ານຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ຫຼື ລະບຽບກົດໝາຍ ຈາກໜ່ວຍງານວິຊາການ ຕາມຫຼັກການ ແລະ ວິທີການ ທີ່ກໍານົດຂຶ້ນໂດຍຂະແໜງການ ທີ່ກ່ຽວຂ້ອງ.

## ໝວດທີ 2
## ການຈົດທະບຽນ ພັນພືດໃໝ່

### ມາດຕາ 63. ການຍື່ນຄໍາຮ້ອງຂໍຈົດທະບຽນ ພັນພືດໃໝ່

ການຍື່ນຄໍາຮ້ອງຂໍຈົດທະບຽນ ແລະ ຫຼັກການພິຈາລະນາຄໍາຮ້ອງຂໍຈົດທະບຽນ ພັນພືດໃໝ່ ໃຫ້ປະຕິບັດຕາມມາດຕາ 27 ແລະ 28 ຂອງກົດໝາຍສະບັບນີ້.

### ມາດຕາ 64. ວັນບຸລິມະສິດ

ຜູ້ທີ່ໄດ້ຮັບວັນບຸລິມະສິດ ແມ່ນ ບຸກຄົນ ຫຼື ການຈັດຕັ້ງ ທີ່ຍື່ນຄໍາຮ້ອງຂໍຈົດທະບຽນພັນພືດ ຢູ່ຕ່າງປະເທດ ກ່ອນຜູ້ມາຍື່ນຄໍາຮ້ອງຂໍຈົດທະບຽນ ຢູ່ ສປປ ລາວ ຊຶ່ງກໍານົດບໍ່ເກີນ ສິບສອງເດືອນ ນັບແຕ່ວັນຍື່ນຄໍາຮ້ອງຢູ່ຕ່າງປະເທດມາເຖິງວັນຍື່ນຄໍາຮ້ອງຢູ່ ສປປ ລາວ.

ລະບຽບການກ່ຽວກັບວັນບຸລິມະສິດດັ່ງກ່າວ ນໍາໃຊ້ເຊັ່ນດຽວກັນ ສໍາລັບຜູ້ທີ່ຍື່ນຄໍາຮ້ອງຂໍຈົດທະບຽນຢູ່ ສປປ ລາວ ກ່ອນຍື່ນຢູ່ຕ່າງປະເທດ.

### ມາດຕາ 65. ສໍານວນຄໍາຮ້ອງຂໍຈົດທະບຽນ

ສໍານວນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ ປະກອບດ້ວຍເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍຈົດທະບຽນ ພັນພືດໃໝ່;
2. ໃບມອບສິດ;
3. ຮູບຖ່າຍ ແລະ ແບບຟອມສອບຖາມທາງດ້ານເຕັກນິກ;
4. ໃບຢັ້ງຢືນວັນບຸລິມະສິດ;
5. ໃບຮັບການຈ່າຍຄ່າທໍານຽມ.

ສໍານວນຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ຊຸດໜຶ່ງ ສາມາດໃຊ້ໄດ້ສະເພາະແຕ່ພັນພືດດຽວ ເທົ່ານັ້ນ. ສໍານວນຄໍາຮ້ອງ ໃຫ້ເຮັດເປັນພາສາລາວ ຫຼື ພາສາອັງກິດ, ຖ້າເຮັດເປັນພາສາອັງກິດ ຕ້ອງໄດ້ແປເປັນພາສາລາວ ພາຍໃນ ເກົ້າສິບວັນ ນັບແຕ່ວັນຍື່ນຄໍາຮ້ອງເປັນຕົ້ນໄປ ໂດຍມີການຢັ້ງຢືນ ຄວາມຖືກຕ້ອງຂອງການແປ.

### ມາດຕາ 66. ການສະໜອງຂໍ້ມູນເພີ່ມເຕີມ

ເມື່ອມີຄວາມຕ້ອງການ ຂອງໜ່ວຍງານຈົດທະບຽນ ຢູ່ ສປປ ລາວ ຜູ້ຍື່ນຄໍາຮ້ອງ ຕ້ອງໄດ້ຕອບສະໜອງຂໍ້ມູນເພີ່ມເຕີມ ກ່ຽວກັບການຈົດທະບຽນພັນພືດໃໝ່ນັ້ນຢູ່ຕ່າງປະເທດ ຊຶ່ງຕົນພວມຮ້ອງຂໍຈົດທະບຽນ ຢູ່ ສປປ ລາວ. ຂໍ້ມູນເພີ່ມເຕີມ ປະກອບດ້ວຍ:

1. ສໍາເນົາກ່ຽວກັບບົດລາຍງານ ຂອງການກວດສອບຄໍາຮ້ອງຂໍຈົດທະບຽນພັນພືດໃໝ່ຢູ່ຕ່າງປະເທດ;
2. ສໍາເນົາໃບຢັ້ງຢືນການຈົດທະບຽນກ່ຽວກັບພັນພືດໃໝ່ ຢູ່ຕ່າງປະເທດ.

**ມາດຕາ 67. ຂັ້ນຕອນຂອງການກວດສອບສຳນວນຄຳຮ້ອງ, ສຳນວນຄຳຮ້ອງທີ່ເປັນໂມຄະ, ການອອກໃບທະບຽນ, ການຈົດທະບຽນທີ່ເປັນໂມຄະ ຕໍ່ພັນພືດໃໝ່**

ຂັ້ນຕອນຂອງການກວດສອບສຳນວນຄຳຮ້ອງ, ສຳນວນຄຳຮ້ອງທີ່ເປັນໂມຄະ, ການອອກໃບທະບຽນ, ການຈົດທະບຽນທີ່ເປັນໂມຄະ ຕໍ່ພັນພືດໃໝ່ ໃຫ້ປະຕິບັດຕາມມາດຕາ 37, 38, 39, 41, 42, ແລະ 43 ຂອງກົດໝາຍສະບັບນີ້.

## ໝວດທີ 3
## ເຈົ້າຂອງສິດພັນພືດໃໝ່

**ມາດຕາ 68. ເຈົ້າຂອງພັນພືດໃໝ່**

ເຈົ້າຂອງພັນພືດໃໝ່ ແມ່ນ ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປັບປຸງ ຫຼື ໄດ້ຄົ້ນພົບ ແລະ ພັດທະນາພັນພືດ ທີ່ໄດ້ຮັບການປົກປ້ອງ. ໃນກໍລະນີ ທີ່ມີການວ່າຈ້າງໃຫ້ປັບປຸງ ຫຼື ຄົ້ນພົບ ແລະ ພັດທະນາພັນພືດ ໃຫ້ເກີດພັນພືດໃໝ່ນັ້ນ ພັນພືດໃໝ່ດັ່ງກ່າວ ແມ່ນ ເປັນຂອງຜູ້ວ່າຈ້າງ ເວັ້ນເສຍແຕ່ມີການຕົກລົງກັນໄວ້ຢ່າງອື່ນ.

**ມາດຕາ 69. ສິດ ຂອງເຈົ້າຂອງພັນພືດໃໝ່**

ສິດ ຂອງເຈົ້າຂອງພັນພືດໃໝ່ ແມ່ນ ໃຫ້ປະຕິບັດຕາມມາດຕາ 45 ຂອງກົດໝາຍ ສະບັບນີ້.

**ມາດຕາ 70. ອາຍຸການປົກປ້ອງ ພັນພືດໃໝ່**

ອາຍຸການ ຂອງພັນພືດໃໝ່ ມີກຳນົດ ຊາວຫ້າປີ ສຳລັບພືດຢືນຕົ້ນ ແລະ ສິບຫ້າປີ ສຳລັບພືດລົ້ມລຸກ ນັບແຕ່ວັນຍື່ນຄຳຮ້ອງຂໍຈົດທະບຽນ ເປັນຕົ້ນໄປ.

ເພື່ອຮັກສາອາຍຸການປົກປ້ອງ ເຈົ້າຂອງພັນພືດໃໝ່ ຕ້ອງຈ່າຍຄ່າທຳນຽມແຕ່ລະປີ.

## ໝວດທີ 4
## ຂໍ້ຈຳກັດ ແລະ ພັນທະ ກ່ຽວກັບພັນພືດໃໝ່

**ມາດຕາ 71. ຂໍ້ຍົກເວັ້ນ ໃນກໍລະນີຈຳເປັນ**

ໃນກໍລະນີຈຳເປັນ ເພື່ອຮັບປະກັນຄວາມໝັ້ນຄົງທາງອາຫານ, ສະກັດກັ້ນການຜູກຂາດທາງດ້ານການຄ້າ ຫຼື ເພື່ອຄວາມຈຳເປັນຢ່າງອື່ນຂອງສາທາລະນະ ນັ້ນ ລັດຖະບານ ສາມາດອອກປະກາດໃຫ້ບຸກຄົນທົ່ວໄປ ນຳໃຊ້ພັນພືດໃໝ່ນັ້ນ ແຕ່ຕ້ອງໄດ້ທົດແທນທີ່ເໝາະສົມແກ່ເຈົ້າຂອງສິດພັນພືດໃໝ່. ການປະກາດດັ່ງກ່າວ ຕ້ອງໄດ້ກຳນົດເວລາການນຳໃຊ້ທີ່ແນ່ນອນ ລວມທັງກຳນົດອັດຕາຄ່າທົດແທນໄວ້ດ້ວຍ.

ຫຼັງຈາກໄດ້ດຳເນີນການດັ່ງກ່າວແລ້ວ ແຕ່ຍັງບໍ່ສາມາດແກ້ໄຂບັນຫາສະບຽງອາຫານ ຫຼື ການຜູກຂາດທາງດ້ານການຄ້າໄດ້ຢ່າງມີປະສິດທິພາບ ນັ້ນ ລັດຖະບານ ມີສິດຍົກເລີກການຈົດທະບຽນ ພັນພືດໃໝ່ນັ້ນ ໂດຍມີການທົດແທນຢ່າງເໝາະສົມ.

**ມາດຕາ 72. ຂໍ້ຍົກເວັ້ນ ກ່ຽວກັບການນຳໃຊ້ ພັນພືດໃໝ່**

ການກະທຳດັ່ງຕໍ່ໄປນີ້ ຈະບໍ່ຖືວ່າເປັນການລະເມີດສິດກ່ຽວກັບພັນພືດໃໝ່ ທີ່ໄດ້ຖືກປົກປ້ອງເພື່ອ:

1. ຈຸດປະສົງສ່ວນຕົວ ແລະ ບໍ່ໄດ້ນຳໃຊ້ເຂົ້າໃນທາງການຄ້າ;
2. ຈຸດປະສົງໃນການທົດລອງ ແລະ ການຄົ້ນຄວ້າ;
3. ຈຸດປະສົງໃນການປັບປຸງພືດ ພັນອື່ນ;
4. ການເພາະປູກ ຂອງຄອບຄົວຊາວກະສິກອນ ໃນລະດູການຕໍ່ໄປ.

**ມາດຕາ 73. ພັນທະ ຂອງເຈົ້າຂອງພັນພືດໃໝ່**

ພັນທະ ຂອງເຈົ້າຂອງພັນພືດໃໝ່ ແມ່ນ ໃຫ້ປະຕິບັດຕາມມາດຕາ 58 ຂອງກົດໝາຍສະບັບນີ້.

## ພາກທີ V
## ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

### ໝວດທີ 1
### ເງື່ອນໄຂຂອງລິຂະສິດ

**ມາດຕາ 74. ເງື່ອນໄຂການປົກປ້ອງລິຂະສິດ**

ເງື່ອນໄຂການປົກປ້ອງລິຂະສິດ ປະກອບດ້ວຍ:

1. ຜົນງານດ້ານສິລະປະກຳ ໝາຍເຖິງ ຜົນງານຕ່າງໆ ເຊັ່ນ:
   - 1.1. ຮູບວາດ, ຮູບແຕ້ມ, ຮູບແກະສະຫຼັກ, ການເກັບຂີດລາຍພິມ ຫຼື ລາຍແພ ແລະ ຜົນງານວິຈິດຕະກຳ ອື່ນໆ;
   - 1.2. ຮູບປັ້ນ, ຮູບຄວັດຫີນ ແລະ ຜົນງານປະຕິມາກຳ ອື່ນໆ;
   - 1.3. ການອອກແບບອາຄານ ຫຼື ສິ່ງປຸກສ້າງ, ການອອກແບບຕົບແຕ່ງພາຍໃນ ພາຍນອກ ແລະ ຜົນງານສະຖາປະນິກອື່ນໆ;
   - 1.4. ຮູບຖ່າຍດ້ວຍວິທີການເຕັກນິກຕ່າງໆ;
   - 1.5. ຮູບຈຳລອງ, ແຜນທີ່, ແຜນຜັງ, ຮູບສະເກັດ ຫຼື ຮູບສາມມິຕິ ກ່ຽວກັບພູມສາດ, ພູມປະເທດ ຫຼື ວິທະຍາສາດ;

1.6. ດົນຕີປະກອບບົດລະຄອນ, ແບບລະຄອນໄບ້ ຫຼື ລະຄອນຈັດສາກ, ການອອກແບບທ່າຟ້ອນ, ທ່າເຕັ້ນ ແລະ ຜົນງານອື່ນ ທີ່ປະດິດຄິດແຕ່ງຂຶ້ນ ເພື່ອການສະແດງ;

1.7. ດົນຕີ ຊຶ່ງໝາຍເຖິງ ຜົນງານກ່ຽວກັບ ທຳນອງ ແລະ ເນື້ອຮ້ອງ ຫຼື ທຳນອງຢ່າງດຽວ ແລະ ລວມເຖິງໂນດເພງ ທີ່ໄດ້ແຍກ ແລະ ຮຽບຮຽງສຽງປະສານແລ້ວ;

1.8. ບັນທຶກ ສຽງ-ພາບ ຊຶ່ງໝາຍເຖິງ ການບັນທຶກຜົນງານລົງໃສ່ອຸປະກອນບັນທຶກ ເຊັ່ນ:ແຜນສຽງ, ກະແຊັດ, ກະແຊັດວີດີໂອ, ແຜ່ນເລເຊີດິສ, ແຜ່ນຊີດີ, ແຜ່ນວີດີໂອຊີດີ, ແຜ່ນດີວີດີ, ເອັມພີສາມ, ເອັມພີສີ່ ຫຼື ການບັນທຶກ ດ້ວຍວິທີອື່ນໆ;

1.9. ຮູບເງົາ ຊຶ່ງໝາຍເຖິງ ການລຳດັບພາບ ທີ່ສາມາດນຳອອກສາຍຕໍ່ເນື່ອງໄດ້ເປັນຮູບເງົາ ແລະ ສາມາດບັນທຶກລົງໃສ່ວັດສະດຸອື່ນໆ ທີ່ສາມາດນຳອອກສາຍຕໍ່ເນື່ອງໄດ້ຄືກັນ ແລະ ລວມເຖິງສຽງປະກອບຮູບເງົາ.

2. ຜົນງານດ້ານວັນນະກຳ ໝາຍເຖິງ ຜົນງານຕ່າງໆ ເຊັ່ນ:

ປຶ້ມອ່ານ, ວິທະຍານິພົນ, ແຜ່ນພັບ, ວາລະສານ, ສິ່ງພິມ ແລະ ສິ່ງຂີດຂຽນອື່ນໆ;

ບົດປາຖະກະຖາ, ບົດຄຳເຫັນ, ສຸນທອນພົດ, ບົດຄຳສອນ, ບົດສອນ ແລະ ບົດເວົ້າອື່ນໆ;

ບົດລະຄອນ, ບົດເລື່ອງ;

ໂປຣແກຣມຄອມພິວເຕີ ແລະ ການລວບລວມຂໍ້ມູນ.

## ມາດຕາ 75. ຜົນງານທີ່ສືບເນື່ອງຈາກລິຂະສິດ

ຜົນງານທີ່ສືບເນື່ອງຈາກລິຂະສິດ ແມ່ນ ຜົນງານທີ່ໄດ້ແປມາຈາກພາສາໃດໜຶ່ງ ເປັນພາສາລາວ ຫຼື ພາສາອື່ນ ຫຼື ຈາກພາສາລາວ ເປັນພາສາອື່ນ, ຖືກປັບປຸງ, ດັດແກ້, ປ່ຽນຮູບ, ລວບລວມ, ໃຫ້ຄວາມໝາຍ, ໃຫ້ຄຳອະທິບາຍ, ຜົນງານທີ່ໄດ້ຄັດເລືອກ ຫຼື ເລືອກເຟັ້ນມາ.

ສຳລັບເນື້ອໃນການປົກປ້ອງຜົນງານດັ່ງກ່າວ ໃຫ້ປະຕິບັດຕາມມາດຕາ 74 ຂອງກົດໝາຍສະບັບນີ້ ໂດຍບໍ່ໃຫ້ແຕະຕ້ອງເຖິງຜົນງານ ທີ່ກຳນົດໄວ້ໃນມາດຕາດັ່ງກ່າວ.

## ມາດຕາ 76. ສິ່ງທີ່ບໍ່ສາມາດປົກປ້ອງເປັນລິຂະສິດ

ສິ່ງທີ່ບໍ່ສາມາດປົກປ້ອງເປັນລິຂະສິດ ມີ ດັ່ງນີ້:

1. ຂໍ້ມູນຊຶ່ງມີລັກສະນະເປັນພຽງຂ່າວສານ;
2. ບັນດານິຕິກຳຕ່າງໆ, ລະບຽບການປົກຄອງ, ເອກະສານທາງດ້ານຕຸລາການ ແລະ ການແປເປັນທາງການ;
3. ກຳມະວິທີ, ລະບົບ, ວິທີການຈັດຕັ້ງປະຕິບັດ, ນິຍາມ, ຫຼັກການ ແລະ ສະຖິຕິ.

## ໝວດທີ 2
## ເງື່ອນໄຂຂອງສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 77. ຜູ້ມີເງື່ອນໄຂ ທີ່ຈະໄດ້ຮັບການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ**

ຜູ້ທີ່ຈະໄດ້ຮັບການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ ຕ້ອງແມ່ນ:

1. ນັກສະແດງ, ນັກຮ້ອງ, ນັກດົນຕີ, ນັກຟ້ອນ ແລະ ຜູ້ອື່ນໆ ທີ່ສະແດງກ່ຽວກັບຜົນງານທາງດ້ານສິລະປະກຳ ແລະ ວັນນະກຳ ເອີ້ນວ່າ ຜູ້ສະແດງ;
2. ບຸກຄົນ ຫຼື ການຈັດຕັ້ງ ທີ່ເຮັດການຄວບຄຸມການບັນທຶກສຽງ-ພາບ ຂອງການສະແດງຄັ້ງທຳອິດ ເອີ້ນວ່າ ຜູ້ຜະລິດການບັນທຶກສຽງ-ພາບ;
3. ການຈັດຕັ້ງທີ່ລິເລີ່ມ ແລະ ເຮັດການກະຈາຍສຽງ, ກະຈາຍພາບ ຫຼື ກະຈາຍສຽງ-ພາບ ເອີ້ນວ່າ ອົງການກະຈາຍສຽງ-ພາບ.

**ມາດຕາ 78. ເງື່ອນໄຂ ຂອງກິດຈະກຳ ທີ່ຈະໄດ້ຮັບການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ**

ສິດກ່ຽວຂ້ອງກັບລິຂະສິດ ທີ່ຈະໄດ້ຮັບການປົກປ້ອງ ຕ້ອງແມ່ນ:

1. ການສະແດງ:
   - 1.1 ການສະແດງຂອງພົນລະເມືອງລາວ, ຄົນຕ່າງດ້າວ ຫຼື ຜູ້ບໍ່ມີສັນຊາດ ຢູ່ພາຍໃນ ຫຼື ຕ່າງປະເທດ;
   - 1.2 ການສະແດງຂອງຄົນຕ່າງປະເທດ ຢູ່ ສປປ ລາວ;
   - 1.3 ການສະແດງທີ່ຖືກປົກປ້ອງຕາມສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.
2. ການບັນທຶກສຽງ-ພາບ:
   - 2.1 ການບັນທຶກສຽງ-ພາບ ຂອງຜູ້ຜະລິດ ທີ່ມີສັນຊາດລາວ;
   - 2.2 ການບັນທຶກສຽງ-ພາບ ທີ່ໄດ້ຖືກປົກປ້ອງຕາມສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.
3. ລາຍການກະຈາຍສຽງ-ພາບ ຜ່ານສັນຍານດາວທຽມທີ່ເຂົ້າລະຫັດ:

   ລາຍການກະຈາຍສຽງ-ພາບ ຜ່ານສັນຍານດາວທຽມທີ່ເຂົ້າລະຫັດ ຂອງອົງການ ກະຈາຍສຽງ-ພາບ ທີ່ເປັນສັນຊາດລາວ;

   ລາຍການກະຈາຍສຽງ-ພາບ ຜ່ານສັນຍານດາວທຽມທີ່ເຂົ້າລະຫັດ ຂອງອົງການກະຈາຍສຽງ-ພາບ ທີ່ໄດ້ຖືກປົກປ້ອງຕາມສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ.
4. ການສະແດງ, ການບັນທຶກສຽງ-ພາບ ແລະ ລາຍການກະຈາຍສຽງ-ພາບ ຜ່ານສັນຍານດາວທຽມທີ່ເຂົ້າລະຫັດ ຕ້ອງໄດ້ຮັບການປົກປ້ອງ ດັ່ງທີ່ກຳນົດໃນ ຂໍ້ 1, ຂໍ້ 2, ຂໍ້ 3 ຂອງມາດຕານີ້ ໂດຍບໍ່ໃຫ້ແຕະຕ້ອງເຖິງຜົນງານທີ່ໄດ້ກຳນົດໄວ້ໃນມາດຕານີ້.

## ໝວດທີ 3
## ການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 79. ການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ**

ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ແມ່ນ ສິດທີ່ເກີດຂຶ້ນໂດຍທັນທີ ເມື່ອມີການປະດິດຄິດແຕ່ງຜົນງານນັ້ນ ໂດຍບໍ່ຕ້ອງຈົດທະບຽນ ແຕ່ສາມາດແຈ້ງຜົນງານໄວ້ນຳ ອົງການຈັດຕັ້ງທີ່ຮັບຜິດຊອບວຽກງານດັ່ງກ່າວ ເພື່ອເປັນຫຼັກຖານ ຫຼື ເປັນຂໍ້ມູນໄວ້ ໂດຍສະເພາະໃນເວລາມີການລະເມີດ ຫຼື ມີຂໍ້ຂັດແຍ່ງ.

**ມາດຕາ 80. ສຳນວນການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ**

ສຳນວນການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ປະກອບດ້ວຍ:

1. ຄຳຮ້ອງຂໍແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ;
2. ຜົນງານ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ທີ່ປະດິດຄິດແຕ່ງ;
3. ຫຼັກຖານອື່ນໆ ທີ່ກ່ຽວຂ້ອງ ເຊັ່ນ: ສຳເນົາບັດປະຈຳຕົວ, ໃບທະບຽນວິສາຫະກິດ (ໃນກໍລະນີທີ່ເປັນການຈັດຕັ້ງ), ໃບມອບສິດ (ໃນກໍລະນີທີ່ຜູ້ມາຍື່ນຄຳຮ້ອງ ບໍ່ແມ່ນເຈົ້າຂອງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ).

**ມາດຕາ 81. ການບັນທຶກການແຈ້ງ ລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ**

ອົງການຈັດຕັ້ງທີ່ຮັບຜິດຊອບວຽກງານ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຈະທຳການກວດສອບສຳນວນການແຈ້ງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ແລ້ວບັນທຶກລົງໃນປຶ້ມບັນທຶກການແຈ້ງຂໍ້ມູນ ແລະ ອອກໃບຮັບແຈ້ງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດໃຫ້ເພື່ອເປັນຫຼັກຖານ. ໃບຮັບແຈ້ງລິຂະສິດ ຫຼື ສິດກ່ຽວຂ້ອງກັບລິຂະສິດ ບໍ່ກຳນົດສິດໃດໆຂອງຜູ້ແຈ້ງ.

## ໝວດທີ 4
## ເຈົ້າຂອງລິຂະສິດ

**ມາດຕາ 82. ເຈົ້າຂອງລິຂະສິດ**

ເຈົ້າຂອງລິຂະສິດ ແມ່ນ ບຸກຄົນ ຫຼື ການຈັດຕັ້ງ ດັ່ງນີ້:

1. ຜູ້ປະດິດຄິດແຕ່ງ;
2. ຜູ້ຮ່ວມປະດິດຄິດແຕ່ງ;
3. ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ວ່າຈ້າງ ຜູ້ປະດິດຄິດແຕ່ງ;
4. ຜູ້ໄດ້ຮັບມອບໂອນລິຂະສິດ;
5. ຜູ້ສືບທອດມູນມໍລະດົກ;
6. ລັດ.

**ມາດຕາ 83. ປະເພດ ເຈົ້າຂອງລິຂະສິດ**

ເຈົ້າຂອງລິຂະສິດ ມີ ສີ່ ປະເພດຕົ້ນຕໍ ດັ່ງນີ້:

1. ເຈົ້າຂອງລິຂະສິດທົ່ວໄປ ທີ່ພົວພັນເຖິງວຽກງານສິລະປະກຳ ແລະ ວັນນະກຳ;
2. ເຈົ້າຂອງລິຂະສິດ ຮູບເງົາ ແລະ ລະຄອນ;
3. ເຈົ້າຂອງໂປຣແກຣມຄອມພິວເຕີ;
4. ເຈົ້າຂອງສິລະປະກຳ ແລະ ວັນນະກຳ ພື້ນເມືອງ ຊຶ່ງແມ່ນຊຸມຊົນໃນທ້ອງຖິ່ນນັ້ນ.

**ມາດຕາ 84. ສິດ ຂອງເຈົ້າຂອງລິຂະສິດ**

ເຈົ້າຂອງລິຂະສິດ ມີສິດ ດັ່ງນີ້:

1. ຕັ້ງຊື່ຜົນງານຂອງຕົນ;
2. ໃສ່ຊື່ຈິງ, ຊື່ແຝງ ຫຼື ນາມປາກກາ ໃນຜົນງານ;
3. ສະແດງຜົນງານຕໍ່ໜ້າສາທາລະນະຊົນ;
4. ເຜີຍແຜ່ຜົນງານ ຫຼື ອະນຸຍາດໃຫ້ຜູ້ອື່ນນຳໄປເຜີຍແຜ່ຜົນງານດັ່ງກ່າວ;
5. ຜະລິດຊ້ຳ ຫຼື ດັດແປງ ຜົນງານ;
6. ຈໍລະຈອນແຈກຢາຍ ຜົນງານຕົ້ນສະບັບ ຫຼື ຜົນງານອັດສຳເນົາ ຕໍ່ສາທາລະນະຊົນ;
7. ສື່ສານຜົນງານ ຕໍ່ສາທາລະນະຊົນ ດ້ວຍລະບົບສື່ສານທີ່ໃຊ້ສາຍ ຫຼື ບໍ່ໃຊ້ສາຍ ໂດຍຜ່ານເຄືອຂ່າຍຂໍ້ມູນຂ່າວສານເອເລັກໂຕຼນິກ ຫຼື ດ້ວຍລະບົບເຕັກນິກອື່ນໆ;
8. ສ້າງຜົນງານສືບເນື່ອງ;
9. ໃຫ້ເຊົ່າຜົນງານຕົ້ນສະບັບ ຫຼື ສຳເນົາຂອງຮູບເງົາ ຫຼື ໂປຣແກຼມຄອມພິວເຕີ;
10. ໃຫ້ຜົນປະໂຫຍດ ແກ່ຜູ້ອື່ນ ຈາກລິຂະສິດຂອງຕົນ ເຊັ່ນ: ມອບລິຂະສິດ ຂອງຕົນໃຫ້ຜູ້ອື່ນ ເພື່ອການຄົ້ນຄວ້າວິໄຈ;
11. ປົກປ້ອງທຸກໆສ່ວນທັງໝົດ ຂອງຜົນງານ, ບໍ່ອະນຸຍາດໃຫ້ບຸກຄົນອື່ນດັດແກ້, ເພີ່ມເຕີມ, ຕັດອອກ ຫຼື ປັບປ່ຽນອື່ນໆ ບໍ່ວ່າດ້ວຍວິທີການໃດກໍຕາມ ທີ່ຈະສົ່ງຜົນເສຍຫາຍຕໍ່ກຽດ ແລະ ຊື່ສຽງຂອງເຈົ້າຂອງລິຂະສິດ.

**ມາດຕາ 85. ເຈົ້າຂອງລິຂະສິດ ຮູບເງົາ ແລະ ລະຄອນ**

ເຈົ້າຂອງລິຂະສິດ ຮູບເງົາ ແລະ ລະຄອນ ປະກອບດ້ວຍ:

1. ບຸກຄົນຜູ້ທີ່ເປັນອຳນວຍການສ້າງ, ຜູ້ຮຽບຮຽງ, ນັກຮ້ອງ, ຜູ້ຄວບຄຸມການສະແດງ, ຜູ້ປະພັນ, ຜູ້ຈັດສາກ, ຜູ້ຄວບຄຸມສຽງ, ຜູ້ຄວບຄຸມແສງ, ຜູ້ອອກແບບສະຖານທີ່ຖ່າຍທຳ, ຜູ້ຄວບຄຸມອຸປະກອນສະຖານທີ່ຖ່າຍທຳ, ຜູ້ຄວບຄຸມທາງດ້ານເຕັກນິກ ແລະ ຜູ້ອື່ນໆ ທີ່ມີສ່ວນພົວພັນກັບຜົນງານການສ້າງຮູບເງົາ ແລະ ລະຄອນ.

    ເຈົ້າຂອງລິຂະສິດ ຮູບເງົາ ແລະ ລະຄອນ ຈະໄດ້ຮັບສິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 84 ຂອງກົດໝາຍສະບັບນີ້ ແລະ ສິດອື່ນ ຕາມທີ່ໄດ້ຕົກລົງກັນ;

2. ບຸກຄົນ ຫຼື ການຈັດຕັ້ງ ທີ່ລົງທຶນ ທາງດ້ານການເງິນ, ວັດຖຸອຸປະກອນ ແລະ ເຄື່ອງອຳນວຍຄວາມສະດວກທາງດ້ານເຕັກນິກ ໃນຜົນງານການສ້າງຮູບເງົາ ແລະ ຜົນງານການສ້າງລະຄອນ ຕ້ອງເປັນເຈົ້າຂອງສິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 83 ແລະ 84 ຂອງກົດໝາຍສະບັບນີ້;
3. ບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະບຸໄວ້ໃນຂໍ້ 2 ຂອງມາດຕານີ້ ມີພັນທະຈ່າຍຄ່າທົດແທນ ແລະ ຜົນປະໂຫຍດທາງດ້ານວັດຖຸຕ່າງໆ ຕາມການຕົກລົງ ໃຫ້ແກ່ບັນດາຜູ້ທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້.

**ມາດຕາ 86. ລິຂະສິດຕໍ່ໂປຣແກຼມຄອມພິວເຕີ ແລະ ການລວບລວມຂໍ້ມູນ**

ໂປຣແກຼມຄອມພິວເຕີ ແມ່ນ ຊຸດຄຳສັ່ງ ຫຼື ສິ່ງອື່ນໃດໜຶ່ງ ທີ່ນຳໄປໃຊ້ກັບເຄື່ອງຄອມພິວເຕີ ເພື່ອເຮັດໃຫ້ເຄື່ອງຄອມພິວເຕີທຳງານ ຫຼື ເພື່ອໃຫ້ໄດ້ຮັບຜົນຢ່າງໃດຢ່າງໜຶ່ງ ໃນນີ້ບໍ່ວ່າຈະເປັນພາສາໂປຣແກຼມຄອມພິວເຕີ ໃນລັກສະນະໃດກໍຕາມ ຈະໄດ້ຖືກປົກປ້ອງຄືກັນກັບຜົນງານທາງດ້ານວັນນະກຳ.

ການລວບລວມຂໍ້ມູນ ແມ່ນ ການທ້ອນໂຮມຂໍ້ມູນ ເຂົ້າມາໄວ້ຢູ່ບ່ອນດຽວ ທີ່ສະແດງໃຫ້ເຫັນໃນການຄັດເລືອກ, ໃນການຈັດລຳດັບຂໍ້ມູນຢູ່ໃນຮູບແບບເອເລັກໂຕຼນິກ ຫຼື ຮູບແບບອື່ນ; ການປົກປ້ອງລິຂະສິດການລວບລວມຂໍ້ມູນ ຈະບໍ່ລວມເອົາການປົກປ້ອງຂໍ້ມູນ ທີ່ມີລິຂະສິດຢູ່ແລ້ວ ແລະບໍ່ສ້າງຜົນເສຍຫາຍໃຫ້ແກ່ເຈົ້າຂອງລິຂະສິດ ຂໍ້ມູນເຫຼົ່ານັ້ນ.

**ມາດຕາ 87. ລິຂະສິດຕໍ່ຜົນງານ ສິລະປະກຳ ແລະ ວັນນະກຳ ພື້ນເມືອງ**

ຜົນງານ ສິລະປະກຳ ແລະ ວັນນະກຳ ພື້ນເມືອງ ແມ່ນ ຜົນຜະລິດຂອງການທ້ອນໂຮມການປະດິດຄິດແຕ່ງຂຶ້ນ ຕາມປະເພນີຂອງຊຸມຊົນ ຫຼື ຂອງກຸ່ມຄົນ ທີ່ສະທ້ອນໃຫ້ເຫັນເຖິງວິຖີຊີວິດການເປັນຢູ່ຂອງຊຸມຊົນ ຊຶ່ງການສະແດງນັ້ນ ສອດຄ່ອງກັບຄຸນລັກສະນະ ທາງດ້ານວັດທະນາທຳ ແລະ ສັງຄົມ ຂອງຊຸມຊົນເຫຼົ່ານັ້ນ, ເງື່ອນໄຂ ແລະ ຄຸນຄ່າ ທີ່ຖືກເລົ່າສືບຕໍ່ກັນມາປາກຕໍ່ປາກ ຫຼື ຮຽນແບບ ຫຼື ເຮັດຄ້າຍຄືກັນ ເຊັ່ນ:

1. ນິທານພື້ນເມືອງ, ກາບກອນ, ຄຳຜະຫຍາ, ຄຳສຸພາສິດ;
2. ເພງພື້ນເມືອງ, ຂັບລຳພື້ນເມືອງ, ດົນຕີພື້ນເມືອງ;
3. ຟ້ອນພື້ນເມືອງ, ການລະຫຼິ້ນພື້ນເມືອງ, ພິທີກຳພື້ນເມືອງ ແລະ ການແຂ່ງຂັນແບບພື້ນເມືອງ;
4. ເຄື່ອງດົນຕີ, ພາບວາດ, ຮູບແຕ້ມ, ຮູບສີ, ການແກະສະລັກ, ແບບສະຖາປະນິກ ທີ່ໄດ້ຖືກປະດິດຄິດແຕ່ງຂຶ້ນ ດ້ວຍວັດຖຸປະກອນໃດໜຶ່ງຂອງພື້ນເມືອງ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເອົາຜົນງານທາງດ້ານ ສິລະປະກຳ, ວັນນະກຳ ພື້ນເມືອງໄປນຳໃຊ້ ຕ້ອງບົ່ງບອກເຖິງແຫຼ່ງທີ່ມາຂອງການສະແດງພື້ນເມືອງ ແລະ ຮັກສາຄຸນຄ່າດັ້ງເດີມຂອງຜົນງານນັ້ນ.

## ໝວດທີ 5
## ເຈົ້າຂອງ ສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 88. ເຈົ້າຂອງ ສິດກ່ຽວຂ້ອງກັບລິຂະສິດ**

ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ ມີ ດັ່ງນີ້:

1. ຜູ້ສະແດງ;
2. ຜູ້ຜະລິດການບັນທຶກສຽງ-ພາບ;
3. ອົງການກະຈາຍສຽງ-ພາບ.

**ມາດຕາ 89. ສິດ ຂອງຜູ້ສະແດງ**

ຜູ້ສະແດງ ມີສິດ ດັ່ງນີ້:

1. ໃສ່ຊື່ຂອງຜູ້ສະແດງໃນການສະແດງ ຫຼື ໃສ່ໃນການແຈກຢາຍແຜ່ນສຽງ-ພາບ ຫຼື ການກະຈາຍສຽງ-ພາບ ຂອງການສະແດງນັ້ນ;
2. ປົກປ້ອງ ພາບການສະແດງ ແລະ ບໍ່ອະນຸຍາດໃຫ້ບຸກຄົນອື່ນ ດັດແກ້, ປັບປຸງ, ເພີ່ມເຕີມ ຫຼື ຕັດອອກ ແລະ ອື່ນໆ ບໍ່ວ່າດ້ວຍວິທີການໃດກໍຕາມ ທີ່ຈະສົ່ງຜົນເສຍຫາຍຕໍ່ກຽດ ແລະ ຊື່ສຽງຂອງຜູ້ສະແດງນັ້ນ;
3. ບັນທຶກການສະແດງສົດ ຂອງຜູ້ສະແດງ ລົງໃນແຜ່ນສຽງ-ພາບ;
4. ຜະລິດຊ້ຳ ການສະແດງສົດ ຂອງຜູ້ສະແດງ ລົງໃນແຜ່ນສຽງ-ພາບ ໂດຍທາງກົງ ຫຼື ທາງອ້ອມ;
5. ກະຈາຍສຽງ-ພາບ ແລະ ສື່ສານການສະແດງ ທີ່ຍັງບໍ່ທັນໄດ້ບັນທຶກ ອອກສູ່ສາທາລະນະຊົນ;
6. ແຈກຢາຍ ການບັນທຶກການສະແດງ ຫຼື ການສຳເນົາ ການບັນທຶກດັ່ງກ່າວ ຕໍ່ສາທາລະນະຊົນ ດ້ວຍການຂາຍ, ການໃຫ້ເຊົ່າ ຫຼື ດ້ວຍວິທີການເຕັກນິກອື່ນ ທີ່ສາທາລະນະຊົນ ເຂົ້າເຖິງໄດ້.

**ມາດຕາ 90. ສິດ ຂອງຜູ້ຜະລິດການບັນທຶກສຽງ-ພາບ**

ຜູ້ຜະລິດການບັນທຶກສຽງ-ພາບ ມີສິດ ດັ່ງນີ້:

1. ດຳເນີນການດ້ວຍຕົນເອງ ຫຼື ອະນຸຍາດໃຫ້ຜູ້ອື່ນດຳເນີນການ:
   - 1.1. ຜະລິດຊ້ຳການບັນທຶກສຽງ-ພາບ ໂດຍທາງກົງ ຫຼື ທາງອ້ອມ;
   - 1.2. ແຈກຢາຍການບັນທຶກສຽງ-ພາບ ສະບັບຕົ້ນ ຫຼື ສະບັບສຳເນົາ ຕໍ່ສາທາລະນະຊົນ ດ້ວຍການຂາຍ, ການໃຫ້ເຊົ່າ ຫຼື ດ້ວຍວິທີການເຕັກນິກອື່ນ ທີ່ສາທາລະນະຊົນ ເຂົ້າເຖິງໄດ້.
2. ໄດ້ຮັບຜົນປະໂຫຍດໃນເວລາມີການແຈກຢາຍ ການບັນທຶກສຽງ-ພາບຂອງຕົນ ອອກສູ່ສາທາລະນະຊົນ.

**ມາດຕາ 91. ສິດ ຂອງອົງການກະຈາຍສຽງ-ພາບ**

ອົງການກະຈາຍສຽງ-ພາບ ມີສິດ ດັ່ງນີ້:

1. ດຳເນີນການດ້ວຍຕົນເອງ ຫຼື ອະນຸຍາດໃຫ້ຜູ້ອື່ນດຳເນີນການ:
   1.1. ກະຈາຍ ຫຼື ກະຈາຍຊ້ຳຄືນ ການກະຈາຍສຽງ-ພາບ ຂອງຕົນ;
   1.2. ເຜີຍແຜ່ ການກະຈາຍສຽງ-ພາບ ຂອງຕົນ ອອກສູ່ສາທາລະນະຊົນ;
   1.3. ບັນທຶກ ການກະຈາຍສຽງ-ພາບ ຂອງຕົນ;
   1.4. ຜະລິດຊ້ຳ ການບັນທຶກ ການກະຈາຍສຽງ-ພາບ ຂອງຕົນ.
2. ໄດ້ຮັບຜົນປະໂຫຍດໃນເວລາລາຍການກະຈາຍສຽງ-ພາບຂອງຕົນຖືກບັນທຶກ, ຖືກກະຈາຍ ແລະ ເຜີຍແຜ່ ອອກສູ່ສາທາລະນະຊົນ.

**ມາດຕາ 92. ສິດ ຂອງຜູ້ລົງທຶນໃສ່ການສະແດງ**

ຜູ້ລົງທຶນໃສ່ການສະແດງ ມີສິດຄ້າຍຄືກັນກັບຜູ້ສະແດງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 89 ຂອງກົດໝາຍສະບັບນີ້.

## ໝວດທີ 6
## ອາຍຸການປົກປ້ອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 93. ອາຍຸການປົກປ້ອງລິຂະສິດ**

ອາຍຸການປົກປ້ອງລິຂະສິດ ມີແຕ່ລະກໍລະນີ ດັ່ງນີ້:

1. ອາຍຸການປົກປ້ອງລິຂະສິດ ແມ່ນ ນັບແຕ່ມື້ປະດິດຄິດແຕ່ງຜົນງານນັ້ນຂຶ້ນ ແລະ ມີອາຍຸການຊົ່ວໄລຍະຊີວິດຂອງຜູ້ປະດິດຄິດແຕ່ງ ບວກກັບ ຫ້າສິບປີ ນັບແຕ່ມື້ເສຍຊີວິດ ຂອງຜູ້ປະດິດຄິດແຕ່ງຜົນງານດັ່ງກ່າວ ເປັນຕົ້ນໄປ. ໃນກໍລະນີ ທີ່ຜູ້ປະດິດຄິດແຕ່ງຜົນງານ ມີຫຼາຍຄົນຮ່ວມກັນ ໄລຍະຂອງການປົກປ້ອງລິຂະສິດ ມີອາຍຸຊົ່ວໄລຍະຊີວິດ ຂອງຜູ້ຮ່ວມປະດິດຄິດແຕ່ງຜູ້ສຸດທ້າຍ ບວກກັບ ຫ້າສິບປີ ນັບແຕ່ມື້ຜູ້ກ່ຽວເສຍຊີວິດ ເປັນຕົ້ນໄປ;
2. ໃນກໍລະນີທີ່ຜູ້ປະດິດຄິດແຕ່ງເປັນການຈັດຕັ້ງ ອາຍຸການປົກປ້ອງລິຂະສິດ ແມ່ນ ຫ້າສິບປີ ນັບແຕ່ມື້ໄດ້ປະດິດຄິດແຕ່ງຜົນງານຂຶ້ນ ເປັນຕົ້ນໄປ.

   ໃນກໍລະນີທີ່ໄດ້ມີການໂຄສະນາເຜີຍແຜ່ຜົນງານນັ້ນ ອາຍຸການປົກປ້ອງລິຂະສິດ ຈະມີອາຍຸ ຫ້າສິບປີ ນັບແຕ່ມື້ໄດ້ມີການເຜີຍແຜ່ຜົນງານຄັ້ງທຳອິດ ເປັນຕົ້ນໄປ.

   ໃນກໍລະນີ ທີ່ຜູ້ປະດິດຄິດແຕ່ງ ໃຊ້ນາມແຝງ ໂດຍທີ່ບໍ່ຮູ້ວ່າ ແມ່ນຜູ້ໃດເປັນຜູ້ປະດິດຄິດແຕ່ງ ອາຍຸການປົກປ້ອງ ແມ່ນ ໃຫ້ປະຕິບັດຕາມວັກ 1 ຂອງຂໍ້ 2 ຂອງມາດຕານີ້.

ໃນກໍລະນີ ທີ່ຮູ້ຈັກເຈົ້າຂອງຜົນງານທີ່ໃຊ້ນາມແຝງ ອາຍຸການປົກປ້ອງ ແມ່ນ ໃຫ້ປະຕິບັດຕາມ ຂໍ້ 1 ຂອງມາດຕານີ້.

3. ໃນກໍລະນີທີ່ມີສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຫຼື ສັນຍາ ທີ່ໄດ້ຮ່ວມເຊັນນຳກັນ ອາຍຸການປົກປ້ອງລິຂະສິດ ແມ່ນ ໃຫ້ປະຕິບັດຕາມສົນທິສັນຍາ ຫຼື ສັນຍານັ້ນ.

**ມາດຕາ 94. ອາຍຸການປົກປ້ອງ ສິດກ່ຽວຂ້ອງກັບລິຂະສິດ**

ໄລຍະຂອງການປົກປ້ອງ ສິດກ່ຽວຂ້ອງກັບລິຂະສິດ ມີ ດັ່ງນີ້:

1. ສຳລັບຜູ້ສະແດງ ອາຍຸການປົກປ້ອງ ແມ່ນ ຫ້າສິບປີ ນັບແຕ່ວັນໄດ້ມີການສະແດງ ເປັນຕົ້ນໄປ;
2. ສຳລັບຜູ້ຜະລິດການບັນທຶກສຽງ-ພາບ ອາຍຸການປົກປ້ອງແມ່ນ ຫ້າສິບປີ ນັບແຕ່ວັນ ໄດ້ເຜີຍແຜ່ການບັນທຶກສຽງ-ພາບ ເປັນຕົ້ນໄປ. ໃນກໍລະນີ ທີ່ໄດ້ມີການໂຄສະນາເຜີຍ ແຜ່ຜົນງານນັ້ນ ອາຍຸການປົກປ້ອງການ ບັນທຶກສຽງ-ພາບ ຈະມີອາຍຸ ຫ້າສິບປີ ນັບ ແຕ່ວັນໄດ້ມີການເຜີຍແຜ່ຜົນງານຄັ້ງທຳອິດ ເປັນຕົ້ນໄປ;
3. ສຳລັບອົງການກະຈາຍສຽງ-ພາບ ອາຍຸການປົກປ້ອງ ແມ່ນ ຫ້າສິບປີ ນັບແຕ່ວັນໄດ້ ກະຈາຍລາຍການ ເປັນຕົ້ນໄປ;
4. ໃນກໍລະນີມີສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ຫຼື ສັນຍາທີ່ໄດ້ຮ່ວມເຊັນນຳກັນ ອາຍຸການປົກປ້ອງສິດກ່ຽວຂ້ອງກັບລິຂະສິດ ແມ່ນ ໃຫ້ປະຕິບັດຕາມສົນທິສັນຍາ ຫຼື ສັນຍານັ້ນ.

## ໝວດທີ 7
## ຂໍ້ຈຳກັດ ແລະ ພັນທະ ຕໍ່ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 95. ຂໍ້ຈຳກັດ ຕໍ່ລິຂະສິດ ທີ່ມີການທົດແທນ**

ການນຳໃຊ້ຜົນງານທີ່ໄດ້ຖືກເຜີຍແຜ່ໂດຍບໍ່ຕ້ອງຂໍອະນຸຍາດ ແຕ່ຕ້ອງໄດ້ຈ່າຍຄ່າທົດແທນ ມີດັ່ງນີ້:

1. ການນຳໃຊ້ຜົນງານ ທີ່ໄດ້ຖືກເຜີຍແຜ່ໂດຍອົງການກະຈາຍສຽງ-ພາບ ເພື່ອເຮັດລາຍ ການກະຈາຍສຽງ-ພາບ ທີ່ມີການອຸປະຖຳ;
2. ຜູ້ທີ່ນຳໃຊ້ຜົນງານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຕ້ອງບອກຊື່ຂອງເຈົ້າ ຂອງຜົນງານ ແລະ ແຫຼ່ງທີ່ມາຂອງຜົນງານ, ບໍ່ສ້າງຜົນເສຍຫາຍຕໍ່ສິດຂອງຜູ້ເປັນ ເຈົ້າຂອງຜົນງານ ແລະ ບໍ່ໃຫ້ສ້າງຜົນເສຍຫາຍຕໍ່ສິດ ຜົນປະໂຫຍດປົກກະຕິຂອງ ເຈົ້າຂອງຜົນງານນັ້ນ;
3. ການນຳໃຊ້ຜົນງານທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຈະບໍ່ກວມເອົາຜົນງານ ການສ້າງຮູບເງົາ.

**ມາດຕາ 96. ຂໍ້ຈຳກັດ ຕໍ່ລິຂະສິດ ທີ່ບໍ່ມີການທົດແທນ**

ຂໍ້ຈຳກັດ ຕໍ່ລິຂະສິດ ທີ່ບໍ່ມີການທົດແທນ ມີດັ່ງນີ້:

1. ການນຳໃຊ້ຜົນງານ ທີ່ຖືກເຜີຍແຜ່ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງລິຂະສິດ ແລະ ບໍ່ຕ້ອງຈ່າຍຄ່າຕອບແທນ ຄື:
   1.1. ການຜະລິດຊ້ຳ ສຳເນົາໜຶ່ງອັນສຳລັບຕົນເອງ ເພື່ອຈຸດປະສົງການຄົ້ນຄວ້າທາງ ວິທະຍາສາດ ແລະ ການສິດສອນສ່ວນຕົວ;
   1.2. ການອ້າງອີງຜົນງານຢ່າງເໝາະສົມ ໂດຍບໍ່ໃຫ້ມີການດັດແປງເນື້ອໃນ ເພື່ອໄປປະກອບຄຳເຫັນ ຫຼື ເພື່ອໄປປະກອບໃຫ້ເຫັນພາບ ໃນຜົນງານອັນໃດໜຶ່ງຂອງຕົນເອງ;
   1.3. ການອ້າງອີງຈາກຜົນງານໃດໜຶ່ງ ໂດຍບໍ່ໃຫ້ມີ ການດັດແປງເນື້ອໃນ ເພື່ອນຳໄປຂຽນຂ່າວ, ວາລະສານ, ລາຍການວິທະຍຸ ແລະ ລາຍການໂທລະພາບ ແລະ ຮູບເງົາສາລະຄະດີ (ພິມເອກະສານ);
   1.4. ການອ້າງອີງຈາກຜົນງານໃດໜຶ່ງ ເພື່ອການສິດສອນໃນໂຮງຮຽນ ໂດຍບໍ່ມີຈຸດປະສົງທາງການຄ້າ ແລະ ບໍ່ໃຫ້ມີການດັດແປງເນື້ອໃນຂອງຜົນງານດັ່ງກ່າວ;
   1.5. ການອັດສຳເນົາຜົນງານ ເພື່ອເກັບມ້ຽນໃນຫ້ອງສະໝຸດ ເພື່ອຈຸດປະສົງໃນການຄົ້ນຄວ້າ;
   1.6. ການນຳເອົາຜົນງານໄປສະແດງລະຄອນ ແລະ ສະແດງສິລະປະໃນຮູບການອື່ນ ໃນງານບຸນຕ່າງໆ ຫຼື ໃນການປຸກລະດົມສົ່ງເສີມ ໂດຍປາສະຈາກການເກັບຄ່າໃດໆ;
   1.7. ການບັນທຶກ ແລະ ລາຍງານການສະແດງສົດ ເພື່ອຈຸດປະສົງນຳຂ່າວສານ ແລະ ການສຶກສາໃຫ້ແກ່ສາທາລະນະຊົນ;
   1.8. ການຖ່າຍຮູບ ຫຼື ຖ່າຍວີດີໂອ ຜົນງານວິຈິດສິນ, ວຽກງານການຖ່າຍພາບ ແລະ ສິລະປະປັບໃຊ້ ເພື່ອນຳສະເໜີໃຫ້ແກ່ສາທາລະນະຊົນ ຮູ້ຈັກ;
   1.9. ການແປຜົນງານໃຫ້ເປັນຕົວໜັງສືໂນນ ຫຼື ດ້ວຍຕົວໜັງສືອື່ນ ສຳລັບຄົນພິການທາງສາຍຕາ;
   1.10. ການນຳເຂົ້າ ສຳເນົາຜົນງານຂອງຜູ້ອື່ນເພື່ອນຳໃຊ້ສ່ວນຕົວ.
2. ຜູ້ທີ່ນຳໃຊ້ຜົນງານຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຕ້ອງບອກຊື່ຂອງເຈົ້າຂອງຜົນງານ ແລະ ແຫຼ່ງທີ່ມາຂອງຜົນງານ, ບໍ່ສ້າງຜົນເສຍຫາຍຕໍ່ສິດຂອງຜູ້ເປັນເຈົ້າຂອງຜົນງານ ແລະ ບໍ່ໃຫ້ສ້າງຜົນເສຍຫາຍຕໍ່ສິດ ຜົນປະໂຫຍດປົກກະຕິຂອງເຈົ້າຂອງຜົນງານນັ້ນ;
3. ການນຳໃຊ້ຜົນງານໃດໜຶ່ງ ທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຈະບໍ່ກວມເອົາຜົນງານທາງດ້ານສະຖາປະນິກ, ຜົນງານທາງດ້ານວິຈິດສິນ ຫຼື ໂປຣແກຼມຄອມພິວເຕີ.

**ມາດຕາ 97. ຂໍ້ຈຳກັດ ຕໍ່ສິດກ່ຽວຂ້ອງກັບລິຂະສິດ ທີ່ມີການທົດແທນ**

ຂໍ້ຈຳກັດ ຕໍ່ສິດກ່ຽວຂ້ອງກັບລິຂະສິດ ທີ່ມີການທົດແທນ ມີ ດັ່ງນີ້:

1. ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ສິດກ່ຽວຂ້ອງກັບລິຂະສິດຂອງຜູ້ອື່ນ ໂດຍບໍ່ຕ້ອງຂໍອະນຸຍາດ ແຕ່ຕ້ອງໄດ້ຈ່າຍຄ່າທົດແທນ ຕາມທີ່ໄດ້ຕົກລົງກັນກັບເຈົ້າຂອງຜົນງານ, ເຈົ້າຂອງລິຂະສິດ, ຜູ້ສະແດງ, ຜູ້ຜະລິດ ການບັນທຶກສຽງ-ພາບ ແລະ ອົງການກະຈາຍສຽງ-ພາບ ໃນກໍລະນີດັ່ງນີ້:
   1.1. ນຳໃຊ້ ການບັນທຶກສຽງ-ພາບ ທີ່ຖືກເຜີຍແຜ່ ໂດຍທາງກົງ ຫຼື ທາງອ້ອມ ເພື່ອຈຸດປະສົງທາງການຄ້າ ແນໃສ່ເພື່ອດຳເນີນລາຍການກະຈາຍສຽງ-ພາບ ທີ່ມີການ ອຸປະຖຳ;
   1.2. ນຳໃຊ້ການບັນທຶກສຽງ-ພາບທີ່ຖືກເຜີຍແຜ່ ໃນການເຄື່ອນໄຫວທຸລະກິດ ແລະການຄ້າ.
2. ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ສິດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດາຕານີ້ ຕ້ອງບໍ່ສ້າງຜົນເສຍຫາຍຕໍ່ສິດຂອງຜູ້ສະແດງ, ຜູ້ຜະລິດ ການບັນທຶກສຽງ-ພາບ ແລະ ອົງການກະຈາຍສຽງ-ພາບ ແລະ ຕ້ອງບໍ່ສ້າງຜົນເສຍຫາຍຕໍ່ສິດ ຜົນປະໂຫຍດປົກກະຕິຂອງການສະແດງ, ການບັນທຶກສຽງ-ພາບ, ລາຍການກະຈາຍສຽງ- ພາບ.

**ມາດຕາ 98. ຂໍ້ຈຳກັດ ຕໍ່ສິດກ່ຽວຂ້ອງກັບລິຂະສິດ ທີ່ບໍ່ມີການທົດແທນ**

ຂໍ້ຈຳກັດ ຕໍ່ສິດກ່ຽວຂ້ອງກັບລິຂະສິດ ທີ່ບໍ່ມີການທົດແທນ ມີດັ່ງນີ້:

1. ການນຳໃຊ້ສິດກ່ຽວຂ້ອງກັບລິຂະສິດ ທີ່ບໍ່ຈຳເປັນຕ້ອງຂໍອະນຸຍາດ ແລະ ບໍ່ຕ້ອງຈ່າຍຄ່າທົດແທນ ຄື:
   1.1. ການອັດສຳເນົາຊໍ້າ ຜົນງານໃດໜຶ່ງ ເພື່ອຈຸດປະສົງໃນການຄົ້ນຄວ້າ ທາງວິທະຍາສາດ;
   1.2. ການອັດສຳເນົາຊໍ້າ ຜົນງານໃດໜຶ່ງ ເພື່ອຈຸດປະສົງໃນການສິດສອນ;
   1.3. ການອ້າງອີງ ຢ່າງເໝາະສົມ ເພື່ອຈຸດປະສົງໃນການສະໜອງຂໍ້ມູນເທົ່ານັ້ນ;
   1.4. ການທຳການບັນທຶກສຽງ-ພາບ ແບບຊົ່ວຄາວ ເມື່ອໄດ້ຮັບອະນຸຍາດຈາກເຈົ້າຂອງສິດ.
2. ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ສິດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ຂອງມາດຕານີ້ ຕ້ອງບໍ່ສ້າງຜົນເສຍຫາຍຕໍ່ສິດຂອງຜູ້ສະແດງ, ຜູ້ຜະລິດ ການບັນທຶກສຽງ-ພາບ ແລະ ອົງການກະຈາຍສຽງ-ພາບ ແລະ ຕ້ອງບໍ່ສ້າງຜົນເສຍຫາຍຕໍ່ສິດ ຜົນປະໂຫຍດປົກກະຕິຂອງການສະແດງ, ການບັນທຶກສຽງ-ພາບ, ລາຍການກະຈາຍສຽງ-ພາບ.

**ມາດຕາ 99. ພັນທະ ຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ພັນທະ ຂອງເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແມ່ນ ປະຕິບັດຕາມມາດຕາ 58 ຂອງກົດໝາຍສະບັບນີ້.

## ພາກທີ VI
## ຂໍ້ຫ້າມສຳລັບຊັບສິນທາງປັນຍາ

## ໝວດທີ 1
## ຂໍ້ຫ້າມສຳລັບຊັບສິນອຸດສາຫະກຳ

**ມາດຕາ 100. ຂໍ້ຫ້າມ ສຳລັບເຈົ້າຂອງຊັບສິນອຸດສາຫະກຳ ແລະ ຜູ້ທີ່ໄດ້ຮັບສິດນຳໃຊ້**

1. ເຈົ້າຂອງຊັບສິນອຸດສາຫະກຳ ບໍ່ມີສິດຫ້າມຜູ້ອື່ນນຳໃຊ້ ຫຼື ດຳເນີນການ ດັ່ງນີ້:
   1.1. ນຳໃຊ້ການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກຳ ຫຼື ແບບຜັງວົງຈອນລວມ ເພື່ອການນຳໃຊ້ສ່ວນຕົວ ຫຼື ນຳໃຊ້ເຂົ້າໃນການສຶກສາ, ຄົ້ນຄວ້າ ຫຼື ທົດລອງ ແລະ ອື່ນໆ ທີ່ບໍ່ມີຈຸດປະສົງໃນທາງການຄ້າ;
   1.2. ຈໍລະຈອນ, ແຈກຢາຍ, ນຳເຂົ້າ, ຫາຜົນປະໂຫຍດ ຈາກການນຳໃຊ້ຜະລິດຕະພັນ ທີ່ໄດ້ຈາກຊັບສິນອຸດສາຫະກຳ ຊຶ່ງນຳອອກສູ່ຕະຫຼາດ ທັງພາຍໃນ ແລະ ຕ່າງປະເທດ ຢ່າງຖືກຕ້ອງ;
   1.3. ນຳໃຊ້ການປະດິດສ້າງ, ສິ່ງປະດິດ ຫຼື ແບບອຸດສາຫະກຳ ທີ່ຢູ່ໃນພາຫະນະ, ລວມທັງ ການນຳໃຊ້ອຸປະກອນ ແລະ ເຄື່ອງອາໄຫລ່ ເຂົ້າໃນການສ້ອມແປງ, ບຳລຸງຮັກສາພາຫະນະ ຂອງຕ່າງປະເທດ ທີ່ຜ່ານດິນແດນ, ນ່ານຟ້າ ແລະ ນ່ານນ້ຳ ຊົ່ວຄາວ ຫຼື ກໍລະນີສຸກເສີນ ຢູ່ດິນແດນຂອງ ສປປ ລາວ;
   1.4. ນຳໃຊ້ການປະດິດສ້າງ ຫຼື ສິ່ງປະດິດ ຕໍ່ບຸກຄົນທີ່ໄດ້ຮັບອະນຸຍາດ ຈາກລັດຖະບານ ຂອງ ສປປ ລາວ;
   1.5. ນຳໃຊ້ແບບຜັງວົງຈອນລວມ ທີ່ບຸກຄົນນຳໃຊ້ນັ້ນ ບໍ່ຮູ້ຈັກມາກ່ອນວ່າ ແບບຜັງວົງຈອນດັ່ງກ່າວໄດ້ຖືກປົກປ້ອງມາແລ້ວ;
   1.6. ນຳໃຊ້ເຄື່ອງໝາຍການຄ້າ ທີ່ຄືກັນ ຫຼື ຄ້າຍຄືກັນ ກັບແຫຼ່ງກຳເນີດ ທີ່ເຄື່ອງໝາຍການຄ້າ ໄດ້ຮັບການປົກປ້ອງກ່ອນວັນຍື່ນຄຳຮ້ອງຂໍຈົດທະບຽນແຫຼ່ງກຳເນີດ;
   1.7. ນຳໃຊ້ຢ່າງສຸດຈະລິດ ກ່ຽວກັບ ຊື່ຄົນ, ສັນຍາລັກຂອງແຕ່ລະປະເພດ, ປະລິມານ, ຄຸນນະພາບ, ວິທີການນຳໃຊ້, ການປະເມີນ, ແຫຼ່ງທີ່ມາ ແລະ ຄຸນລັກສະນະອື່ນໆ ຂອງສິນຄ້າ ແລະ ການບໍລິການ.
2. ເຈົ້າຂອງຄວາມລັບທາງການຄ້າ ບໍ່ມີສິດຫ້າມຜູ້ອື່ນດຳເນີນການໃດໜຶ່ງ ດັ່ງນີ້:
   ເປີດເຜີຍ ຫຼື ນຳໃຊ້ຄວາມລັບທາງການຄ້າທີ່ໄດ້ມາ ໂດຍທີ່ບໍ່ຮູ້ຈັກມາກ່ອນວ່າ ຄວາມລັບທາງການຄ້ານັ້ນ ໄດ້ມາໂດຍບຸກຄົນອື່ນຢ່າງບໍ່ຖືກຕ້ອງຕາມກົດໝາຍ;
   ເປີດເຜີຍຂໍ້ມູນລັບ ເພື່ອຈຸດປະສົງປົກປ້ອງສາທາລະນະຊົນ;
   ນຳໃຊ້ຂໍ້ມູນລັບ ກ່ຽວກັບຜະລິດຕະພັນການຢາ ແລະ ເຄມີກະສິກຳ ທີ່ບໍ່ມີຈຸດປະສົງໃນທາງການຄ້າ;

ເປີດເຜີຍ ຫຼື ນຳໃຊ້ຄວາມລັບທາງການຄ້າ ທີ່ມີລັກສະນະຄ້າຍຄືກັນ ຊຶ່ງບຸກຄົນອື່ນ ໄດ້ເຮັດຂຶ້ນມາ;

ເປີດເຜີຍ ຫຼື ນຳໃຊ້ຄວາມລັບທາງການຄ້າ ທີ່ໄດ້ມາຈາກການວິເຄາະ, ການປະເມີນຜະລິດຕະພັນ ທີ່ໄດ້ມີການຈຳໜ່າຍ ຢ່າງຖືກຕ້ອງຕາມກົດໝາຍ.

**ມາດຕາ 101. ຂໍ້ຫ້າມ ສຳລັບບຸກຄົນ ຫຼື ການຈັດຕັ້ງອື່ນ**

ບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ບໍ່ແມ່ນເຈົ້າຂອງຊັບສິນອຸດສາຫະກຳ ຫ້າມດຳເນີນການໂດຍບໍ່ໄດ້ ຮັບອະນຸຍາດຈາກເຈົ້າຂອງຊັບສິນອຸດສາຫະກຳ ດັ່ງນີ້:

1. ທຳການຜະລິດ ຈາກຊັບສິນອຸດສາຫະກຳ ທີ່ໄດ້ຖືກປົກປ້ອງ;
2. ນຳໃຊ້ກຳມະວິທີການຜະລິດ ຈາກຊັບສິນອຸດສາຫະກຳ ທີ່ໄດ້ຖືກປົກປ້ອງ;
3. ຈຳໜ່າຍ ຫຼື ໂຄສະນາ, ສະເໜີຂາຍ, ຂາຍ, ເກັບມ້ຽນເພື່ອຈຳໜ່າຍ, ນຳເຂົ້າ, ສົ່ງອອກຜະລິດຕະພັນ ທີ່ໄດ້ຈາກຊັບສິນອຸດສາຫະກຳ ຊຶ່ງໄດ້ຖືກປົກປ້ອງ;
4. ໂອນ, ອະນຸຍາດໃຫ້ນຳໃຊ້, ໃຫ້ເຊົ່າ ຊັບສິນອຸດສາຫະກຳ ທີ່ໄດ້ຖືກປົກປ້ອງ.

## ໝວດທີ 2
## ຂໍ້ຫ້າມສຳລັບພັນພືດໃໝ່

**ມາດຕາ 102. ຂໍ້ຫ້າມ ສຳລັບເຈົ້າຂອງພັນພືດໃໝ່ ແລະ ຜູ້ທີ່ໄດ້ຮັບສິດນຳໃຊ້**

ເຈົ້າຂອງພັນພືດໃໝ່ ບໍ່ມີສິດຫ້າມຜູ້ອື່ນນຳໃຊ້ພັນພືດໃໝ່ເພື່ອຈຸດປະສົງ ດັ່ງນີ້:

1. ໃນວຽກງານສ່ວນຕົວ ຊຶ່ງບໍ່ກ່ຽວຂ້ອງກັບການຄ້າ;
2. ໃນການທົດລອງ ແລະ ການຄົ້ນຄວ້າ;
3. ໃນການປັບປຸງພັນ ເພື່ອໃຫ້ເກີດພັນພືດອື່ນ.

ສຳລັບຜູ້ທີ່ໄດ້ຮັບສິດນຳໃຊ້ ກໍມີຂໍ້ຫ້າມຕາມທີ່ໄດ້ກ່າວມາເທິງນີ້ເຊັ່ນດຽວກັນ.

**ມາດຕາ 103. ຂໍ້ຫ້າມ ສຳລັບບຸກຄົນ ຫຼື ການຈັດຕັ້ງອື່ນ**

ບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ບໍ່ແມ່ນເຈົ້າຂອງພັນພືດໃໝ່ ຫ້າມດຳເນີນການໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງພັນພືດໃໝ່ ດັ່ງນີ້:

1. ທຳການຜະລິດ ຫຼື ການຂະຫຍາຍພັນ ຂອງພັນພືດໃໝ່ທີ່ໄດ້ຖືກປົກປ້ອງ ເພື່ອຈຸດປະສົງໃນທາງການຄ້າ;
2. ນຳໃຊ້ກຳມະວິທີ ໃນການຂະຫຍາຍພັນ ເພື່ອຈຸດປະສົງໃນທາງການຄ້າ;
3. ສະເໜີຂາຍ, ຂາຍ ແລະ ເຮັດການຕະຫຼາດ ພັນພືດໃໝ່ທີ່ໄດ້ຖືກປົກປ້ອງ;
4. ສົ່ງອອກ ຫຼື ນຳເຂົ້າ ພັນພືດໃໝ່ທີ່ໄດ້ຖືກປົກປ້ອງ;
5. ເກັບມ້ຽນເພື່ອຈຸດປະສົງທີ່ໄດ້ກ່າວມາໃນຂໍ້ 1, ຂໍ້ 2, ຂໍ້ 3, ຂໍ້ 4 ຂອງມາດຕານີ້.

# ໝວດທີ 3
# ຂໍ້ຫ້າມສຳລັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ

**ມາດຕາ 104. ຂໍ້ຫ້າມສຳລັບເຈົ້າຂອງ ລິຂະສິດ**

ເຈົ້າຂອງລິຂະສິດ ບໍ່ມີສິດຫ້າມຜູ້ອື່ນນຳໃຊ້ຜົນງານຂອງຕົນ ດັ່ງນີ້:

1. ຜະລິດຊ້ຳ ເພື່ອຈຸດປະສົງໃນການຄົ້ນຄວ້າທາງວິທະຍາສາດ ແລະ ການສິດສອນ;
2. ອ້າງອີງ ເພື່ອໄປປະກອບຄຳເຫັນ ຫຼື ເພື່ອໄປປະກອບໃຫ້ເຫັນພາບ ໃນຜົນງານອັນໃດໜຶ່ງ ໂດຍບໍ່ໄດ້ມີ ການດັດແປງເນື້ອໃນ ຂອງຜົນງານດັ່ງກ່າວ;
3. ອ້າງອີງ ເພື່ອນຳໄປຂຽນຂ່າວ, ວາລະສານ, ລາຍການວິທະຍຸ ແລະ ລາຍການໂທລະພາບ ແລະ ຮູບເງົາສາລະຄະດີ (ຟິມເອກະສານ) ໂດຍບໍ່ໄດ້ມີ ການດັດແປງເນື້ອໃນ ຂອງຜົນງານດັ່ງກ່າວ;
4. ອ້າງອີງ ເພື່ອການສິດສອນໃນໂຮງຮຽນ ຊຶ່ງບໍ່ມີຈຸດປະສົງໃນທາງການຄ້າ ໂດຍບໍ່ມີການດັດແປງເນື້ອໃນ ຂອງຜົນງານດັ່ງກ່າວ;
5. ອັດສຳເນົາ ເພື່ອເກັບມ້ຽນໃນຫ້ອງສະມຸດ ເພື່ອຈຸດປະສົງໃນການຄົ້ນຄວ້າ;
6. ນຳເອົາມາສະແດງລະຄອນ ຫຼື ຮູບແບບການສະແດງສິລະປະອື່ນໆ ໃນງານບຸນຕ່າງໆ ຫຼື ໃນການປຸກລະດົມສົ່ງເສີມ ໂດຍປາສະຈາກການເກັບຄ່າໃດໆ;
7. ບັນທຶກ ແລະ ລາຍງານ ການສະແດງສົດ ເພື່ອຈຸດປະສົງ ນຳຂ່າວສານ ແລະ ການສຶກສາ ໃຫ້ແກ່ສາທາລະນະຊົນ;
8. ຖ່າຍຮູບ ຫຼື ຖ່າຍວິດີໂອ ເອົາຜົນງານວິຈິດສິນ, ຜົນງານການຖ່າຍຮູບ ແລະ ຜົນງານສິລະປະປັບໃຊ້ ເພື່ອນຳສະເໜີໃຫ້ແກ່ສາທາລະນະຊົນ ໄດ້ຮູ້ຈັກ;
9. ເຮັດເປັນຕົວໜັງສືໂບນ ຫຼື ຕົວໜັງສືຮູບແບບອື່ນ ສຳລັບຜູ້ພິການທາງສາຍຕາ;
10. ນຳເຂົ້າສຳເນົາເພື່ອນຳໃຊ້ສ່ວນຕົວ.

ສຳລັບຜູ້ທີ່ໄດ້ຮັບສິດນຳໃຊ້ ກໍມີຂໍ້ຫ້າມຕາມທີ່ໄດ້ກ່າວມາເທິງນີ້ເຊັ່ນດຽວກັນ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ສິດຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ບໍ່ໃຫ້ສ້າງຜົນເສຍຫາຍຕໍ່ເຈົ້າຂອງລິຂະສິດ.

**ມາດຕາ 105. ຂໍ້ຫ້າມສຳລັບເຈົ້າຂອງ ສິດກ່ຽວຂ້ອງກັບລິຂະສິດ**

ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ ບໍ່ມີສິດຫ້າມຜູ້ອື່ນນຳໃຊ້ຜົນງານຂອງຕົນ ດັ່ງນີ້:

1. ອັດສຳເນົາ ເພື່ອຈຸດປະສົງ ການຄົ້ນຄວ້າທາງວິທະຍາສາດ ແລະ ການສິດສອນ;
2. ອ້າງອີງ ເພື່ອຈຸດປະສົງໃນການສະໜອງຂໍ້ມູນເທົ່ານັ້ນ;
3. ທຳການບັນທຶກສຽງ-ພາບ ແບບຊົ່ວຄາວ ເມື່ອໄດ້ຮັບອະນຸຍາດ ຈາກເຈົ້າຂອງສິດ.

ສຳລັບຜູ້ທີ່ໄດ້ຮັບສິດນຳໃຊ້ ກໍມີຂໍ້ຫ້າມຕາມທີ່ໄດ້ກ່າວມາເທິງນີ້ເຊັ່ນດຽວກັນ.

ບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ສິດຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້ ບໍ່ໃຫ້ສ້າງຜົນເສຍຫາຍຕໍ່ເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ.

**ມາດຕາ 106. ຂໍ້ຫ້າມສໍາລັບບຸກຄົນ ຫຼື ການຈັດຕັ້ງອື່ນ**

ບຸກຄົນ ຫຼື ການຈັດຕັ້ງອື່ນ ທີ່ບໍ່ແມ່ນເຈົ້າຂອງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຫ້າມດໍາເນີນການໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງສິດ ດັ່ງນີ້:

1. ນໍາເອົາຜົນງານທາງດ້ານ ສິລະປະກໍາ, ວັນນະກໍາ ແລະ ວິທະຍາສາດ ຂອງຄົນອື່ນ ມາໃຊ້;
2. ແອບອ້າງໃສ່ຊື່ຕົນເອງວ່າ ເປັນຜູ້ປະດິດຄິດແຕ່ງຜົນງານ;
3. ພິມເຜີຍແຜ່ ຜົນງານໃດໜຶ່ງທີ່ບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງ;
4. ພິມເຜີຍແຜ່ຜົນງານຂອງຜູ້ຮ່ວມປະດິດຄິດແຕ່ງ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຮ່ວມປະດິດຄິດແຕ່ງຄົນອື່ນ;
5. ດັດແປງ, ເພີ່ມເຕີມ ຫຼື ຕັດອອກບາງສ່ວນ ຂອງຜົນງານໃດໜຶ່ງ ບໍ່ວ່າດ້ວຍວິທີການໃດກໍຕາມ ທີ່ສ້າງຜົນເສຍຫາຍ ຕໍ່ກຽດ ແລະ ຊື່ສຽງ ຂອງຜູ້ປະດິດຄິດແຕ່ງ;
6. ອັດສໍາເນົາຜົນງານ ຈາກຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ;
7. ສ້າງຜົນງານທີ່ສືບເນື່ອງ ຈາກຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ຍົກເວັ້ນ ຮູບແບບການນໍາໃຊ້ ທີ່ໄດ້ກໍານົດໄວ້ໃນມາດຕາ 104 ຂໍ້ 9 ຂອງກົດໝາຍສະບັບນີ້;
8. ຫາຜົນປະໂຫຍດຈາກຜົນງານໃດໜຶ່ງ ຈາກເຈົ້າຂອງລິຂະສິດ;
9. ໃຫ້ເຊົ່າຜົນງານ;
10. ອັດສໍາເນົາ, ຜະລິດ, ໂຄສະນາເຜີຍແຜ່, ສະແດງ ຫຼື ສື່ສານ ຜົນງານ ຕໍ່ສາທາລະນະຊົນ ດ້ວຍເຄືອຂ່າຍການກະຈາຍສຽງ-ພາບ ຫຼື ດ້ວຍອຸປະກອນເຕັກນິກທີ່ທັນສະໄໝ;
11. ເຜີຍແຜ່ ຜົນງານໃດໜຶ່ງ ຂອງເຈົ້າຂອງລິຂະສິດ;
12. ຍົກເລີກ ຫຼື ເຮັດໃຫ້ວິທີການເຕັກນິກ ທີ່ເຈົ້າຂອງລິຂະສິດ ໄດ້ນໍາໃຊ້ໃນການປົກປ້ອງຜົນງານ ລິຂະສິດນັ້ນ ໃຊ້ການບໍ່ໄດ້ ໂດຍເຈດຕະນາ;
13. ລຶບ ຫຼື ດັດແກ້ ຂໍ້ມູນທາງດ້ານເອເລັກໂຕຣນິກ ໃນການຄຸ້ມຄອງລິຂະສິດ ຂອງຜົນງານນັ້ນ ໂດຍເຈດຕະນາ;
14. ຜະລິດ, ລວບລວມ, ປ່ຽນແປງ, ຈໍາໜ່າຍ, ນໍາເຂົ້າ, ສົ່ງອອກ, ຂາຍ ຫຼື ໃຫ້ເຊົ່າສິ້ນສ່ວນໃດໜຶ່ງຂອງອຸປະກອນ ເພື່ອໃຊ້ທໍາລາຍການປ້ອງກັນທາງດ້ານເຕັກນິກ ທີ່ເຈົ້າຂອງລິຂະສິດໄດ້ເຮັດຂຶ້ນ ມາເພື່ອປົກປ້ອງຜົນງານຂອງຕົນ ທັງໆທີ່ຮູ້ ຫຼື ຄວນຈະຮູ້ວ່າອຸປະກອນນັ້ນ ແມ່ນນໍາໃຊ້ເພື່ອເຮັດໃຫ້ການປ້ອງກັນນັ້ນ ໃຊ້ການບໍ່ໄດ້;
15. ປອມແປງຜົນງານ ດ້ວຍການປອມແປງຊື່ ຫຼື ລາຍເຊັນ ຂອງຜູ້ປະດິດຄິດແຕ່ງ ແລະ ຂາຍຜົນງານທີ່ປອມແປງນັ້ນ;
16. ສົ່ງອອກ-ນໍາເຂົ້າ, ໂຄສະນາ, ສໍາເນົາ ຜົນງານ;
17. ແອບອ້າງຊື່ຂອງຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ-ພາບ, ອົງການກະຈາຍສຽງ-ພາບ;
18. ພິມເຜີຍແຜ່, ຜະລິດ ຫຼື ສື່ສານ ການສະແດງ, ບັນທຶກສຽງ-ພາບ, ກະຈາຍສຽງ-ພາບ ຕໍ່ສາທາລະນະຊົນ;

19. ດັດແປງ, ເພີ່ມເຕີມ ຫຼື ຕັດອອກບາງສ່ວນ ຂອງການສະແດງ ບໍ່ວ່າດ້ວຍວິທີການໃດກໍຕາມ ທີ່ສ້າງຜົນເສຍຫາຍຕໍ່ກຽດ ແລະ ຊື່ສຽງ ຂອງຜູ້ສະແດງ;
20. ຜະລິດຊໍ້າ, ຕັດຕໍ່ ບັນທຶກການສະແດງ, ການບັນທຶກສຽງ-ພາບ, ການກະຈາຍສຽງ-ພາບ;
21. ປ່ຽນແປງ ສິດກ່ຽວກັບການຄຸ້ມຄອງຂໍ້ມູນ ໃນຮູບແບບເອເລັກໂຕຣນິກ;
22. ຍົກເລີກ ຫຼື ເຮັດໃຫ້ວິທີການເຕັກນິກ ທີ່ເຈົ້າຂອງນໍາໃຊ້ໃນການປົກປ້ອງສິດກ່ຽວຂ້ອງກັບລິຂະສິດນັ້ນ ໃຊ້ການບໍ່ໄດ້ ໂດຍເຈດຕະນາ;
23. ຈໍາໜ່າຍ, ນໍາເຂົ້າເພື່ອຈໍາໜ່າຍ, ກະຈາຍສຽງ-ພາບ, ສື່ສານ, ບັນທຶກສໍາເນົາສຽງ-ພາບ ຜົນງານການສະແດງ ຕໍ່ສາທາລະນະຊົນ ທັງໆທີ່ຮູ້ ຫຼື ຄວນຈະຮູ້ວ່າຜົນງານດັ່ງກ່າວນັ້ນ ຖືກດັດແປງ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ;
24. ຜະລິດ, ລວບລວມ, ປ່ຽນແປງ, ຈໍາໜ່າຍ, ນໍາເຂົ້າ, ສົ່ງອອກ, ຂາຍ ຫຼື ໃຫ້ເຊົ່າສິ້ນສ່ວນໃດໜຶ່ງຂອງອຸປະກອນ ທັງໆທີ່ຮູ້ ຫຼື ຄວນຈະຮູ້ວ່າ ສິ້ນສ່ວນອຸປະກອນນັ້ນ ໄດ້ຖືກນໍາໃຊ້ໃນທາງທີ່ບໍ່ຖືກຕ້ອງ ເພື່ອຖອດລະຫັດລາຍການສົ່ງຜ່ານຄື້ນສັນຍານດາວທຽມທີ່ເຂົ້າລະຫັດ;
25. ບັນທຶກ ຫຼື ເຜີຍແຜ່ໃນທາງການຄ້າ ລາຍການທີ່ສົ່ງຜ່ານຄື້ນສັນຍານດາວທຽມ ທີ່ເຂົ້າລະຫັດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ຈໍາໜ່າຍທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 107. ຂໍ້ຫ້າມ ສໍາລັບພະນັກງານທີ່ຮັບຜິດຊອບວຽກງານຊັບສິນທາງປັນຍາ**

ພະນັກງານທີ່ຮັບຜິດຊອບວຽກງານຊັບສິນທາງປັນຍາ ບໍ່ໃຫ້ມີການກະທໍາ ດັ່ງນີ້:

1. ການຂາດຄວາມຮັບຜິດຊອບ ແລະ ປະລະໜ້າທີ່;
2. ການປະຕິບັດໜ້າທີ່ ໂດຍບໍ່ມີຄວາມຍຸຕິທໍາ ຫຼື ລໍາອຽງຕໍ່ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;
3. ການເປີດເຜີຍຂໍ້ມູນ ກ່ຽວກັບຊັບສິນທາງປັນຍາໂດຍບໍ່ໄດ້ຮັບອະນຸຍາດ;
4. ການສວຍໃຊ້ຕໍາແໜ່ງ, ໜ້າທີ່, ສິດອໍານາດ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
5. ການກະທໍາອື່ນ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ.

## ພາກທີ VII
## ການລະເມີດຊັບສິນທາງປັນຍາ ແລະ ການແຂ່ງຂັນທີ່ບໍ່ມີຄວາມຍຸຕິທໍາ

**ມາດຕາ 108. ການລະເມີດສິດ ກ່ຽວກັບຊັບສິນອຸດສາຫະກໍາ**

ການລະເມີດສິດ ກ່ຽວກັບ ສິດທິບັດ, ອະນຸສິດທິບັດ, ແບບອຸດສາຫະກໍາ ແລະ ແບບຜັງວົງຈອນລວມ ມີ ດັ່ງນີ້:

1. ການນຳໃຊ້ ການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກຳ, ແບບຜັງວົງຈອນລວມ ທີ່ຖືກປົກປ້ອງ ແລະ ຍັງຢູ່ໃນໄລຍະອາຍຸການປົກປ້ອງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງສິດ;
2. ການນຳໃຊ້ ການປະດິດສ້າງ, ສິ່ງປະດິດ, ແບບອຸດສາຫະກຳ ແລະ ແບບຜັງວົງຈອນລວມ ໂດຍບໍ່ໄດ້ຈ່າຍຄ່າທົດແທນ ໃຫ້ແກ່ເຈົ້າຂອງສິດ.

ການລະເມີດສິດ ກ່ຽວກັບເຄື່ອງໝາຍທາງການຄ້າ ມີ ດັ່ງນີ້:
1. ການນຳໃຊ້ສັນຍາລັກ ທີ່ຄືກັນກັບເຄື່ອງໝາຍ ທີ່ໃຊ້ກັບສິນຄ້າ ຫຼື ການບໍລິການ ທີ່ໄດ້ປົກປ້ອງແລ້ວ;
2. ການນຳໃຊ້ສັນຍາລັກ ທີ່ຄືກັນ ຫຼື ຄ້າຍຄືກັນກັບເຄື່ອງໝາຍ ທີ່ໃຊ້ກັບສິນຄ້າ ຫຼື ການບໍລິການ ທີ່ໄດ້ປົກປ້ອງແລ້ວ ຊຶ່ງພາໃຫ້ຜູ້ຊົມໃຊ້ເຂົ້າໃຈຜິດ ກ່ຽວກັບສິນຄ້າ ຫຼື ການບໍລິການທີ່ແທ້ຈິງ;
3. ການນຳໃຊ້ສັນຍາລັກ ທີ່ຄືກັນ ຫຼື ຄ້າຍຄືກັນ ກັບເຄື່ອງໝາຍທີ່ມີຊື່ສຽງ ສຳລັບສິນຄ້າ ຫຼື ການບໍລິການ;
4. ການນຳໃຊ້ສັນຍາລັກໃນຮູບແບບຂອງການແປ ຫຼື ການຂຽນດ້ວຍພາສາອື່ນ ໂດຍຮັກສາສຳນຽງເດີມ ຂອງເຄື່ອງໝາຍທີ່ມີຊື່ສຽງ ສຳລັບສິນຄ້າ ຫຼື ການບໍລິການ.

ການລະເມີດສິດ ກ່ຽວກັບແຫຼ່ງກຳເນີດ ມີ ດັ່ງນີ້:
1. ການນຳໃຊ້ແຫຼ່ງກຳເນີດ ທີ່ຖືກປົກປ້ອງ ໂດຍບໍ່ສອດຄ່ອງກັບລະບຽບການ ກ່ຽວກັບແຫຼ່ງກຳເນີດ;
2. ການນຳໃຊ້ແຫຼ່ງກຳເນີດ ຕໍ່ຜະລິດຕະພັນ ທີ່ຄ້າຍຄືກັນກັບຜະລິດຕະພັນ ຊຶ່ງແຫຼ່ງກຳເນີດຖືກປົກປ້ອງແລ້ວ ເພື່ອຈຸດປະສົງໃນການສວຍໃຊ້ຊື່ສຽງ ແລະ ຄວາມນິຍົມ ຂອງແຫຼ່ງກຳເນີດນັ້ນ;
3. ການນຳໃຊ້ສັນຍາລັກ ທີ່ຄືກັນ ຫຼື ຄ້າຍຄືກັນກັບແຫຼ່ງກຳເນີດທີ່ຖືກປົກປ້ອງ ສຳລັບຜະລິດຕະພັນທີ່ບໍ່ໄດ້ມາຈາກສະຖານທີ່ ທີ່ເປັນແຫຼ່ງກຳເນີດນັ້ນ ຊຶ່ງເຮັດໃຫ້ຜູ້ຊົມໃຊ້ເຂົ້າໃຈຜິດ.

**ມາດຕາ 109. ການລະເມີດສິດກ່ຽວກັບພັນພືດໃໝ່**

ການລະເມີດສິດ ກ່ຽວກັບພັນພືດໃໝ່ ມີ ດັ່ງນີ້:
1. ການນຳໃຊ້ພັນພືດໃໝ່ ທີ່ຖືກປົກປ້ອງ ຊຶ່ງຍັງຢູ່ໃນໄລຍະອາຍຸການປົກປ້ອງ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດ;
2. ການນຳໃຊ້ພັນພືດໃໝ່ ໂດຍບໍ່ໄດ້ຈ່າຍຄ່າຕອບແທນ ໃຫ້ແກ່ເຈົ້າຂອງສິດ;
3. ການນຳໃຊ້ ຊື່ພັນພືດ ທີ່ຄືກັນ ຫຼື ຄ້າຍຄືກັນ ກັບ ຊື່ພັນພືດໃໝ່ ຊຶ່ງຢູ່ໃນກຸ່ມພືດຊະນິດດຽວກັນ ທີ່ໄດ້ຖືກປົກປ້ອງແລ້ວ.

**ມາດຕາ 110. ການລະເມີດລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ**

ການລະເມີດ ລິຂະສິດ ມີ ດັ່ງນີ້:

1. ການນຳເອົາຜົນງານທາງດ້ານສິລະປະກຳ, ວັນນະກຳ ຫຼື ວິທະຍາສາດ ຂອງຜູ້ອື່ນ ມາໃຊ້ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງສິດ;
2. ການແອບອ້າງໃສ່ຊື່ຕົນເອງວ່າ ເປັນຜູ້ປະດິດຄິດແຕ່ງຜົນງານຂອງຜູ້ອື່ນ;
3. ການພິມເຜີຍແຜ່ ຜົນງານໃດໜຶ່ງ ທີ່ບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດ;
4. ການພິມເຜີຍແຜ່ຜົນງານຂອງຜູ້ຮ່ວມປະດິດຄິດແຕ່ງ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຮ່ວມປະດິດຄິດແຕ່ງຄົນອື່ນ;
5. ການດັດແປງ, ເພີ່ມເຕີມ ຫຼື ຕັດອອກບາງສ່ວນ ຂອງຜົນງານໃດໜຶ່ງ ບໍ່ວ່າດ້ວຍວິທີການໃດກໍຕາມ ທີ່ສ້າງຄວາມເສຍຫາຍຕໍ່ກຽດ ແລະ ຊື່ສຽງຂອງຜູ້ປະດິດຄິດແຕ່ງ;
6. ການອັດສຳເນົາຜົນງານ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ;
7. ການສ້າງຜົນງານສືບເນື່ອງ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ປະດິດຄິດແຕ່ງ ຫຼື ເຈົ້າຂອງລິຂະສິດ ໃນການນຳໃຊ້ຜົນງານສືບເນື່ອງນັ້ນ;
8. ການຫາຜົນປະໂຫຍດຈາກຜົນງານໃດໜຶ່ງ ໂດຍບໍ່ໄດ້ຂໍອະນຸຍາດຈາກເຈົ້າຂອງລິຂະສິດໂດຍບໍ່ໄດ້ຈ່າຍຄ່າທົດແທນ ຫຼື ໃຫ້ຜົນປະໂຫຍດທາງດ້ານວັດຖຸອື່ນໆ;
9. ການໃຫ້ເຊົ່າຕໍ່ຜົນງານ ໂດຍບໍ່ໄດ້ຈ່າຍຄ່າທົດແທນ ຫຼື ໃຫ້ຜົນປະໂຫຍດໃຫ້ເຈົ້າຂອງ ຜົນງານ ຫຼື ເຈົ້າຂອງລິຂະສິດ;
10. ການອັດສຳເນົາ, ຜະລິດ, ໂຄສະນາເຜີຍແຜ່, ສະແດງ ຫຼື ສື່ສານ ຜົນງານຕໍ່ສາທາລະນະຊົນດ້ວຍເຄືອຂ່າຍການກະຈາຍສຽງ-ພາບ ຫຼື ດ້ວຍອຸປະກອນເຕັກນິກທີ່ທັນສະໄໝ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງລິຂະສິດ;
11. ການເຜີຍແຜ່ ຜົນງານໃດໜຶ່ງ ໂດຍບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງລິຂະສິດ;
12. ການຍົກເລີກ ຫຼື ທຳໃຫ້ວິທີການເຕັກນິກ ທີ່ເຈົ້າຂອງລິຂະສິດ ນຳໃຊ້ໃນການປົກປ້ອງຜົນງານລິຂະສິດນັ້ນ ໃຊ້ການບໍ່ໄດ້ ໂດຍເຈດຕະນາ;
13. ການລຶບ ຫຼື ແກ້ໄຂ ຂໍ້ມູນທາງດ້ານເອເລັກໂຕຣນິກ ໃນການຄຸ້ມຄອງລິຂະສິດ ຂອງຜົນງານນັ້ນ ໂດຍເຈດຕະນາ;
14. ການຜະລິດ, ລວບລວມ, ປ່ຽນແປງ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂາຍ ຫຼື ໃຫ້ເຊົ່າ ສິ້ນສ່ວນໃດໜຶ່ງ ຂອງອຸປະກອນ ທັງໆທີ່ຮູ້ ຫຼື ຄວນຈະຮູ້ວ່າ ອຸປະກອນນັ້ນ ໄດ້ຖືກນຳໃຊ້ເພື່ອເຮັດໃຫ້ວິທີການປ້ອງກັນ ທາງດ້ານເຕັກນິກໃຊ້ການບໍ່ໄດ້ ທີ່ເຈົ້າຂອງລິຂະສິດ ໄດ້ເຮັດຂຶ້ນມາເພື່ອປົກປ້ອງຜົນງານຂອງຕົນ;
15. ການເຮັດ ແລະ ຂາຍຜົນງານທີ່ບໍ່ຖືກຕ້ອງ ໂດຍປອມແປງລາຍເຊັນຂອງຜູ້ປະດິດຄິດແຕ່ງ;
16. ການສົ່ງອອກ-ນຳເຂົ້າ, ໂຄສະນາ, ສຳເນົາ ຂອງຜົນງານ ທີ່ບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ.

ການລະເມີດ ສິດກ່ຽວຂ້ອງກັບລິຂະສິດ ມີ ດັ່ງນີ້:

1. ການແອບອ້າງຊື່ຂອງຜູ້ສະແດງ, ຜູ້ຜະລິດ ການບັນທຶກສຽງ-ພາບ, ອົງການກະຈາຍສຽງ-ພາບ;
2. ການພິມເຜີຍແຜ່, ຜະລິດ ແລະ ສື່ສານ ການສະແດງ, ບັນທຶກສຽງ-ພາບ, ກະຈາຍສຽງ-ພາບ ຕໍ່ສາທາລະນະຊົນ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ-ພາບ, ອົງການກະຈາຍສຽງ-ພາບ;
3. ການດັດແປງ, ເພີ່ມເຕີມ ຫຼື ຕັດອອກບາງສ່ວນ ຂອງການສະແດງ ບໍ່ວ່າດ້ວຍວິທີການໃດກໍຕາມ ທີ່ສ້າງຄວາມເສຍຫາຍ ຕໍ່ກຽດ ແລະ ຊື່ສຽງຂອງຜູ້ສະແດງ;
4. ການຜະລິດຊ້ຳ, ຕັດຕໍ່ບັນທຶກການສະແດງ, ການບັນທຶກສຽງ-ພາບ, ການກະຈາຍສຽງ-ພາບ ທີ່ບໍ່ໄດ້ຮັບອະນຸຍາດຈາກຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ-ພາບ, ອົງການກະຈາຍສຽງ-ພາບ;
5. ການປ່ຽນແປງ ສິດກ່ຽວກັບການຄຸ້ມຄອງຂໍ້ມູນ ໃນຮູບແບບເອເລັກໂຕຣນິກ ທີ່ບໍ່ໄດ້ຮັບອະນຸຍາດ ຈາກເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ;
6. ການຍົກເລີກ ຫຼື ເຮັດໃຫ້ວິທີການເຕັກນິກ ທີ່ເຈົ້າຂອງນຳໃຊ້ໃນການປົກປ້ອງສິດກ່ຽວຂ້ອງກັບລິຂະສິດນັ້ນ ໃຊ້ການບໍ່ໄດ້ໂດຍເຈດຕະນາ;
7. ການຈຳໜ່າຍ, ນຳເຂົ້າເພື່ອຈຳໜ່າຍ, ກະຈາຍສຽງ-ພາບ, ສື່ສານ, ບັນທຶກສຳເນົາສຽງ-ພາບ ຂອງການສະແດງ ຕໍ່ສາທາລະນະຊົນ ທັງໆທີ່ຮູ້ ຫຼື ຄວນຈະຮູ້ວ່າ ບົດບັນທຶການການສະແດງນັ້ນ ໄດ້ຖືກປ່ຽນແປງ ໂດຍທີ່ບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດກ່ຽວຂ້ອງກັບລິຂະສິດ;
8. ການຜະລິດ, ລວບລວມ, ປ່ຽນແປງ, ຈຳໜ່າຍ, ນຳເຂົ້າ, ສົ່ງອອກ, ຂາຍ ຫຼື ໃຫ້ເຊົ່າສິ້ນສ່ວນໃດໜຶ່ງ ຂອງອຸປະກອນ ທັງໆທີ່ຮູ້ ຫຼື ຄວນຈະຮູ້ວ່າ ສິ້ນສ່ວນອຸປະກອນນັ້ນໄດ້ຖືກນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ເພື່ອຖອດລະຫັດລາຍການສົ່ງຜ່ານສັນຍານດາວທຽມທີ່ເຂົ້າລະຫັດ;
9. ການບັນທຶກ ຫຼື ເຜີຍແຜ່ໃນທາງການຄ້າ ລາຍການທີ່ສົ່ງຜ່ານສັນຍານດາວທຽມທີ່ເຂົ້າລະຫັດ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ຈຳໜ່າຍທີ່ຖືກຕ້ອງຕາມກົດໝາຍ ໂດຍເຈດຕະນາ.

**ມາດຕາ 111. ການແຂ່ງຂັນ ທີ່ບໍ່ມີຄວາມຍຸຕິທຳ**

ທຸກການແຂ່ງຂັນ ທາງດ້ານອຸດສາຫະກຳ ຫຼື ການຄ້າ ທີ່ບໍ່ສຸດຈະລິດ ແມ່ນ ຜິດກົດໝາຍ ແລະ ຖືວ່າ ແມ່ນການແຂ່ງຂັນທີ່ບໍ່ມີຄວາມຍຸຕິທຳ.

ການແຂ່ງຂັນທີ່ບໍ່ມີຄວາມຍຸຕິທຳ ແມ່ນ ການກະທຳຕໍ່ຜູ້ອື່ນ ດັ່ງນີ້:

1. ສ້າງຄວາມສັບສົນ ທີ່ພົວພັນເຖິງຜະລິດຕະພັນ ແລະ ການບໍລິການ ກ່ຽວກັບເຄື່ອງໝາຍການຄ້າ, ຊື່ການຄ້າ ຫຼື ຊື່ການບໍລິການ ແລະ ແບບອຸດສາຫະກຳ;

2. ທຳລາຍຊື່ສຽງ ແລະ ຄວາມໜ້າເຊື່ອຖື ກ່ຽວກັບ ເຄື່ອງໝາຍການຄ້າ, ຊື່ການຄ້າ ຫຼື ຊື່ການບໍລິການ ແລະ ແບບອຸດສາຫະກຳ;
3. ເຮັດໃຫ້ສາທາລະນະຊົນ ເຂົ້າໃຈຜິດ ກ່ຽວກັບ ຂະບວນການຜະລິດ, ຄວາມເປັນຈິງ ເພື່ອຈຸດປະສົງທາງດ້ານ ຄຸນນະພາບ, ປະລິມານ, ຄຸນລັກສະນະອື່ນ, ແຫຼ່ງທີ່ມາ, ເງື່ອນໄຂໃນການຕອບສະໜອງ ແລະ ລາຄາຂອງຜະລິດຕະພັນ ຫຼື ການບໍລິການ;
4. ສ້າງຄວາມເຊື່ອມເສຍ ກ່ຽວກັບຂະບວນການຜະລິດ, ຄວາມເປັນຈິງ ເພື່ອຈຸດປະສົງທາງດ້ານ ຄຸນນະພາບ, ປະລິມານ, ຄຸນລັກສະນະອື່ນ, ເງື່ອນໄຂໃນການຕອບສະໜອງ ແລະ ລາຄາຂອງຜະລິດຕະພັນ ຫຼື ການບໍລິການ;
5. ເປີດເຜີຍຄວາມລັບທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງສິດ ກ່ຽວກັບການໄດ້ມາ, ການນຳໃຊ້ຄວາມລັບທາງການຄ້າ ຈາກການສືບຄວາມລັບທາງດ້ານອຸດສາຫະກຳ ຫຼື ການຄ້າ ແລະ ເປີດເຜີຍການຍົກເລີກສັນຍາ, ການຂາດຄວາມເຊື່ອຖື ຫຼື ການໄດ້ຄວາມລັບມາໂດຍບຸກຄົນທີສາມ.

## ພາກທີ VIII
## ການແກ້ໄຂຂໍ້ຂັດແຍ່ງ ແລະ ການແກ້ໄຂການລະເມີດ

### ມາດຕາ 112. ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຊັບສິນທາງປັນຍາ ທີ່ພົວພັນເຖິງການລະເມີດສິດ ຂອງເຈົ້າຂອງຊັບສິນທາງປັນຍາ ໃຫ້ດຳເນີນດ້ວຍ ຮູບການ ທາງດ້ານບໍລິຫານ ແລະ ສານ.

ການແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການ ທາງດ້ານບໍລິຫານ ແລະ ສານ ໃຫ້ປະຕິບັດຕາມ ມາດຕາ 115 ແລະ ມາດຕາ 117 ຂອງກົດໝາຍສະບັບນີ້.

### ມາດຕາ 113. ຮູບການແກ້ໄຂການລະເມີດ

ການແກ້ໄຂການລະເມີດ ກ່ຽວກັບຊັບສິນທາງປັນຍາ ສາມາດດຳເນີນດ້ວຍຮູບການ ດັ່ງນີ້:
1. ການເຈລະຈາລະຫວ່າງເຈົ້າຂອງສິດ ກັບ ຜູ້ລະເມີດ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂ ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຂຶ້ນສານເພື່ອຕັດສິນ;
5. ການແກ້ໄຂຂໍ້ຂັດແຍ່ງສາກົນ.

### ມາດຕາ 114. ການເຈລະຈາ

ເຈົ້າຂອງຊັບສິນທາງປັນຍາ ສາມາດເຈລະຈາກັບຜູ້ລະເມີດ ເມື່ອເຫັນວ່າມີການລະເມີດສິດ ຂອງຕົນ.

**ມາດຕາ 115. ການແກ້ໄຂ ທາງດ້ານບໍລິຫານ**

ເຈົ້າຂອງຊັບສິນທາງປັນຍາ ສາມາດສະເໜີ ຕໍ່ອົງການຄຸ້ມຄອງຊັບສິນທາງປັນຍາ ເພື່ອແກ້ໄຂການລະເມີດ ຊັບສິນທາງປັນຍາ ຂອງຕົນ.

**ມາດຕາ 116. ການແກ້ໄຂ ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ເມື່ອບໍ່ສາມາດແກ້ໄຂທາງດ້ານບໍລິຫານ ໂດຍອົງການຄຸ້ມຄອງຊັບສິນທາງປັນຍາແລ້ວ ເຈົ້າຂອງຊັບສິນທາງປັນຍາ ສາມາດສະເໜີຕໍ່ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອທຳການໄກ່ເກ່ຍ ແລະ ຕັດສິນ.

**ມາດຕາ 117. ການຮ້ອງຟ້ອງຂຶ້ນສານ**

ຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ ທີ່ບໍ່ສາມາດແກ້ໄຂ ທາງດ້ານບໍລິຫານ ຫລື ແກ້ໄຂ ໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້ ເຈົ້າຂອງຊັບສິນທາງປັນຍາ ກໍສາມາດຮ້ອງຟ້ອງຂຶ້ນສານເພື່ອຕັດສິນ.

**ມາດຕາ 118. ການແກ້ໄຂຂໍ້ຂັດແຍ່ງສາກົນ**

ຂໍ້ຂັດແຍ່ງ ກ່ຽວກັບຊັບສິນທາງປັນຍາ ທີ່ມີລັກສະນະສາກົນ ໃຫ້ແກ້ໄຂຕາມສົນທິສັນຍາ ແລະ ລະບຽບການສາກົນ ທີ່ກ່ຽວຂ້ອງ.

## ພາກທີ IX
## ການຄຸ້ມຄອງ ແລະ ກວດກາ

### ໝວດທີ 1
### ການຄຸ້ມຄອງ

**ມາດຕາ 119. ອົງການຄຸ້ມຄອງວຽກງານຊັບສິນທາງປັນຍາ**

ລັດຖະບານ ຄຸ້ມຄອງວຽກງານຊັບສິນທາງປັນຍາ ຢ່າງລວມສູນ ແລະ ເປັນເອກະພາບ ໃນທົ່ວປະເທດ ໂດຍມອບໃຫ້ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ເປັນໃຈກາງໃນການປະສານສົມທົບ ກັບຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການ ອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ຖະແຫຼງຂ່າວ ແລະ ວັດທະນະທຳ, ສຶກສາ, ສາທາລະນະສຸກ, ການເງິນ ແລະ ຂະແໜງການອື່ນ.

ຂະແໜງການ ແລະພາກສ່ວນອື່ນ ມີສິດ ແລະ ໜ້າທີ່ຄຸ້ມຄອງວຽກງານຊັບສິນທາງປັນຍາ ຕາມພາລະບົດບາດຂອງຕົນ.

ອົງການຄຸ້ມຄອງວຽກງານຊັບສິນທາງປັນຍາ ປະກອບດ້ວຍ:

1. ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ;

2. ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ.

ໃນກໍລະນີທີ່ມີຄວາມຈໍາເປັນ ຈະສ້າງຕັ້ງຫ້ອງການວິທະຍາສາດ ແລະ ເຕັກໂນໂລຊີ ເມືອງ, ເທດສະບານ ກໍໄດ້

**ມາດຕາ 120. ສິດ ແລະ ໜ້າທີ່ ຂອງອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ**

ໃນການຄຸ້ມຄອງວຽກງານຊັບສິນທາງປັນຍາ ອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ແຜນການ ກ່ຽວກັບການພັດທະນາວຽກງານຊັບສິນທາງປັນຍາ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ;
2. ອອກລະບຽບການ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຊັບສິນທາງປັນຍາ;
3. ໂຄສະນາ ເຜີຍແຜ່ ແລະ ສ້າງຈິດສໍານຶກໃຫ້ແກ່ສັງຄົມ ກ່ຽວກັບວຽກງານຊັບສິນທາງປັນຍາ;
4. ຊີ້ນໍາ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ໃນຂອບເຂດທົ່ວປະເທດ ຕາມພາລະບົດບາດຂອງຕົນ;
5. ຈົດທະບຽນ ແລະ ໃຫ້ການບໍລິການ ວຽກງານຊັບສິນທາງປັນຍາ;
6. ອອກ ຫຼື ລົບລ້າງໃບຢັ້ງຢືນ ກ່ຽວກັບ ການຈົດທະບຽນຊັບສິນທາງປັນຍາ ແລະ ອອກໃບອະນຸຍາດ ຫຼື ຖອນໃບອະນຸຍາດ ຂອງບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ດໍາເນີນການບໍລິການ ທາງດ້ານຊັບສິນທາງປັນຍາ;
7. ແກ້ໄຂຄໍາສະເໜີ, ຂໍ້ຂັດແຍ່ງ ແລະ ການລະເມີດສິດ ກ່ຽວກັບຊັບສິນທາງປັນຍາ;
8. ກໍ່ສ້າງ ແລະ ຍົກລະດັບ ພະນັກງານ ທັງພາກລັດ ແລະເອກະຊົນ ໃນຂົງເຂດວຽກງານຊັບສິນທາງປັນຍາ;
9. ປະສານສົມທົບ ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຂັ້ນຕ່າງໆ ເພື່ອຈັດຕັ້ງ ຄຸ້ມຄອງວຽກງານຊັບສິນທາງປັນຍາ;
10. ພົວພັນ ແລະ ຮ່ວມມືກັບສາກົນ ໃນຂົງເຂດວຽກງານຊັບສິນທາງປັນຍາ;
11. ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນ ລະບຽບກົດໝາຍ.

**ມາດຕາ 121. ສິດ ແລະ ໜ້າທີ່ ຂອງພະແນກວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານຊັບສິນທາງປັນຍາ ພະແນກ ວິທະຍາສາດ ແລະ ເຕັກໂນໂລຊີ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ແຜນການ ກ່ຽວກັບການພັດທະນາວຽກງານຊັບສິນທາງປັນຍາ ຂອງອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ ມາເປັນລະບຽບການ ແລະ ແຜນການຂອງຕົນ ແລ້ວຈັດຕັ້ງປະຕິບັດ;
2. ໂຄສະນາ ເຜີຍແຜ່ ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ແຜນການ ກ່ຽວກັບການພັດທະນາວຽກງານຊັບສິນທາງປັນຍາ ຂອງອົງການວິທະຍາສາດ ແລະ ເຕັກໂນໂລຊີ ແຫ່ງຊາດ, ລະບຽບການ ແລະ ແຜນການຂອງຕົນ ແລະ ສ້າງຈິດສຳນຶກໃຫ້ແກ່ສັງຄົມ ກ່ຽວກັບວຽກງານຊັບສິນທາງປັນຍາ;
3. ແກ້ໄຂ ຄຳສະເໜີ, ຂໍ້ຂັດແຍ່ງ ແລະ ການລະເມີດສິດ ກ່ຽວກັບຊັບສິນທາງປັນຍາ;
4. ປະສານສົມທົບກັບບັນດາພະແນກການຕ່າງໆ ທີ່ກ່ຽວຂ້ອງຂອງ ແຂວງ, ນະຄອນ ໃນການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ;
5. ລາຍງານການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ຕໍ່ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ແລະ ອົງການປົກຄອງ ແຂວງ, ນະຄອນ ຢ່າງເປັນປົກກະຕິ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບກົດໝາຍ.

## ໝວດທີ 2
## ການກວດກາ

### ມາດຕາ 122. ອົງການກວດກາວຽກງານຊັບສິນທາງປັນຍາ

ອົງການກວດກາວຽກງານຊັບສິນທາງປັນຍາ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຊັບສິນທາງປັນຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 119 ຂອງກົດໝາຍສະບັບນີ້.
2. ອົງການກວດກາພາຍນອກ ຊຶ່ງມີ:
   - ອົງການກວດກາລັດ;
   - ອົງການກວດສອບແຫ່ງລັດ.

### ມາດຕາ 123. ສິດ ແລະ ໜ້າທີ່ຂອງອົງການກວດກາ

ອົງການກວດກາພາຍໃນ ແລະ ພາຍນອກ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດວຽກງານຊັບສິນທາງປັນຍາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

### ມາດຕາ 124. ການກວດກາດ້ານຊັບສິນທາງປັນຍາຕາມດ່ານຊາຍແດນ

ເພື່ອສະກັດກັ້ນການລະເມີດຊັບສິນທາງປັນຍາ ເຈົ້າໜ້າທີ່ພາສີ ແລະ ເຈົ້າໜ້າທີ່ອື່ນ ທີ່ກ່ຽວຂ້ອງປະຈຳດ່ານຊາຍແດນ ມີສິດ ແລະ ໜ້າທີ່ ກວດກາສິນຄ້າ ທີ່ນຳເຂົ້າ ແລະ ສົ່ງອອກ, ຢຶດ ແລະ ກັກສິນຄ້າ ທີ່ລະເມີດຊັບສິນທາງປັນຍາ ຕາມລະບຽບກົດໝາຍ.

**ມາດຕາ 125. ຮູບການການກວດກາວຽກງານຊັບສິນທາງປັນຍາ**

ການກວດກາວຽກງານຊັບສິນທາງປັນຍາ ດຳເນີນດ້ວຍສາມຮູບການ ດັ່ງນີ້:

1. ການກວດກາ ຕາມແຜນການປົກກະຕິ;
2. ການກວດກາ ນອກແຜນການ ໂດຍແຈ້ງໃຫ້ຊາບລ່ວງໜ້າ;
3. ການກວດກາ ແບບກະທັນຫັນ.

ການກວດກາ ຕາມແຜນການປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາ ນອກແຜນການໂດຍແຈ້ງໃຫ້ຊາບລວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ.

**ມາດຕາ 126. ການກວດກາ ຂອງອົງການອື່ນ**

ອົງການອື່ນ ມີສິດ ແລະ ໜ້າທີ່ ກວດກາວຽກງານຊັບສິນທາງປັນຍາ ຕາມພາລະບົດບາດຂອງຕົນ ຊຶ່ງໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 127. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ ເປັນຕົ້ນ ໃນການຄຸ້ມຄອງ ແລະ ປົກປ້ອງ ຊັບສິນທາງປັນຍາ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 128. ນະໂຍບາຍຕໍ່ຜູ້ປະດິດສ້າງ ຫຼື ຜູ້ປະດິດຄິດແຕ່ງ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານໃນການ ປະດິດສ້າງ ຫຼື ປະດິດຄິດແຕ່ງ ຈະໄດ້ຮັບການຍ້ອງຍໍ, ລາງວັນ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 129. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍວ່າດ້ວຍຊັບສິນທາງປັນຍາ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ກໍລະນີ ເບົາ ຫຼື ໜັກ.

**ມາດຕາ 130. ມາດຕະການສຶກສາອົບຮົມ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບວຽກງານຊັບສິນທາງປັນຍາ ເປັນຄັ້ງທຳອິດໂດຍບໍ່ເຈດຕະນາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າຕ່ຳກວ່າ ຫ້າແສນກີບ ຈະຖືກຕັກເຕືອນ, ສຶກສາອົບຮົມ.

**ມາດຕາ 131. ມາດຕະການທາງວິໄນ**

ພະນັກງານ ແລະ ເຈົ້າໜ້າທີ່ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບຊັບສິນທາງປັນຍາ ແລະ ຂໍ້ຫ້າມທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍ ທີ່ມີມູນຄ່າຕ່ຳກວ່າ ຫ້າແສນກີບ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດ ກໍຈະຖືກປະຕິບັດວິໄນ ຕາມແຕ່ລະກໍລະນີດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ຕາມລະບຽບລັດຖະກອນ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດ ຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 132. ມາດຕະການປັບໃໝ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດລະບຽບກົດໝາຍ ກ່ຽວກັບຊັບສິນທາງປັນຍາ ໂດຍເຈດຕະນາ ຫຼື ລະເມີດໂດຍບໍ່ເຈດຕະນາເປັນຄັ້ງທີສອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ.

**ມາດຕາ 133. ມາດຕະການທາງແພ່ງ**

ບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຜູ້ອື່ນ ຈະໄດ້ໃຊ້ແທນຄ່າເສຍຫາຍ ຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 134. ມາດຕະການທາງອາຍາ**

ບຸກຄົນ ທີ່ລະເມີດສິດທາງດ້ານຊັບສິນທາງປັນຍາ, ປອມແປງ, ຕົວະຍົວະ, ຫລອກລວງ, ແຂ່ງຂັນທີ່ບໍ່ມີຄວາມຍຸຕິທຳ ກ່ຽວກັບຊັບສິນທາງປັນຍາ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ.

ໃນກໍລະນີທີ່ມີການກະທຳອື່ນ ຊຶ່ງເປັນການກະທຳຜິດທາງອາຍາ ກໍຈະຖືກລົງໂທດ ຕາມກົດໝາຍອາຍາ.

**ມາດຕາ 135. ມາດຕະການໂທດເພີ່ມ**

ນອກຈາກໂທດຕົ້ນຕໍ ທີ່ໄດ້ກຳນົດໄວ້ໃນ ມາດຕາ 130, 131, 132, 133 ແລະ 134 ຂອງກົດໝາຍສະບັບນີ້ ຜູ້ກະທຳຜິດອາດຈະໄດ້ຮັບໂທດເພີ່ມ ເຊັ່ນ: ໂຈະ, ຖອນໃບອະນຸຍາດດຳເນີນກິດຈະການ, ຮິບສິນຄ້າ, ຊັບສິນ ແລະ ພາຫະນະອຸປະກອນ ທີ່ພົວພັນກັບການກະທຳຜິດ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 136. ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 137. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ